# ຮີດຄອງ ປະເພນີບູຮານ



ຮີບໂຮມໂດຍ : ມະຫາບຸນເລີດ ທຳມະຈັກ
ມະຫາແກ້ວ ສີງວົງສາ

# ຮີດຄອງປະເພນີບູຮານ


ຮຽບຮຽງໂດຍ

ມະຫາບຸນເລີດ ທຳມະຈັກ

ມະຫາແກ້ວ ສິງວົງສາ



ຈັດພິມໂດຍ

ໂຄງການປົກປັກຮັກສາໜັງສືໃບລານລາວ

ການຮ່ວມມື ລາວ-ເຢຍຣະມັນ

# ຮີດຄອງປະເພນີບູຮານ

ຮີບໂຮມໂດຍ
ມະຫາບຸນເລີດ ທຳມະຈັກ
ມະຫາແກ້ວ ສິງວົງສາ
© ສະຫງວນລິຂະສິດ

ອອກແບບໜ້າປົກ : ຄຳມັກ ວົງສັກດາ
ຄອມພິວເຕີ : ຄຳມັກ ວົງສັກດາ

ຈັດພິມໂດຍ

ໂຄງການປົກປັກຮັກສາໜັງສືໃບລານລາວ

ການຮ່ວມມື ລາວ-ເຢຍຣະມັນ

ພິມທີ່ ໂຮງພິມສຶກສາ
ຕາມ ທບ ກຊ /ພທປ ໐໙໐໙໗

ພິມເທື່ອທີໜຶ່ງ ໑໙໙໗
ຈຳນວນ ໔.໐໐໐ ຫົວ
ຈັດພິມເພື່ອແຈກຢາຍ

# ຄໍາເຫັນຂອງກົມພິມຈໍາຫນ່າຍ

ຂ້າພະເຈົ້າໄດ້ອ່ານເບິ່ງ ປຶ້ມຄູ່ມື "ຮີດຄອງປະເພນີບູຮານ" ຂອງທ່ານ ມະຫາແກ້ວ ສິງວົງສາ ແລະ ມະຫາບຸນເລີດ ທໍາມະຈັກ ໄດ້ເກັບກໍາທ້ອນໂຮມ ນໍາລົງພິມເປັນການແຈກຢາຍ ໃຫ້ເປັນວິທະຍາທານແກ່ຊາວພຸດທະບໍລິສັດຜູ້ທີ່ມີຈິດໃຈມັກໄຄ່ ສ້າງບຸນກະທໍາທານ ໄດ້ນໍາໄປໃຊ້ເປັນແນວທາງປະຕິບັດ ເຫັນວ່າມີປະໂຫຍດແກ່ ວັດທະນະທໍາສັງຄົມລາວ. ຍ້ອນວ່າ ຜ່ານມາ ແນວຄິດ ແລະ ພູມປັນຍາຂອງຄົນບູຮານໄດ້ສະສົມຮີດຄອງປະເພນີອັນດີງາມໄວ້ຫລາຍແງ່ ຫລາຍສາຂາ ສິ່ງເຫລົ່ານີ້ ມີຢູ່ຕາມວັດວາສາສະຫນາ ແລະ ຂຽນໄວ້ໃນລານກ້ອມ ເພື່ອເປັນຄູ່ມືໃນການນໍາໃຊ້ສະດວກຂອງຄົນບູຮານ ລວມທັງຄູບາອາຈານ ຜູ້ຊົງຄຸນວຸດທິເຄີຍປະຕິບັດມາແລ້ວ.

ການພິມຄືນ ຫລືທ້ອນໂຮມເອົາເລື່ອງ ຮີດຄອງປະເພນີ ມາພິມເປັນອັກສອນລາວໃຫມ່ ໃຫ້ທຸກຄົນອ່ານໄດ້ ແລະ ນໍາໃຊ້ໃຫ້ເກີດປະໂຫຍດແກ່ສັງຄົມ ນັບວ່າເປັນແນວຄິດທີ່ດີ ແລະ ມີນໍ້າໃຈເອື້ອເຟື້ອເພື່ອແຜ່ຂອງທ່ານທັງສອງ ທີ່ໄດ້ກ່າວນາມມານັ້ນ.

ກົມພິມຈຳໜ່າຍ ຫໍສະໝຸດ ແລະ ປ້າຍ ກໍຄື ໃນນາມສ່ວນຕົວເຫັນວ່າ ປື້ມຄູ່ມືຮີດຄອງປະເພນີເຫລັ້ມນີ້ ຄວນໄດ້ຮັບການສະໜັບສະໜູນແລະເຜີຍແຜ່ໃຫ້ແກ່ທ້ອງຖິ່ນ ກໍຄືຊາວພຸດທະບໍລິສັດທົ່ວສັງຄົມໄດ້ນຳໃຊ້ ແລະ ເອົາເປັນແບບຢ່າງໃນການຈັດພິທີກຳ ທຳລາບາສີສູ່ຂວັນ ໃຫ້ເປັນຮີດຄອງປະເພນີສືບທອດ ຮີດຄອງວັດທະນະທຳສັງຄົມ ໃຫ້ແກ່ປະເທດຊາດ ກໍຄືສັງຄົມລາວຂອງເຮົາ ເຊິ່ງມີຮີດຄອງປະເພນີອັນດີງາມມາແຕ່ດຶກກຳບັນ.

ຫວັງວ່າ ໃນໂອກາດຕໍ່ໄປ ຈະໄດ້ເຫັນຜົນງານການຄົ້ນຄວ້າ ແລະ ພິມເຜີຍແຜ່ປື້ມທີ່ມີປະໂຫຍດໃຫ້ແກ່ສັງຄົມຄືແນວນີ້ອີກ.

ຂ້າພະເຈົ້າ ຂໍເປັນກຳລັງໃຈໃຫ້ແກ່ ຜົນສຳເລັດໃນການຄົ້ນຄວ້ານີ້ ແລະ ຫວັງວ່າ ຈະໄດ້ເຫັນຜົນງານໃນການຄົ້ນຄິດ ແລະ ລິດຈະນາເອົາພູມປັນຍາຂອງຄົນບູຮານອອກມາຮັບໃຊ້ໃຫ້ແກ່ປະເທດຊາດ ກໍຄືຊີວິດສັງຄົມ ໃນສະໄໝປັດຈຸບັນໄດ້ຟື້ນຟູຄືນ ແລະ ສືບຕໍ່ຮັກສາເອກະລັກທາງດ້ານວັດທະນະທຳຂອງຊາດສືບຕໍ່ຊົ່ວລູກ ຊົ່ວຫລານ ໄປອີກຍາວນານ.

ວຽງຈັນ, ວັນທີ 1 ກັນຍາ 1997

ຫົວໜ້າກົມພິມຈຳໜ່າຍ ຫໍສະໝຸດ ແລະ ປ້າຍ

ທີ່ປຶກສາ ໂຄງການປົກປັກຮັກສາໜັງສືໃບລານລາວ

**ຄຳເສັງ ສຸບດາຣາ**

# ບົດນຳໃນການພິມ

ປຶ້ມຄູ່ມື "ຮີດຄອງປະເພນີບູຮານ" ທີ່ທ່ານກຳລັງອ່ານຢູ່ນີ້ ເກີດຂຶ້ນຈາກແນວຄິດ ແລະ ການຄົ້ນຄວ້າຂອງ ທ່ານມະຫາແກ້ວ ສິງວົງສາ ຄູສອນໂຮງຮຽນສ້າງຄູສົງວັດອົງຕື້ໃນເມື່ອກ່ອນ. ຜູ້ກ່ຽວມີຈຸດປະສົງຈະພິມເພື່ອຊອກຫາກ້ອນທຶນມາບູລະນະສ້ອມແປງໂຮງຮຽນ ສ່ວນໜຶ່ງ. ອີກສ່ວນໜຶ່ງ ກໍເພື່ອເປັນວິທະຍາທານ ແຈກຢາຍໃຫ້ສາສະນິກະຊົນຜູ້ຝັກໃຝ່ໃນບຸນກຸສົນ ແລະ ຮັກສາວັດທະນະທຳ ຮີດຄອງປະເພນີຂອງລາວເຮົາ.

ແຕ່ຍ້ອນຂາດທຶນຮອນໃນການພິມເປັນຈຳນວນຫລາຍ ຕົກມາຮອດປີ 1994 ທ່ານມະຫາແກ້ວ ຈຶ່ງໄດ້ມອບສະບັບຂຽນໃຫ້ແກ່ ໂຄງການປົກປັກຮັກສາໜັງສືໃບລານລາວ ໂດຍຜ່ານຂ້າພະເຈົ້າ, ຂ້າພະເຈົ້າໄດ້ກວດກາ ຈັດບົດ ແລະ ແບ່ງພາກ ອອກເປັນສອງພາກ :

**ພາກທີໜຶ່ງ :** "ຄຳກວາຍທານຕ່າງໆ" ເພື່ອເປັນແບບຢ່າງໃຫ້ແກ່ຜູ້ທີ່ຮັບຜິດຊອບກັບວຽກວັດການທານ ກໍຄືເຖົ້າແກ່ຜູ້ນຳພາທຳບຸນສົນກິນທານ ໄດ້ເອົາໄປນຳພາຊາວບ້ານພຸດທະບໍລິສັດ ຜູ້ຕ້ອງການສ້າງບຸນ ສ້າງກຸສົນ ໃນບ້ານເມືອງຂອງຕົນ.

**ພາກທີສອງ :** "ຮີດຄອງບູຮານ ການທຳລູ່ສູ່ຂວັນ ຫລືຄູບລາບາສີ" ເຊິ່ງຂ້າພະເຈົ້າເຫັນວ່າ ແມ່ນຮີດຄອງວັດທະນະທຳສັງຄົມ ທີ່ທົ່ວທຸກພາກທຸກເຂດຂອງປະເທດລາວເຮົາ ຍັງປະພຶດປະຕິບັດກັນມາ, ເວົ້າໄດ້ວ່າ ໃນຊີວິດຂອງຄົນເຮົາ ຈະມີການມັດແຂນ ເອີ້ນຂວັນກັນ ໃນພິທີຕ່າງໆ ເຊັ່ນ : ມື້ອອກກຳ (ຄຳເດືອນ) ມື້ເອົາຜົວເອົາເມຍ ແລະ ອື່ນໆ ຈົນຮອດເຖົ້າຮອດແກ່ ບາງເທື່ອການເຮັດບຸນ (ແຈກເຂົ້າ) ອຸທິດສ່ວນກຸສົນໃນງານຊາປະນະກິດ (ເຜົາສົບ) ແລ້ວ, ເຖົ້າແກ່ກໍຈະມີພິທີສູ່ຂວັນ ຜູກແຂນ ເພື່ອໃຫ້ຄອບຄົວມີຄວາມປັກກຸ່ມຊຸ່ມເຢັນ ຫາຍເຄາະ ຫາຍເຂັນ ມີກຳລັງໃຈສືບຕໍ່ກໍ່ສ້າງເຮືອນຊານ ລ້ຽງລູກລ້ຽງຫລານ ສືບຕໍ່ໄປອີກ.

ເຫັນວ່າ ປຶ້ມຄູ່ມືກວາຍທານ ແລະ ຄູບລາບາສີສູ່ຂວັນເຫລັ້ມນີ້ ອາດບໍ່ສົມບູນ ຫລືເປັນຄຳອວຍພອນທີ່ທຳມະດາທົ່ວໄປ ແຕ່ກໍຄົງເປັນປະໂຫຍດໃຫ້ແກ່ສັງຄົມ ກໍຄືຊາວພຸດທະບໍລິສັດທັງຫລາຍ ໄດ້ນຳໃຊ້ໄປກ່ອນ. ກ້າຫາກທ່ານຜູ້ອ່ານເຫັນວ່າເປັນປະໂຫຍດ ແລະ ຈະມີຄຳແນະນຳໃດໆ ເພີ່ມຕື່ມ ຂ້າພະເຈົ້າຍິນດີນ້ອມຮັບເອົາຄຳແນະນຳຕຳໜິສິ່ງຂ່າວເຫລົ່ານັ້ນ ມາເປັນເຄື່ອງປະທັດດັດແປງໃຫ້ເນື້ອໃນອຸດົມຮັ່ງມີຂຶ້ນກວ່າເກົ່າ.

ບຸນກຸສົນໃດທີ່ໄດ້ຈາກການຄົ້ນຄິດ ແລະ ຈັດພິມປື້ມເຫລັ້ມນີ້ ຂ້າພະເຈົ້າ ຂໍອຸທິດສ່ວນບຸນອັນນີ້ ໃຫ້ແກ່ ບຸພາຈານ ປູ່ຍ່າ ຕາຍາຍ ທີ່ໄດ້ຄົ້ນຄິດປະດິດແຕ່ງ ຄຳເວົ້າ ແລະ ພອນໄຊໃນເວລາສູດຂວັນ, ເອີ້ນຂວັນ ຈົ່ງໄດ້ຮັບສ່ວນບຸນກຸສົນອັນນີ້ ແລະ ຂໍໃຫ້ບັນດາທ່ານ ຜູ້ທີ່ໄດ້ ນຳໃຊ້ປື້ມເຫລັ້ມນີ້ ຈົ່ງພິຈາລະນາ ເລືອກເຟັ້ນເອົາອັນທີ່ເຫມາະສົມ ແລະ ມີຜົນປະໂຫຍດໃຫ້ແກ່ຕົນ ແລະ ສັງຄົມລາວເຮົາ ໃຫ້ລູກຫລານ ໄດ້ຮູ້ຈັກ ຮີດຄອງປະເພນີອັນດີງາມ ຕົກຮອດຈອດເຖິງ ເຊັ່ນລູກ ເຊັ່ນ ຫລານ ສືບໆໄປ.

ຂໍອວຍພອນໃຫ້ບັນດາທ່ານ ຈົ່ງມີອາຍຸ ວັນນະ ສຸຂະ ພະລາ ນາໄມ ສຸຂະພາບແຂງແຮງ ທຸກໆທ່ານເທີ້ນ.

ຜູ້ທ້ອນໂຮມ ແລະ ຈັດພິມ

ມະຫາບຸນເລີດ ທຳມະຈັກ

ມະຫາແກ້ວ ສິງວົງສາ



ການນຳໃຊ້ໜັງສືໃບລານ ເຂົ້າໃນການເທດສູດ
ຂອງພິກຂຸສາມະເນນ

## ຄຳກວາຍທານສາມັນ

ສຸທິນນັງ ວະຕະເມທານັງ ທານັງເມ ປະລິສຸດທັງ ອາສາວັກ ຂະຍາວະຫັງ ໂຫຕຸ. ທຸຕິຍຳປີ ສຸທິນນັງ ວະຕະເມທານັງ ທານັງເມ ປະລິສຸດທັງ ອາສາວັກຂະຍາວະຫັງ ໂຫຕຸ. ຕະຕິຍຳປີ ສຸທິນນັງ ວະຕະເມທານັງ ທານັງເມ ປະລິສຸດທັງ ອາສາວັກຂະຍາວະຫັງ ນິພານະສັງຂາຕັງໂຫຕຸ ອະນາຄະເຕກາເລ.

- ຂ້າພະເຈົ້າ ຍິນດີໃນທານການໃຫ້ຂອງເຫລົ່ານີ້ ຂໍຈົ່ງເປັນອຸປນິໄສສິ້ນໄປ ແຫ່ງເຄື່ອງດອງສັນດານ. ກ່າວຄືພະນິພານ ແມ່ນວ່າໃນເທື່ອທີ 1, ເທື່ອທີ 2 ແລະ ເທື່ອທີ 3 ຂອງການໃຫ້ຂອງເຫລົ່ານີ້ກໍຂໍຈົ່ງສິ້ນໄປແຫ່ງອາສາວະກິເລດ ເຄື່ອງດອງສັນດານ. ກ່າວຄືພະນິພານໃນອະນາຄົດຕະການເບື້ອງໜ້ານັ້ນເທີ້ນ.

## ຄຳກວາຍສັງຄະທານ

ອິມານິ ມະຍັງພັນເຕ ພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ທິຕາຍ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍພັດຕາຫານ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ພັດຕາຫານ ກັບທັງບໍລິວານເຫລົ່ານີ້ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການະນານເທີ້ນ.

## ຄຳກວາຍເຂົ້າແຈກ

ອິມານິ ມະຍັງພັນເຕ ມະຕະກະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ມະຕະກະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍເຂົ້າແຈກ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ເຂົ້າແຈກ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍເຂົ້າສາກ

ເອຕານິ ມະຍັງພັນເຕ ສະລາກະພັດຕານິ ສະປະລິວາລານິ ອະສຸກັດກາເນ ກະປິຕານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ເອຕານິ ສະລາກະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍເຂົ້າສາກ ກັບທັງບໍລິວານເຫລົ່ານີ້ ອັນຕັ້ງຢູ່ຊື່ນັ້ນ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບເຂົ້າສາກ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກຂອງຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານ ເທີ້ນ.

# ຄຳກວາຍສັງຄະພັດ (ເຂົ້າບູຊາ)

ອິມັດສະມິງ ກາເນເຍວະ ສັງຄະພັດຕານິ (ພຸດທະປະມຸກອັດສະ) ເທມິ (ກ້າກວາຍຫລາຍຄົນປ່ຽນ ເທມິ ເປັນ ເທມະ).

- ຂ້າພະເຈົ້າທັງຫລາຍ ຂໍກວາຍສັງຄະພັດເຫລົ່ານີ້ ອັນຕັ້ງຢູ່ໃນທີ່ນີ້ແລ ແກ່ພະພິກຂຸສົງ ມີພະພຸດທະເຈົ້າເປັນປະມຸກ. (ໃຫ້ໃຊ້ໃນວັນສິນ 8 ຄ່ຳ 15 ຄ່ຳ ນອກຈາກມື້ທໍ່ເຂົ້າປະດັບດິນ, ທໍ່ເຂົ້າສາກ ແລະ ອອກພັນສາ, ກ້າມີພະເຖລະເປັນປະທານໃນພິທີກວາຍສັງຄະພັດ ໃຫ້ປ່ຽນ ພຸດທະປະມຸກອັດສະ ເປັນມະຫາເຖລັດສະ ຫລື ກ້າມີພະພຸດທະຮູບ ໃນພິທີດັ່ງກ່າວນັ້ນ ກໍໃຫ້ໃຊ້ພຸດທະປະມຸກອັດສະ ຄືເກົ່າ ).

# ຄຳກວາຍເຂົ້າສານ

ອິມານິ ມະຍັງພັນເຕ ຕັນທຸລານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ຕັນທຸລານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍເຂົ້າສານ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ເຂົ້າສານ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຜ້າຊຸມ ( ຜ້າໄຕ )

ອິມານິ ມະຍັງພັນເຕ ຕິຈີວະລານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ຕິຈີວະລານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຜ້າຊຸມ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຜ້າຊຸມ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການລະນານເທີ້ນ.

## ຄຳກວາຍຜ້າຈຳນຳພັນສາ

ອິມານິ ມະຍັງພັນເຕ ວັດສາວາສິກະຈີວະລານິ ສະປະລິ ວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ວັດສາວາສິກະ-ຈີວະລານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຜ້າຈຳນຳພັນສາ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຜ້າຈຳນຳພັນສາ ກັບທັງບໍລິວານ ເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການລະນານເທີ້ນ.

## ຄຳກວາຍຜ້າອາບນ້ຳຝົນ

ອິມານິ ມະຍັງພັນເຕ ວັດສິກະສາຕິກະຈີວະລານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ວັດສິກະສາຕິກະ ຈີວະລານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຜ້າອາບນ້ຳຝົນ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຜ້າອາບນ້ຳຝົນ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຜ້າປ່າ ( ຜ້າບັງສະກຸນ )

ອິມານິ ມະຍັງ ພັນເຕ ປັງສຸກຸລະຈີວະລານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ປັງສຸກຸລະຈີວະລານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຜ້າບັງສະກຸນ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຜ້າບັງສະກຸນຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຜ້າອັດເຈກະຈີວອນ (ຜ້າຮີບດ່ວນ)

ອິມານິ ມະຍັງ ພັນເຕ ອັດເຈກະຈີວະລານິ ສະປະລິວາລານິ ພິດຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ອັດເຈກະຈີວະລານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຜ້າອັດເຈກະຈີວອນ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຜ້າອັດເຈກະຈີວອນ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍເສນາສະນະ

ອິມານິ ມະຍັງ ພັນເຕ ເສນາສະນານິ ສະປະລິວາລານິ ອາຄະຕານາຄະຕັດສະ ຈະຕຸທິສັດສະ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ເສນາສະນານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ເສນາສະນະ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຜູ້ຢູ່ໃນທິດທັງ 4 ທີ່ມາ ແລະ ຍັງບໍ່ທັນມາ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບເສນາສະນະ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າ ທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳກວາຍໂຮງອຸໂບສົດ

ມະຍັງ ພັນເຕ ອິມັງ ອຸໂປສະຖາຄາລັງ ພິກຂຸສັງຄັດສະ ສັງຄະກຳມານິ ກະລະນັດຖາຍະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງອຸໂປສະຖາຄາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ໂຮງອຸໂບສົດນີ້ ແກ່ພະພິກຂຸສົງ ເພື່ອທຳສັງຄະກຳ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ໂຮງອຸໂບສົດນີ້ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳກວາຍສ້ວມກ່າຍຫນັກ

ມະຍັງ ພັນເຕ ອິມັງ ວັດຈະກຸຕິງ ອາຄະຕານາຄະຕັດສະ ຈະຕຸທິດສາ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງວັດຈະກຸຕິງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ສ້ວມກ່າຍຫນັກນີ້ ແກ່ພະພິກຂຸສົງ ຜູ້ຢູ່ໃນທິດທັງ 4 ທັງທີ່ມາ ແລະ ຍັງບໍ່ໄດ້ມາ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ສ້ວມກ່າຍຫນັກ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳກວາຍຂົວ

ມະຍັງ ພັນເຕ ອິມັງ ເສຕຸງ ມະຫາຊະນາບັງ ສາທາລະນັດກາຍະ ນິຍາເທມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັດສະມິງ ເສຕຸມທິ ນິຍາທິເຕ ສັກຂິໂກ ໂທຕຸ ອິທັງ ເສຕຸທານັງ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຂົວນີ້ ເພື່ອປະໂຫຍດທົ່ວໄປ ແກ່ມະຫາຊົນ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງເປັນພະຍານ ໃນຂົວທີ່ຂ້າພະເຈົ້າທັງຫລາຍມອບກວາຍນີ້ ຂໍການກວາຍຂົວນີ້ຈົ່ງເປັນໄປ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການະນານເທີ້ນ.

# ຄຳກວາຍຜາສາດເຜີ້ງ

ມະຍັງ ພັນເຕ ອິມັງ ສະປະລິວາລັງ ມະທຸປຸບຜະປາສາທັງ (ອິມັດສະມິງ1 ວິຫາເລ) ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ສະປະລິວາລັງ ມະທຸປຸບຜະປາສາທັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.
( ຖ້າຢູ່ບ່ອນອື່ນ ບໍ່ເວົ້າອິມັດສະຫມິງ ວິຫາເລ )

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຜາສາດເຜີ້ງ ພ້ອມທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ (ໃນວິຫານນີ້) ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຜາສາດເຜີ້ງ ພ້ອມທັງບໍລິວານນີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການະນານເທີ້ນ.

## ຄຳກວາຍດອກໄມ້ທູບທຽນ

ມະຍັງ ພັນເຕ ອິເມຫິ ທູປະທີປະປຸບຜະວະເລຫິ ລັດຕະນັດຕະຍັງ ອະພິປູເຊມິ ມະຍັງ ອຳຫາກັງ ລັດຕະນັດຕະຍັດສະ ປູຊາທິຄະລັດຕັງ ທີຕະສຸຂາວະຫາ ອາສະວັກຂະຍະປັດຕິຍາ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍບູຊາພະລັດຕະນະໄຕ ດ້ວຍດອກໄມ້ທູບທຽນ ອັນປະເສີດເຫລົ່ານີ້ ການບູຊາພະລັດຕະນະໄຕຂອງຂ້າພະເຈົ້າທັງຫລາຍ ຈົ່ງເປັນໄປເພື່ອປະໂຫຍດ ແລະ ຄວາມສຸກ ແລະ ເພື່ອສິ້ນໄປ ແຫ່ງອາສະວະ ຕະຫລອດກາລະນານເທີ້ນ.

## ຄຳກວາຍທຸງ

ມະຍັງ ພັນເຕ ອິເມຫິ ທະຊະປະຕາເກຫິ ລັດຕະນັດຕະຍັງ ອະພິປູເຊມະ ມະຍັງ ພັນເຕ ທະຊະປະຕາເກຫິ ລັດຕະນັດຕະຍັດສະ ປູຊາ ອຳຫາກັງ ທີຄະລັດຕັງ ທີຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍບູຊາພະລັດຕະນະໄຕ ດ້ວຍທຸງເຫລົ່ານີ້ ຂໍການບູຊາພະລັດຕະນະໄຕດ້ວຍທຸງ ຂອງຂ້າພະເຈົ້າທັງຫລາຍ ຈົ່ງເປັນໄປ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຢາຣັກສາໂລກ

ອິມານິ ມະຍັງ ພັນເຕ ເພສັດຊານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ ເພສັດຊານິ ປະຕິຄັນຫາຕຸ ອຳຫາກັງ ທີຄະລັດຕັງ ທີຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຢາແກ້ໄຂ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄໍາກວາຍຜ້າກະຖິນແບບເກົ່າ

ອິມັງ ພັນເຕ ສະປະລິວາລັງ ກະຖິນະຈີວະລະທຸດສັງ ສັງຄັດສະ ໂອໂນຊະຍາມະ ( ກ່າວ 3 ເທື່ອ )

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຜ້າກະຖິນ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ. (ກ່າວ 3 ເທື່ອ) ( ແບບເກົ່ານີ້ ກໍຖືກຕາມ ພະວິໃນ ຄວນໃຊ້ແບບນີ້ )

## ຄໍາກວາຍຜ້າກະຖິນແບບໃຫມ່

ອິມັງ ພັນເຕ ສະປະລິວາລັງ ກະຖິນະທຸດສັງ ສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ສະປະລິວາລັງ ກະຖິນະທຸດສັງ ປະຕິກລັນຫາຕຸ ປະຕິກລະເທຕະວາຈະ ອິມິນາ ທຸດເສນະ ກະຖີນັງ ອັດຖະລະຕຸ ອໍາຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຜ້າກະຖິນ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຜ້າກະຖິນ ກັບທັງບໍລິວານເຫລົ່ານີ້ ຮັບແລ້ວຈົ່ງການກະຖິນດ້ວຍຜ້ານີ້ ເພື່ອປະໂຫຍດ ແລະ ຄວາມສຸກ

ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ. ( ແບບໃໝ່ ເປັນຄຳກວາຍທີ່ສ້າງຂຶ້ນເມື່ອພາຍຫລັງ ບໍ່ຈຳເປັນໃຊ້ກໍໄດ້ ເພາະບໍ່ມີ ໃນພະວິໃນ, ຄຳອະທິບາຍຂອງທ່ານອາຈານບຸຍົກ ແສນສຸນທອນ )

## ຄຳກວາຍອັດຖະບໍລິຂານ

ອິມານິ ມະຍັງ ພັນເຕ ອັດຖະປະລິກຂາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ອັດຖະປະລິກຂາ ລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ອັດຖະບໍລິຂານ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ອັດຖະບໍລິຂານ ກັບທັງບໍລິວານ ເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ

ສະລະໂທ ນາມາຍັງ ພັນເຕ ກາເລນະ ສຳປັດໂຕ ຍັດຖະ ຕະຖາຄະໂຕ ອະລະຫັງ ສຳມາສຳພຸດໂທ ສາລະທິກາພາເທນະ ອາພາທານັງ ພິກຂຸນັງ ປັນຈະ- ເພສັດຊານິ ອະນຸນຍາສິ ສັບປິ ນະວະນີຕັງ ເຕລັງ ມະທຸ ຜານິຕັງ ອະຍັນທານິ ຕັກກາລະສະທິສັງ ອິມັງ ກາລັງ ສຳປັດຕາ ຕັດສະ ພະຄະວະໂຕ ປັນຍັດຕາ ທານັງ ທາຕຸກາມາ ເຕສຸ ປະລິຍາປັນນັງ ເຕສັງຈະ ພິກຂຸສັງຄັດສະ ໂອໂນ ຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ເຕສັງຈະ ຜານິຕັງ ປະຕິກຄັນ ຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ສາລະທະການ (ເວລາເຮັດບຸນເຂົ້າສາກເດືອນສິບເພັງ) ນີ້ມາຮອດແລ້ວ ໃນການໃດ ພະຕະຖາຄະຕະອໍລະຫັນຕະສໍາມາສໍາພຸດທະເຈົ້າ ໄດ້ຊົງອະນຸຍາດ ເພສັດ 5 ຢ່າງ ຄື ເນີຍໃສ ເນີຍອຸ້ນ ນໍ້າມັນ ນໍ້າເຜິ້ງ ນໍ້າອ້ອຍ ແກ່ພິກຂຸຜູ້ອາພາດດ້ວຍໂລກທີ່ເກີດໃນສາລະທະການ ບັດນີ້ຂ້າພະເຈົ້າທັງຫລາຍມາເຖິງການລະນີ້ແລ້ວ ປາກະຫນາຈະຖວາຍທານຕາມພະພຸດທະບັນຍັດ ຂອງພະຜູ້ມີພະພາກນັ້ນ ຈຶ່ງຂໍນ້ອມຖວາຍນໍ້າມັນ ນໍ້າເຜິ້ງ ນໍ້າອ້ອຍແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ນໍ້າມັນ ນໍ້າເຜິ້ງ ແລະ ນໍ້າອ້ອຍ ຂອງ ຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ ຂ້າພະເຈົ້າທັງຫລາຍ ຕະຫລອດການລະນານເທີ້ນ.

## ຄໍາຖວາຍຫມາກໄມ້ຕ່າງໆ

ອິມານິ ມະຍັງ ພັນເຕ ຜະລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ຜະລານິ ປະຕິຄັນຫາຕຸ ອໍາຫາກັງ ຫິຕະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມຖວາຍຫມາກໄມ້ເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະສົງຈົ່ງຮັບຫມາກໄມ້ເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ ຂ້າພະເຈົ້າທັງຫລາຍ ຕະຫລອດການລະນານເທີ້ນ.

## ຄຳກວາຍສາລານ້ຳ

ມະຍັງ ພັນເຕ ອິມັງ ຊະລະສາລັງ ອຸບທະກາເລ ວິສະມະນັດ ສັດກາຍະ ອາຄະຕານາຄະຕັດສະ ຈະຕຸທິສັດສະ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ຊະລະສາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍສາລານ້ຳນີ້ ເພື່ອເປັນທີ່ພັກຜ່ອນຍ່ອນໃຈໃນເວລາຮ້ອນ ແກ່ພະພິກຂຸສົງຜູ້ຢູ່ໃນທິດທັງສີ່ ທີ່ມາແລ້ວ ແລະ ຍັງບໍ່ໄດ້ມາ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບສາລານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຄ້ອງ ( ລະຄັງ )

ອິມັງ ພັນເຕ (ຄັນຕິງ) ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ຄັນທິງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຄ້ອງ ພ້ອມທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຄ້ອງ ພ້ອມທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍລະຄັງ

ອິມັງ ພັນເຕ (ຄັນຕັງ) ສະປະລິວາລັງ ພິກຂຸສັງຄັດສະ ໂອໂນ ຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ຄັນຕັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ລະຄັງ ພ້ອມທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບລະຄັງ ພ້ອມທັງບໍລິວານເຫລົ່ານີ້ ຂອງ ຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າ ທັງຫລາຍ ຕະຫລອດກາລະນານເທີ້ນ.

( ຖ້າເປັນໂປງກໍໃຫ້ບອກຊື່ຕາມນັ້ນ ສ່ວນຕົວບາລີແມ່ນຄືເກົ່າ )

## ຄຳກວາຍຕະກຽງ

ອິມັງ ພັນເຕ ປະທີປັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນ ຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ປະທີປັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຕະກຽງ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຕະກຽງກັບທັງບໍລິວານເຫລົ່ານີ້ ຂອງ ຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າ ທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍດອກໄຟຟ້າ

ອິມັງ ພັນເຕ ວິດຊຸປະທີປັງ ສະປະລິວາລັງ ພິກຂຸສັງຄັດສະໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ວິດຊຸປະທີປັງ ສະປະລິວາລັງ ປະຕິກຄັກທາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍດອກໄຟຟ້າ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ດອກໄຟຟ້າ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການະນານເທີ້ນ.

## ຄຳກວາຍກອງ

ອິມັງ ພັນເຕ ເພລິງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ເພລິງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍກອງ ກັບທັງ ບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບກອງ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດການະນານເທີ້ນ.

## ຄຳກວາຍທຳມາດ

ອິມັງ ພັນເຕ ທຳມາສະນັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ທຳມາສະນັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ທຳມາດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ທຳມາດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະ ເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຫນັງສືພະໄຕປິດົກ

ອິມານິ ມະຍັງ ພັນເຕ ເຕປິຕະກະປັນນານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ ເຕປິຕະກະປັນນານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຫນັງສືພະໄຕປິດົກ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງ ຈົ່ງຮັບຫນັງສືພະໄຕປິດົກ ກັບທັງບໍລິວານ ເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳກວາຍເກົ້າອີ້ນວມ

ອິມັງ ພັນເຕ ອາສັນທິງ ສະປະລິວາລັງ ພິກຂຸສັງຄັດສະໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ອາສັນທິງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍເກົ້າອີ້ນວມ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ເກົ້າອີ້ນວມ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳກວາຍຕຽງ

ອິມັງ ພັນເຕ ມັນຈັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ມັນຈັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຕຽງ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຕຽງ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຕັ່ງ

ອິມັງ ພັນເຕ ປີກັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນ ຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ປີກັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຕັ່ງ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຕັ່ງ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍເກົ້າອີ້ນວມ, ຕຽງ, ຕັ່ງ

ອິມານິ ມະຍັງ ພັນເຕ ອາສັນທິມັນຈະປີການິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ ອາສັນທິມັນຈະ ປີການິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍເກົ້າອີ້ນວມ, ຕຽງ, ຕັ່ງ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກ ຂຸສົງຈົ່ງຮັບເກົ້າອີ້ນວມ, ຕຽງ, ຕັ່ງ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດ ກາລະນານເທີ້ນ.



ການຈັດແຕ່ງພາບາສີແບບພື້ນເມືອງ
ຂອງຊາວເມືອງຂວາ ແຂວງຜົ້ງສາລີ

## ຄຳກວາຍຈ້ອງ ແລະ ເກີບ

ອິມານີ ມະຍັງ ພັນເຕ ສັດຕູປາຫະນານີ ສະປະລິວາລານີ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານີ ສັດຕູປາຫະນານີ ສະປະລິວາລານີ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຈ້ອງ ແລະ ເກີບ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງ ຈົ່ງຮັບຈ້ອງ ແລະ ເກີບ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຈ້ອງ

ອິມັງ ພັນເຕ ສັດຕັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ສັດຕັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຈ້ອງ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຈ້ອງ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍເກີບ

ອິມັງ ພັນເຕ ອຸປາຫະນັງ ສະປະລິວາລັງ ພິກຂຸສັງຄັດສະໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອຸປາຫະນັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍເກີບ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບເກີບ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຜ້າພົມ

ອິມັງ ພັນເຕ ໂກຊະວັງ ສະປະລິວາລັງ ພິກຂຸສັງຄັດສະໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ໂກຊະວັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຜ້າພົມ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຜ້າພົມ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍຂວານ, ຜ້າ ແລະ ສື່ວ

ອິມານິ ມະຍັງ ພັນເຕ ຜະລະສຸວາສີນິຂາທະນານິ ສະປະລິວາລານິ ສັງຄະເສນາສະນາບັງ ປະຕິສັງຂາລະບັດກາຍະ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ຜະລະສຸວາສີນິຂາທະນານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ທິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຂວານ, ຜ້າ ແລະ ສື່ວ ກັບທັງບໍລິວານເຫລົ່ານີ້ແກ່ພະພິກຂຸສົງ ເພື່ອໃຫ້ປະຕິສັງຂອນເສນາສະນະສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຂວານ, ຜ້າ ແລະ ສື່ວ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າ ທັງຫລາຍຕະຫລອດກາລະນານເທີ້ນ.

## ຄຳກວາຍຂວານ

ອິມັງ ພັນເຕ ຜະລະສຸງ ສະປະລິວາລັງ ສັງຄະເສນາສະນາບັງ ປະຕິສັງ- ຂາລະບັດກາຍະ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງ ຜະລະສຸງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ທິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຂວານ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ເພື່ອໃຫ້ປະຕິສັງຂອນ

ເສນາສະນະສິງ ອ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສິງຈົ່ງຮັບຂວານ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍພ້າ

ອິມັງ ພັນເຕ ວາສິງ ສະປະລິວາລັງ ສັງຄະເສນາສະນາບັງ ປະຕິສັງ- ຂາລະບັດກາຍະ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ວາສິງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ອ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ພ້າ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສິງ ເພື່ອໃຫ້ປະຕິສັງຂອນ ເສນາສະນະສິງ ອ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສິງຈົ່ງຮັບພ້າ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍສິ່ວ

ອິມັງ ພັນເຕ ນິຂາທະນັງ ສະປະລິວາລັງ ສັງຄະເສນາ ສະນາບັງ ປະຕິສັງຂາລະບັດກາຍະ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມັງນິຂາທະນັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍສິ່ວ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ເພື່ອໃຫ້ປະຕິສັງຂອນເສນາສະນະສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບສິ່ວກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍກ້ວຍ ແລະ ຊານ

ອິມານິ ມະຍັງ ພັນເຕ ສູປະທາລະມັນລະກາທິປະລິກຂາລານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ ສູປະທາລະມັນລະກາທິປະລິກຂາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍບໍລິຂານ ມີກ້ວຍ ແລະ ຊານເປັນຕົ້ນ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບບໍລິຂານ ມີກ້ວຍ ແລະ ຊານເປັນຕົ້ນ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າ ທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍກ້ວຍ

ອິມັງ ພັນເຕ ສູປະທາລັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ສູປະທາລັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ກ້ວຍ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບກ້ວຍ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າ ທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄໍາກວາຍຊາມ

ອິມັງ ພັນເຕ ມັນລະກັງ ສະປະລິວາລັງ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມັງ ມັນລະກັງ ສະປະລິວາລັງ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຊາມ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຊາມ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າ ທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄໍາກວາຍພັດຕາຫານ ໃນວັນລົງອຸໂປສົດ

ອິມານີ ມະຍັງ ພັນເຕ ອຸໂປສັດກິກະພັດຕານີ ສະປະລິວາລານີ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານີ ອຸໂປສັດກິກະ ພັດຕານີ ສະປະລິວາລານີ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ອຸໂປສັດຖິກະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບອຸໂປສັດຖິກະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດ ກາລະນານເທີ້ນ.

## ຄຳກວາຍພັດຕາຫານ ໃນວັນສາມັກຄີ ອຸໂປສົດ

ອິມານິ ມະຍັງ ພັນເຕ ສາມັກຄີອຸໂປສັດຖິກະພັດຕານິ ສະປະລິ-ວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ສາມັກຄີ ອຸໂປສັດຖິກະພັດຕານິ ສະປະລິວາລານິ ປະຕິກຄັນ ຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ສາມັກຄີອຸໂປສັດຖິກະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ສາມັກຄີອຸໂປສັດຖິກະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍຕະຫລອດ ກາລະນານເທີ້ນ.

## ຄຳກວາຍພັດຕາຫານ ໃຫ້ແກ່ພິກຂຸຜູ້ເປັນໄຂ້

ອິມານິ ມະຍັງ ພັນເຕ ຄິລານະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ

ຄິລານະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍຄິລານະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບຄິລານະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດ ກາລະນານເທີ້ນ.

## ຄຳກວາຍພັດຕາຫານ ແກ່ພະແຂກຜູ້ມາຢາມ

ອິມານິ ມະຍັງ ພັນເຕ ອາຄັນຕຸກະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ ອາຄັນຕຸກະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍອາຄັນຕຸກະພັດ ກັບທັງ ບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ອາຄັນຕຸກະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອ ປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳກວາຍພັດຕາຫານ
# ສຳລັບພະພິກຂຸຈະໜີໄປທາງໄກ

ອິມານິ ມະຍັງ ພັນເຕ ຄະມິຍະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ຄະມິຍະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ຄະມິຍະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ຄະມິຍະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດ ກາລະນານເທີ້ນ.

# ຄຳກວາຍພັດຕາຫານ ສຳລັບພະພິກຂຸຜູ້ຢູ່ນຳກັນ ບໍ່ແຕກແຍກກັນ ( ພາຍໃນວັດ )

ອິມານິ ມະຍັງ ພັນເຕ ສັດທິງວິຫາລິກະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ສັດທິງວິຫາລິກະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍສັດທິງວິຫາ- ລິກະພັດ ກັບທັງ ບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກ ຂຸສົງຈົ່ງຮັບ ສັດທິງວິຫາລິກະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍພັດຕາຫານ ສຳລັບພະພິກຂຸສົງ ຜູ້ມີຄວາມສາມັກຄີກັນ (ນອກວັດ)

ອິມານິ ມະຍັງ ພັນເຕ ອັນເຕວາສິກະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ອັນເຕວາສິກະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ອັນເຕວາສິກະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ອັນເຕວາສິກະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄຳກວາຍພັດຕາຫານ ສຳລັບພະອຸປັດຊາ ( ອຸປັດຊາຍະພັດ )

ອິມານິ ມະຍັງ ພັນເຕ ອຸປັດຊາຍະພັດຕານິ ສະປະລິວາລານິ ພິກຂຸ ສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ

ອຸປັດຊາຍະພັດຕານີ ສະປະລິວາລານິ ປະຕິກຄັນຫາຕຸ ອໍາຫາກັງ ທີຄະລັດຕັງ ທີຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ອຸປັດຊາ- ຍະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກ ຂຸສົງຈົ່ງຮັບ ອຸປັດຊາຍະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

## ຄໍາກວາຍພັດຕາຫານ ສໍາລັບອາຈານ ຜູ້ສິດສອນ ( ອາຈະລິຍະພັດ )

ອິມານີ ມະຍັງ ພັນເຕ ອາຈະລິຍະພັດຕານີ ສະປະລິວາລານີ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານີ ອາຈະລິຍະພັດຕານີ ສະປະລິວາລານີ ປະຕິກຄັນຫາຕຸ ອໍາຫາກັງ ທີຄະລັດຕັງ ທີຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍ ອາຈະລິຍະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ອາຈະລິຍະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

24 / VII ບ້ານຈ້າໜ່າຍ

# ຄຳກວາຍນິມັນຕະພັດ

ອິມານິ ມະຍັງ ພັນເຕ ນິມັນຕະພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນ ພັນເຕ ພິກຂຸສັງໂຄ ອິມານິ ນິມັນຕະພັດຕານິ ສະປະລິວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກວາຍນິມັນຕະພັດ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ນິມັນຕະພັດ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

# ຄຳອຸທິດສ່ວນບຸນກຸສົນ

... ອີກປະການຫນຶ່ງ ຂໍອຸທິດສ່ວນບຸກກຸສົນນີ້ ໄປຫາດວງວິນຍານຂອງ ... ຜູ້ລ່ວງລັບດັບຂັນໄປສູ່ປະລະໂລກເບື້ອງຫນ້ານັ້ນ ຂໍຈົ່ງມາຮັບເອົາສ່ວນບຸນກຸສົນນີ້ ທີ່ (ຍາດພີ່ນ້ອງ ... ) ໄດ້ອຸທິດໄປໃຫ້ນີ້ ກ້າຕົກທຸກຂໍໃຫ້ພົ້ນຈາກທຸກ ກ້າເກີງສຸກ ຂໍໃຫ້ສຸກຍິ່ງໆຂຶ້ນໄປ ຕາບຕໍ່ເທົ້າເຂົ້າສູ່ພະນິບພານ ໃນອະນາຄົດຕະການເບື້ອງຫນ້ານັ້ນເທີ້ນ ສາທຸ ສາທຸ ສາທຸ ອະນຸໂມທາມິ. (ກ້າອຸທິດໄປຫາຜູ້ໃດໃຫ້ບອກຊື່ຜູ້ນັ້ນ ໃສ່ບ່ອນຈ້ຳໆນັ້ນ ແລະ ກ້າຜູ້ໃດເປັນເຈົ້າພາບ ເຈົ້າສັດທາ ໃນການທຳບຸນກໍໃຫ້ໃສ່ຊື່ເຈົ້າພາບຕໍ່ຈາກ "ຍາດພີ່ນ້ອງ ... " ນັ້ນ) ແລະ ເພິ່ນນິຍົມເອົາຄຳກວາຍທານຊະນິດນີ້ ຕໍ່ທ້າຍຄຳກວາຍທານຕ່າງໆ ຕົວຢ່າງ :

ອິມານິ ມະຍັງ ພັນເຕ ພັດຕານິ ສະປະລິວາລານິ ພິກຂຸສັງຄັດສະ ໂອໂນຊະຍາມະ ສາທຸໂນພັນເຕ ພິກຂຸສັງໂຄ ອິມານິ ພັດຕານິ ສະປະລິ ວາລານິ ປະຕິກຄັນຫາຕຸ ອຳຫາກັງ ທີຄະລັດຕັງ ຫິຕາຍະ ສຸຂາຍະ.

- ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍນ້ອມກາວາຍ ພັດຕາຫານ ກັບທັງບໍລິວານເຫລົ່ານີ້ ແກ່ພະພິກຂຸສົງ ຂ້າແຕ່ທ່ານ ຜູ້ຈະເລີນ ຂໍພະພິກຂຸສົງຈົ່ງຮັບ ພັດຕາຫານ ກັບທັງບໍລິວານເຫລົ່ານີ້ ຂອງຂ້າພະເຈົ້າທັງຫລາຍ ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫລາຍ ຕະຫລອດກາລະນານເທີ້ນ.

ອີກປະການຫນຶ່ງ ຂໍອຸທິດສ່ວນບຸນກຸສົນນີ້ ໄປຫາດວງວິນຍານ ຂອງ ..... ຜູ້ລ່ວງລັບດັບຂັນໄປສູ່ປະລະໂລກເບື້ອງຫນ້ານັ້ນ ຂໍ ..... ຈົ່ງມາຮັບເອົາສ່ວນບຸນກຸສົນນີ້ ທີ່ຍາດພີ່ນ້ອງ ..... ໄດ້ອຸທິດໄປໃຫ້ນັ້ນ ກ້າຕົກທຸກ ຂໍໃຫ້ພົ້ນຈາກທຸກ ກ້າເກີງສຸກ ຂໍໃຫ້ສຸກຍິ່ງໆຂຶ້ນໄປ ຕາບຕໍ່ເທົ້າ ເຂົ້າສູ່ພະນິບພານ ໃນອະນາຄົດ ຕະການເບື້ອງຫນ້າ ນັ້ນເທີ້ນ ສາທຸ ສາທຸ ສາທຸ ອະນຸໂມທາມິ.

# ຄຳອາລາດທະນາຕ່າງໆ

## ຄຳອາລາດທະນາສິນ ໕

ມະຍັງ ພັນເຕ ວິສຸງ ວິສຸງ ລັກຂະນັດກາຍະ ຕິສະລະເນນະ ສະຫະ ປັນຈະສີລານິ ຍາຈາມະ ທຸຕິຍຳປິ ຕະຕິຍຳປິ. ວາຄີກັນ (ກ້າອາລາດ ທະນາຄົນດຽວ ປ່ຽນ ມະຍັງ ເປັນ ອະຫັງ, ຍາຈາມະ ເປັນ ຍາຈາມິ, ສິນ 8 ປ່ຽນ ປັນຈະ ເປັນ ອັດກະ ).

ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍເອົາສິນ 5 ປະການ ກັບພະໄຕສະລະນະຄົມ ເພື່ອຮັກສາເປັນພະແນກໆ. ແມ່ນວ່າ ເທື່ອທີ 2. ແມ່ນວ່າ ເທື່ອທີ 3.

## ຄຳອາລາດທະນາອຸໂປສົດສິນ

ມະຍັງ ພັນເຕ ຕິສະລະເນນະ ສະຫະ ອັດຖັງຄະ ສະມັນນາຄະຕັງ ອຸໂປສະຖັງ ຍາຈາມະ.

ທຸຕິຍຳປິ ມະຍັງ ...

ຕະຕິຍຳປິ ມະຍັງ ...

ຂ້າແຕ່ທ່ານຜູ້ຈະເລີນ ຂ້າພະເຈົ້າທັງຫລາຍ ຂໍເອົາອຸໂປສົດສິນ ປະກອບ ດ້ວຍອົງ 8 ພ້ອມພະໄຕສະລະນະຄົມ.

ແມ່ນວ່າຄັ້ງທີສອງ

ແມ່ນວ່າຄັ້ງທີສາມ

## ຄຳອາລາດທະນາສູດມຸງຄຸນ

ວິປັດຕິປະຕິພາຫາຍະ ສັບພະສຳປັດຕິສິດທິຍາ ສັບພະທຸກຂະວິນາສາຍະ ປະລິດຕັງ ພລູກະ ມັງຄະລັງ

ວິປັດຕິປະຕິພາຫາຍະ ສັບພະສຳປັດຕິສິດທິຍາ ສັບພະພະຍະວິນາສາຍະ ປະລິດຕັງ ພລູກະ ມັງຄະລັງ.

ວິປັດຕິປະຕິພາຫາຍະ ສັບພະສຳປັດຕິ ສິດທິຍາ ສັບພະໂລຄະ ວິນາສາຍະ ປະລິດຕັງ ພລູກະ ມັງຄະລັງ ສັກກັດຈັງ ອາລາດທະນັງ ກະໂລມະ.

ຂໍລາດທະນາພະສົງ ຈົ່ງສູດພະປະລິດຕະມຸງຄຸນ ດ້ວຍຄວາມ ເຄົາລົບ ເພື່ອປ້ອງກັນຄວາມວິບັດ ເພື່ອສຳເລັດສົມບັດທັງປວງ ເພື່ອໃຫ້ທຸກໃພ ແລະ ໂລກທັງປວງຈົບຫາຍໄປ.

## ຄຳອາລາດທະນາເທດ

ພຣົມມາ ຈະໂລກາທິປະຕິ ສະຫຳປະຕິ ກັດອັນຊະລີ ອັນທິວະລັງ ອະຍາຈາກະ ສັນຕີທະ ສັດຕາ ປະລະຊັກຂະຊາຕິກາ ເທເສຕຸ ທຳມັງ ອະນຸກຳປິມັງ ປະຊັງ.

ແທ້ຈິງທ້າວສະຫຳບໍດີພົມ ຜູ້ເປັນອະທິບໍດີຂອງໂລກ ໄດ້ທູນ ວິງວອນ ພະຜູ້ມີພະພາກວ່າ " ສັດທັງຫລາຍທີ່ມີລະອອງຄືລາຄະ ກິເລດ ໃນປັນຍາຈັກຂຸນ້ອຍ ເບົາບາງມີຢູ່ໃນໂລກນີ້ " ຂໍພະອົງຈົ່ງ ສະແດງທຳໂຜດສັດເຫລົ່ານີ້ເກີດ.

## ຄຳອາລາດທະນາທຳວັນທຳມະສະວະນະ

ຈາຕຸດທະສີ ປັນນະລະສີ ຍາຈະ ປັກຂັດສະ ອັດກະມີ ກາລາ ພຸດເທນະ ປັນຍັດຕາ ສັດທຳມັດສະວະນັດສິເມ ຈາຕຸດທະສີ ອະຍັນທານິ ສຳປັດຕາ ອະພິລັກຂິຕາ ເຕນາຍັງ ປະລິສາ ທຳມັງ

ໂສຕຸງ ອິທະ ສະມາຄະຕາ ສາທຸ ໄອໂຍ ພິກຂຸສັງໂຄ ກະໂລຕຸ ທຳມະເທສະນັງ ອະຍັນຈະ ປະລິສາ ສັບພາ ອັດຖິກັດຕະວາ ສຸນາຕຸຕັງ.

ວັນ 14 ຄ່ຳ 15 ຄ່ຳ 8 ຄ່ຳ ແຫ່ງປັກ ພະພຸດທະເຈົ້າບັນຍັດໃຫ້ເປັນວັນຟັງທຳ ບັດນີ້ເຖິງວັນ 14 ຄ່ຳ ທີ່ພະອົງກຳນົດໄວ້ ເພາະສະນັ້ນພຸດທະບໍລິສັດ ມາປະຊຸມກັນໃນທີ່ນີ້ ເພື່ອຈະຟັງທຳ ຂໍພະສົງຈົ່ງສະແດງທຳ ຂໍພຸດທະບໍລິສັດຈົ່ງຕັ້ງໃຈຟັງທຳເກີດ.

(ຖ້າ 15 ຄ່ຳ ປ່ຽນເປັນ ປັນນະລະສີ 8 ຄ່ຳ ປ່ຽນເປັນ ອັດຖະມີໂຂ)

## ຄຳເຊີນຂວັນ (ກ່ອນຈະສູດຂວັນ)

ສິສິສິດທິພະພອນ ບໍວອນແວນວິເສດ ອະເນກເຕໂຊ ໄຊຍະມັງຄະລະ ມະຫາສິລິມັງຄະເລດ ສາດຕະເພດອາຄົມ ຂຸນບຸລົມປຸນແປງແລ້ວ ໃຫ້ລູກແກ້ວອອກ ກິນເມືອງ ລິດທີເຮືອງທະລົງແທ່ນມື້ນີ້ແມ່ນມະຫາຄຸນ ຂຸນແຖນດາແຕ່ງແລ້ວ ໃຫ້ລູກແກ້ວກິ່ງລົງມາເປັນລາຊາສືບສ້າງ ເມືອງມິ່ງກວ້າງນາຄອງ ວັນປອງເປັນໂຊກໄຕໂລກຍ່ອມລືຊາ ທະລົງອະນຸພາວາແວນຍິ່ງ ເປັນເຈົ້າຈອມມິ່ງເມືອງແມນ ທະລົງແທ່ນກະຫນັດລ້ຳ ມື້ນີ້ຄ້ຳຄູນຄົງພະຍາຈັກທະລົງທິດສະລາດ ພົມມະບາດເລົ່າແຖມພອນ ພະອິສວນຫລອນແຖມໂຊກພະນາລາຍໂຍກສິດທິໄຊ ທ້າວສະຫັດ ສະໄນປະສາດຝົນທ່າແກ້ວໃຈຜ່ອງແຜ້ວບໍລິສຸດ ອຸດຕະມະໂຊກ ອຸດຕະມະໂຍກ ອຸດຕະມະດິກີອຸດຕະມະລິດທີ ອຸດຕະມະສີພິລາດ ອິນທະພາດພ້ອມໄຕຍາງ ທັງນາ

ວາງຄາດຄູ່ ພ້ອມກັບຢູ່ສອນລອນ ອາທິດຈອນຈັບທະລືກ ອັງຄານກີກ ມະຫາໄຊ ພຸດທະພະຫັດໄປເປັນໂຊກ ສຸກເສົາໂຍກເດດມຸງຄຸນ ປຸນເປັນ ຜົນຫລາຍປະໂຍກ ອຸດຕະມະໂຊກແທ້ດີຫລີ ມະເຫສັກຂີຫລີງລໍ່າໂລກ ໃຫ້ຫາຍທຸກໂສກບາບາ ພະຍາອະໄພຍະລາຊາຂຶ້ນທະລົງແທ່ນ ຫາຍໂສກແມ່ນວັນດີ ກັບຫາຊາລີເມືອຮອດປູ່ ສະກິດຢູ່ເຢັນໃຈ ທ້າວສີຊິນໄຊພູວະນາດ ນິມົນລາຊະບຸດຕາ ໃຫ້ເປັນລາຊາດັ່ງເກົ່າ ເປັນເຈົ້າເລົ່າສອງທີ ວັນນີ້ເປັນວັນດີກີທັງຫ້າ ເຈົ້າຟ້າເລົ່າແກຸມຄຸນ ພົມມະປຸນປອງລາດ ພອນແກ້ວອາດສິບປະການ ວໍລະສານຕົວອົງອາດ ຂຶ້ນສູ່ລາດເຮັງໂຍ ວັນນີ້ ໂພທິຍານຫນໍ່ຟ້າ ເຕຊະກ້າສະເຫວີຍເມືອງ ພະບຸນເຮືອງຄຸ້ມຄອງໄພ່ ທົດສະລາດ ໄຕ່ຕາມທໍາ ຈໍາບໍາສັດໃຫ້ພົ້ນ ວັນນີ້ດີລື່ນລົ້ນພົ້ນປະມານ ທູລະມານໃຈຜ່ອງແຜ້ວ ນິລະມິດຜາສາດແກ້ວ ກໍ່ແປງເມືອງ ນາຄອງເຮືອງທົດສະລາດ ຊຽງເຄືອອາດຂຸນເມັງ ເງິນຍວງເຊັ່ງເນົາເນືອງຄັບຄັ່ງ ສະພັ່ງພ້ອມຝູງຫມູ່ເສນາ ເທວະດາ ມາເປັນບໍລິວານແວດລ້ອມ ມາຢູ່ອ້ອມທຸກຫມູ່ໂຍທາ ທັງນາຄານາຄີ ຄຸດນາກ ທຸກພາກພ້ອມທໍລະນີ ເມກຄະລາສີສາວທ່າວ ເຊື້ອທ່ອນທ້າວ ບໍລະເມສອນ ບໍລົມວອນລິດທີກ້າ ເອົາແຜ່ນຟ້າຂີ່ຕາງຍານ ກຸມພະກັນດານຍົມມະລາດ ຈະຕຸໂລກອາດອົງຫລວງ ທັງຄວງບົນ ບຸລົມເຈົ້າຟ້າ ເຕຊະກ້າກວ່າສິ່ງທັງຫລາຍ ຈິ່ງຢາຍຢັງພະພອນ ແລຄ່ວງຈຸ້ມ ລົງມາຄຸ້ມຝູງຄົນໃຫ້ຫາຍກັງວົນແລເດືອນຮ້ອນ ໂພຍພະຍາດຂ້ອນພ່າຍໄປ ທັງພາຍໃນ ແລະ ພາຍນອກ ແດນດ້າວ ຂອກຄີລີ ພະລືສີສິດທີເດດ ຈົບເພດພ້ອມອາຄົມ ນິຍົມປະສິດປະສາດ



ໃນງານບຸນເທສະການຕ່າງໆ ພະສົງສາມະເນນຈະອອກບິນທະບາດ
ເພື່ອໃຫ້ອອກຕົນຍາດໂຍມໄດ້ກິນທານ ທີ່ ແຂວງອຸດົມໄຊ

ພອນແກ້ວອາດດວງດີ ມື້ນີ້ແມ່ນມື້ສັນວັນນີ້ແມ່ນວັນຊອບ ປະກອບດ້ວຍລືກງາມຍາມດີ ເປັນສີສິດທິໄຊຍະມຸງຄຸນດິເລກ ອະເນກສະຫວັດດີແທ້ດີຫລີ.

- ບັດນີ້ ຝູງຂ້ານ້ອຍ ໃຈຊື່ນຊ້ອຍຍິນສະອອນ ຂໍໂອມອ່ານອວຍພອນແກ່ ..... ຜູ້ທະລົງຄຸນຄາມມາກ ຂ້ານ້ອຍຫາກຂໍວອນຄຸນອະນຸສອນສາມສິ່ງ ຄືລັດຕະນະແກ້ວກິ່ງດວງດີ ກັບທັງຄຸນປະເສີດສິທຸກແຫ່ງ ທຸກແຫລ່ງຫລ້າສວງສະຫວັນ ມາເສກສັນເປັນພະພອນ ຄື ອາຍຸ ວັນນະ ສຸຂະ ພະລະ ອະໂລຄະຍາ ປະຕິພານ ອະທິປະຕິຄຸນະສານສົມບັດທຸກເຍື່ອງ ຂໍເດຊະອະນຸພາບກະເດື່ອງທໍລະນີດັ່ງແສງສຸລິສ່ອງໂລກ ຫາຍທຸກໂສກສະຫວັດດີ ໄຊຍະຕຸພະວັງ ໄຊຍະມັງຄະລັງ ຈົ່ງເປັນໄຊຍະມຸງຄຸນແວນຍິ່ງ ກ້ວນທຸກສິ່ງບໍ່ລະບວນແດ່ກໍຂ້າເທີ້ນ.

## ຄໍາຄາລະວະພະພຸດທະຮູບ ( ບຸນປີໃຫມ່ລາວ )

ສີສີປີເດືອນແຖມເຖິງເຂດ ພະສຸລິເຍດເຂົ້າສູ່ລາສີ ຜີຈັກປຸນເປັນປີອະທິກະມາດ ຂ້ານ້ອຍບາດຂ້າພະບາດທັງຫລາຍ ຍໍມືທູນໃສ່ຫົວເກດເກົ້າ ໄຫວ້ພະລັດຕະນະແກ້ວເຈົ້າຕົບມີລັດສະຫມີລັງສີເຖິງລະດູປີມາກ່າຍເຕົ້າ ອົງພະແກ້ວເຈົ້າຈົ່ງ ສະເດັດລີລາລົງທະລົງຕົບງາມພີພ່າຍໆ ຝູງຂ້າມາຂາບໄຫວ້ ແລະ ບູຊາ ພ້ອມກັບມາຜັດສີລູບໄລ້ ເພື່ອຢາກໄດ້ດັ່ງຄໍາມັກຄໍາປາກະຫນາ ຢູ່ທຽມບາດ

ບາທາ ກົ້ມຂາບໄຫວ້ພະແກ້ວເຈົ້າຕົນລືຊາ ຄຳປາຖະໜາຂອງຝູງຂ້າທັງຫລາຍ ຢ່າໄດ້ຄາດແຄ້ວ ຂໍໃຫ້ໄດ້ດັ່ງຄຳປາຖະໜາ ຝູງຂ້າທັງຫລາຍບໍ່ມີໃຈຕຶບໜາດ້ວຍໂທດ ກົ້ວໂກດໂກທາ ພ້ອມກັນມາລາຊາບາສີແກ່ພະແກ້ວເຈົ້າ ທັງຜູ້ເຖົ້າ ແລະ ປານກາງ ທັງສາວຮາມແລະ ເດັກນ້ອຍ ໃຈຊື່ນຊ້ອຍເຫລື້ອມໃສດີ ຝູງຂ້າທັງຫລາຍໄດ້ຜັດສີສິງເກດ ຕາມປະເທດເມືອງຄົນ ຝູງຂ້າທັງຫລາຍໄດ້ກະທຳພຽນສ້າງກຸສົນຫລາຍຊາດ ຈິ່ງໄດ້ອຸປະຖາກພະແກ້ວອົງທະລົງທຳຜາຍໂຜດເມດຕາສັດໂລກ ໃຫ້ພົ້ນຈາກໂອຄະສົງສານ ໃຫ້ໄດ້ເຖິງພະນິບພານອັນລ້ຳຍິ່ງ ຝູງຂ້າທັງຫລາຍ ພ້ອມກັນມາຕົກແຕ່ງແລ້ວ ຈິ່ງກະຫວາຍແກ່ພະແກ້ວອົງເປັນເຫງົ້າແກ່ຄົນ ແລະ ເທວະດາທັງຫລາຍອົງມີລັດສະໝີງາມບໍ່ເສົ້າ ຕາບຕໍ່ເທົ້າຫ້າພັນວັດສາກໍຂ້າເຖີ້ນ.

## ຄຳບາສີພະພິກຂຸສົງ

ສີສີສິດທິພະພອນ ບໍວອນແວນວິເສດ ອະຕິເລກເຕໂຊມະໂຫລະລຶກ ອະທຶກອັດທາ ອາຕຸລະມະຫຸລະເຕໂຊ ໄຊຍະມັງຄະລະສະຫວັດດີ ໄມຕີຈິ່ງມີແກ່ນາກຄຸດ ມະນຸດກຸມພັນຄັນທັບພະຍັກຂະເທວະດາສຸລາສຸລິນ ອິນພົມຍົມມະລາຊາ ສຸບັກຂັດຕະສຸມັງຄະລາອຸດຕະມະໂຊກ ອຸດຕະມະໂຍກ ອຸດຕະມະດິກີ ອຸດຕະມະນິທີອຸດຕະມະສັງຄາ ອຸດຕະມະສີພິລາດ ອິນທະພາດພ້ອມໄຕຍາງທັງນາວາງຄາດຄູ່ ພ້ອມກັນຢູ່ສອນລອນ ອາທິດຈອນຈັນທະລຶກອັງຄານກືກມະຫາໄຊ ພຸດທະພະຫັດໄປເປັນໂຊກ ສຸກເສົາໂຍກວັນດີ

ວັນດີກີອະມຸດຕະໂຊກ ປະສິດທິໂຍກພ້ອມລັກຂະນາ ຝູງຂ້າທັງຫລາຍ ທັງຍິງຊາຍນ້ອຍໃຫຍ່ ອຸປາສົກອຸປາສິກາທັງຫລາຍ ພ້ອມກັນມາ ທຸກແຫ່ງ ມາແຕ່ງຂັນຂາບໄຫວ້ ແລະ ບາສີສົງໂສດ ດ້ວຍນ້ຳມຸດທາ ພິເສກກໍແລ້ວ ບັດນີ້ຝູງຂ້າທັງຫລາຍຫາກເພິ່ງປະສົງສິດກິດຕະນາ ແລ້ວ ຈິ່ງອະທິດຖານໃຫ້ເປັນພອນສີ່ໂກດຖາກ.

ປະຖົມໂກດຖາກອັນກ້ອນໜຶ່ງນັ້ນ ຂໍຖວາຍສົມມາບູຊາເຈົ້າກູ ຕົນທະລົງສີລາທີ່ຄຸນອັນວິເສດ ໃນຂວງເຂດອາຣາມ ແກຸມສົມພານ ທຸກສິ່ງ ໄວ້ເປັນມິ່ງມຸງຄຸນ ໃຫ້ມີບຸນແລຍົດກວ້າງ ຢູ່ສືບສ້າງສຳມະນະ ທຳເຈົ້າ ຕາບຕໍ່ເທົ້າຮ້ອຍຊາວພະວັດສາ ກໍຂ້າເທີ້ນ.

ທຸຕິຍະພອນອັນກ້ອນສອງ ສົມພານບອງເນື່ອງມາກ ບຸນລົ້ນ ຫລາກເຫລືອຫລາຍ ຜັນຜາຍໄປແຜ່ກວ້າງ ເປັນທີ່ອ້າງແກ່ໂລກໂລກາ ລືຊາໄປທຸກແຫ່ງ ຕົກແຕ່ງພ້ອມຫານາ ທັງພະຍາແສນໝື່ນ ມາຂາບພື້ນບາທາ ສັກກາລະບູຊາເຈົ້າກູ ທຸກວັນກໍຂ້າເທີ້ນ.

ຕະຕິຍະພະພອນອັນກ້ອນສາມ ດູເຮືອງໃສແລເຮືອງຮຸ່ງ ປານດັ່ງ ແສງພະສຸລິຍະພຸ່ງຂຶ້ນສູ່ເຂົາຍຸຄັນທອນ ໃຫ້ໄດ້ແກຸມນາມະກອນຂຶ້ນ ເປັນສົມເດັດ ອັກຄະວໍລະລາຊະຄູ ດູງາມສີໃສສະອາດ ໃຫ້ໄດ້ນັ່ງ ຜາສາດແກ້ວ ແລະ ເມັງຊອນ ອາພອນຫລາຍແກ້ວກິ່ງ ທຸກສິ່ງພ້ອມ ເງີນຕາ ທາສາຫລາຍຕ່າງເມືອງມາໄຫວ້ ມີດອກໄມ້ແກ້ວ ແລະ ເງີນຄຳ ນຳມາຖວາຍພໍາພ້ອມ ມານົບນ້ອມວັນທາ ໂລຄາສັງຢ່າມີ

ຫ້າມຈຳໜ່າຍ

ມາພານຕ້ອງ ໃຫ້ເຈົ້າກູໄດ້ສອນລູກນ້ອງພໍແສນຄົນ ທະສະພົນຕົນຜ່ານແຜ້ວ ຄືພະໄຕປິດົກແກ້ວທັງສາມ ກໍຂ້າເທີ້ນ.

ຈະຕຸດກະພະພອນອັນກ້ວນສີ່ ໃຫ້ຮຸ່ງແຈ້ງຕັດສອງສໍລະຍານສິມພານເຮືອງທົ່ວໂລກ ໃຫ້ຂ້າມພົ້ນຈາກໂອຄະສົງສານ ໃຫ້ໄດ້ເຖິງສະຖານອັນປະເສີດ ດູເລີດລ້ຳກວ່າເທພາ ໃຫ້ໄດ້ດັ່ງພະມະຫາໂມກຄັນລາສາລີບຸດ ບໍລິສຸດອົງປະເສີດ ດ້ວຍລິດທີທໍລະນີຊ່ອຍຄ້ຳອິນທາລ້ຳຕື່ມສັດທາ ຈະຕຸລາບາຄະຄຸດ ມະນຸດກຸມພັນ ຄັນທັບພະຍັກທັງຫລາຍ ອັນຢາຍຢັ່ງຢູ່ຄູ່ປ່າໄມ້ໄພພະນອມ ທັງຈອມເຂົາແລຈື່ມນ້ຳສະຫມຸດ ສຸດແດນແສນໂກດຂອບຈັກກະວານ ໃຫ້ທະຍານມາດ້ວຍລິດທາ ມີເຄື່ອງສັກກາລະບູຊາພ່ຳພ້ອມ ມານົບນ້ອມປະນົມກອນ ກວາຍພອນໄປຢ່າຄາດແຄ້ວ ໃຫ້ເລີດແລ້ວດ້ວຍໄນຍະຄາຖາວ່າ ໄຊຍະຕຸພະວັງ ໄຊຍະມັງຄະລະດັ່ງນີ້ ຂໍໃຫ້ເຈົ້າກູມີໄຊຊະນະຜາບແພ້ພະຍາມານຜູ້ໃຈບາບ ມາຂາບພົ້ນບາທາ ສັກກາລະບູຊາເຈົ້າກູ ທຸກວັນໆ ກໍຂ້າເທີ້ນ.

ອັນຫນຶ່ງ ຂໍໃຫ້ເຈົ້າກູທະລົງສີລາທີຄຸນຄາມມາກ ອົດເຍື້ອນຍາກຄ່ອຍກະທຳພຽນ ໃຈສະກຽນແຂງຂະຫນາດ ອົງອາດດ້ວຍປັນຍາທະລົງວັດສາຫລາຍຂະຫນາດ ອົງອາດແຜຜາຍທຳ ສຸດຕະນິກາຍທັງຫລາຍອັນວິເສດ ຈົບເພດພ້ອມພະວິໄນ ພະອະພິທຳໄຂແຈ້ງຈອດຕະຫລອດເທົ້າເຖິງປັດການ ທັງອາທິກຳໄຂເຮືອງລາດ ຂໍໃຫ້ເຈົ້າກູເປັນສະມະນາດຫມັ້ນຍືນຍົງ ເທຽລະຄາຄົງເທົ້າຮ້ອຍຊາວວັດສາຢ່າໄດ້ກ່ອຍເກົ້າ ຕາບຕໍ່ເທົ້າເຂົ້າສູ່ນິບພານ ທຸກຕົນທຸກອົງກໍຂ້າເທີ້ນ.

# ຄຳສູ່ຂວັນແມ່ອອກກຳ

ໄຊຍະຕຸ ພະວັງ ໄຊຍະມັງຄະລາ ໄຊຍະມະຫາມຸງຄຸນ ປຸນເປັນດີລ້ຳເລີດ ວັນນີ້ປະເສີດພ້ອມລືຊາ ເກົ້າຂຸນມູນມາພ່ຳພ້ອມ ມາຊອຍນ້ອມຮັບຂວັນມານດາ ກຸມາຣາຫນຸ່ມນ້ອຍ ຫນ້າຊື່ນຊ້ອຍໂສພາ ບັດນີ້ຈັກພັນລະນາແຕ່ເຈົ້າເອົາກຳເນີດ ເກີດໃນທ້ອງແມ່ມານດາ ຫລາຍວັນມາບໍ່ນ້ອຍ ນັບອານໄດ້ເຂົ້າເຂດສິບເດືອນ ແມ່ເຈົ້າເລີຍສະເທືອນປວດທ້ອງ ຝູງພີ່ນ້ອງແລ່ນມາຫາ ຕານາຍແລ່ນມາລ່ຳ ແມ່ເຈົ້າປວດທ້ອງຢູ່ເຣຣີນ ສາລະວິນແລ້ວລຸກນັ່ງ ເຈັບທ້ອງດີ້ນຊີຊຸກຊີເຊືອນນອນກິ້ງເກື່ອນໄປມາ ໃຈມານດາເຫມືອນຈັກຫລູດລົ້ມ ຈິ່ງມົ້ມຈາກທ້ອງແມ່ມານດາ ເປັນຍິງຕົກຫງາຍ ເປັນຊາຍຕົວຂວ້ຳ ແມ່ເຈົ້າປວງວິມງົວ ຫມໍຕຳແຍຈິ່ງຄວາເຄຍ ໄດ້ມີດມາຕັດສາຍແຮແຜ່ສາຍບືແລ້ວຈິ່ງເອົານ້ຳລ້າງອາບສິງສີ ແພຜືນດີຜືນງາມເອົາຕຸ້ມຫໍ່ ແລ້ວຈິ່ງຍໍໃສ່ດັ້ງໄປຜອກຜີພາຍ ຜີໂພງ ແລະ ຜີເປົ້າ ຜີນົກເຄົ້າມັນຮ້ອງກຸກກູແມ່ນລູກສູມາເອົາດຽວນີ້ ກາຍມື້ນີ້ເມືອຫນ້າລູກກູ ແມ່ຈິ່ງຍົກໃສ່ອູ່ນອນຢູ່ຄີໄຟ ໄກວເຈົ້າໄປຕີເຕາະຕີຕ້ອນ ແມ່ເຈົ້າກິນນ້ຳຮ້ອນປາກເປື່ອຍພອງສຸກ ໄຟແຮງລຸກ ແມ່ເຈົ້າຍິ່ງຮ້ອນອ້ອນກະຫາຍ ແມ່ເຈົ້າອໍລະທວຍມືຈັບບວຍພ່ອງກິນນ້ຳຮ້ອນ ທຸກຍາກອ້ອນດອມລູກບຸດຕາ ກຸມາຣາເຮີຍຂວັນເຈົ້າຈິ່ງມາສູ່ ໃຫ້ເຈົ້າມານອນອູ່ສາຍແພງ ຍາມມື້ແລງເຈົ້າຢ່າໄດ້ອ້ອນແມ່ ແມ່ເຈົ້າຈິ່ງຍົກໃສ່ອູ່ສາຍຝ້າຍ ແມ່ເຈົ້າຈິ່ງຍ້າຍ

ໃສ່ອູ່ສາຍໄໝ ເພິ່ນຜູ້ດີນອນອູ່ສາຍຝ້າຍ ເຈົ້າຜູ້ຮ້າຍນອນອູ່ສາຍໄໝ ແມ່ເຈົ້າຈຶ່ງໄກວຈິງໃຈຮັກຣ່ ອັນນີ້ແມ່ນພໍ່ປິດຕາເຈົ້າແລ້ວ ອັນນີ້ຕັ້ງແມ່ນແມ່ມານດາເຈົ້າແລ້ວ ນົມແມ່ຮ້າວອູ້ມເຈົ້າມາກິນ ແພຜືນດີຜືນງາມເອົາມາຕຸ້ມ ອຸ້ມເຈົ້າໄປແລ່ນຫລິ້ນຢູ່ຈອນຄອນໆ ແມ່ເຈົ້າກອມເຈົ້ານອນຢູ່ນີເນຍນີນ່ຳ ພໍ່ເຈົ້າໄປໄຮໄດ້ໄຂນົກຫາມາຕ້ອນເຈົ້າແລ້ວ ແມ່ເຈົ້າລ້ຽງມ້ອນພອງເອົາລູກກິນນົມ ຊົມເຈົ້າຢູ່ທຸກຄ່ຳເຊົ້າ ຈຶ່ງໃສ່ຊື່ລູກແຈມເຈົ້າວ່າ ..... ເປັນລູກຄ້ຳລູກຄູນຂອງບິດາມານດາແຕ່ເຄົ້າ ຈຶ່ງຮຽກຂວັນລູກແກ້ວແມ່ໃຫ້ມາໂຮງ ວ່າ "ເອຫິ ຕາຕະ ປິຍະ ປຸດຕະ (ກ້າຜູ້ຍິງວ່າ ເອຫິ ອຳມະ ປິຍາ ທິຕາ) ປູເລກະມະມະ ປາລະມິງ ທະທະຍັງ ເມ ພິສັນ ເຈກະ ກະໂລກະ ວະຈະນັງ ມະມະ" ດູລາລູກຮັກແມ່ ບຸນແຜກວ້າງປາລະມີ ຈຶ່ງມາສະເຫວີຍຄວາມຍິນດີດອມຍາດພີ່ນ້ອງ ທັງພວກພ້ອງວົງວານ ມາເຍີຂວັນເອີຍ ! ໃຫ້ເຈົ້າມານອນອູ່ສາຍໄໝ ມາທົງຜ້າສະໃບຜືນຜອງ ມາຊົມມຸກແກ້ວສອງດອມມານດາ ມາຊົມມາລາດອມພໍ່ແມ່ ມາເຍີຂວັນເອີຍ! ຂວັນເຈົ້າມາຮອດແລ້ວໃຫ້ເຈົ້າໃຫຍ່ພຽງລຸງ ໃຫ້ເຈົ້າສູງພຽງປ້າ ໃຫ້ເຈົ້າຈຳເລີນຫນ້າຢູ່ສະຫວັດດີ ມາເຍີຂວັນເອີຍ ! ມາຢູ່ມຸ້ງດອມຫມອນ ມາຢູ່ນອນດອມແມ່ ໃຫ້ເຈົ້າມາເປັນແກ່ຈະເລີນຄວາມດີ ມາເຍີຂວັນເອີຍ ຂວັນລູກເຈົ້າກໍໃຫ້ແລ່ນມາລີລາ ຂວັນມານດາກໍໃຫ້ມາລີ້ລາຍ ມາຢູ່ຄ້າຍຮຽງຮ່ວມບຸດຕາ ໃຫ້ມາທະລົງມາລາດອມຜົວທັງລູກນ້ອຍ ມາເຍີຂວັນເອີຍ ! ໃຫ້ເຈົ້າຫມັ້ນປານແຜ່ນຫີນແລງ ໃຫ້ເຈົ້າແຂງປານແຜ່ນຫີນລາດ ໃຫ້ເຈົ້າຫມັ້ນປານຫລ່ຽມອາດ

ເສົາສະເຫມນ ໃຫຍ່ພຽງຕໍຢ່າໄດ້ຫັກ ໃຫຍ່ພຽງຫລັກຢ່າໄດ້ໂຄ່ນ ຢ່າໄດ້ຫມົ່ນເຫມືອນຕອງ ຢ່າໄດ້ຫມອງເຫມືອນເທົ່າ ຢ່າໄດ້ເກົ່າເສຍສີ ໃຫ້ເຈົ້າມີອາຍຸຍືນນານຢ່າໄດ້ກ່ອຍເກົ້າ ຕາບຕໍ່ເທົ້າຫ້າພັນວັດສາ ກໍຂ້າເທີ້ນ, ສາທຸ ໆ.

## ຄໍາສູ່ຂວັນເດັກນ້ອຍ

ສິສິສິດທິພະພອນ ບໍວອນແວນວິເສດ ອະຕິເລກໄຊຍະມັງຄະລະ ສຸຂະສະຫວັດດີ " ເອຫິ ຕາຕະ ປິຍະ ປຸດຕະ ( ຍິງວ່າ ເອຫິ ອໍາມະປິຍະ ທິຕາ ) ປູເລກະ ມະມະ ປະລະມິງ ທະທະຍັງ ເມ ພິສັນເຈກະ ກະໂລກະ ວະຈະນັງ ມະມະ ".

ບັດນີ້ຂ້ອຍຈັກເຊີນເອົາຂວັນກຸມາຣາອອນນ້ອຍ ຫນ້າຊື່ນຊ້ອຍ ໂສພາ ຂໍອັງເຊີນເທວະດາຕົນອິງອາດ ຕົນຮັກສາຫວຍລາດຫມູ່ນິກອນ ຂໍໃຫ້ລົງມາຊອຍວອນເອົາຂວັນອອນນ້ອຍ ຂວັນຫົວເຈົ້າໄປຕົກຫລົ່ມແລ ກາງໄພ ຂວັນເຈົ້າໄປເດີນໄກປ່າກວ້າງ ຂວັນເຈົ້າໄປທ່ຽວທ່ອງເມືອງຜີ ຂວັນເຈົ້າໄປຫລົ້ນໃນນະທີກໍໃຫ້ມາຢ່າຊ້າ ຂວັນເຈົ້າໄປທ່ຽວຄ້າເມືອງຜີ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ! ຂວັນເຈົ້າໄປຢູ່ກົກບາກຫລວງ ຄວງບ່າງຮ້ອງ ຂວັນເຈົ້າໄປທ່ອງທ່ຽວຫລີຜີ ຂວັນເຈົ້າໄປຫລົ້ນນ້ໍາ ແມ່ນະທີ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ! ຂວັນເຈົ້າໄປຢູ່ນາ ແກມຫຍ້າ ຂວັນເຈົ້າໄປຢູ່ປ່າຊ້າແກມຜີ ຂວັນເຈົ້າໄປກຶກຂີ່ລໍາຫນາ

ຂວັນເຈົ້າໄປກຶກຄາລຳໃຫຍ່ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢືຂວັນເອີຍ ຂວັນເຈົ້າໄປຫລິ້ນກາງໂຄກ ໄປໄລ່ນົກໂກນໂດກແລກາເວົາ ຂວັນເຈົ້າໄປນັ່ງເຫງົາຢູ່ໃຕ້ກົກໄມ້ ກໍໃຫ້ມາສາມື້ນີ້ວັນນີ້ ຂວັນກຳເນີດສາມສິບສອງ ຈົ່ງມາຢູ່ຄອງໃນເນື້ອ ມາເຢືຂວັນເອີຍ ຂວັນຫົວໃຫ້ມາຢູ່ຫົວປັກປິ່ນເກົ້າ ນ້ຳມັນເຂົ້າທາຫອມ ຂວັນຕາແລຂວັນຄິ້ວ ຂວັນນິ້ວຊ້າຍແລຂວັນນິ້ວຂວາ ຂວັນບາທາທັງຄູ່ ເກີບແກ້ວຢູ່ຮັບຮອງ ເຈົ້າຢ່າວອງມາດ່ວນ ຟ້າຮ້ອງຮ່ວນໃຫ້ຮີບມາ ຂວັນຕາໃຫ້ມາຢູ່ຕາສອງກ້ຳ ເຈົ້າຢ່າຫລີງລ່ຳຫລິ້ນດູດາຍ ໃຫ້ມາຢູ່ກາຍທຸກແຫ່ງ ຂວັນແຂ້ງແລຂວັນຂາກໍໃຫ້ມາສາມື້ນີ້ວັນນີ້ ມາເຢືຂວັນເອີຍ! ຂວັນປາກໃຫ້ມາຢູ່ປາກຢ່າເພີ້ຈົ່ມຫລົງໄຫລ ຂວັນຫົວໃຈພາທ່ຽວ ເຈົ້າຢ່າໄດ້ຄຶດທ່ອງທ່ຽວທາງໄກ ໃຫ້ເຈົ້າມາເຣວໄວມື້ນີ້ວັນນີ້ ເຊີນຂວັນລູກເຕົ້າມາຢູ່ໃນເຮືອນ ຂວັນປີເດືອນໃຫ້ມາເຕົ້າ ຂວັນເກດເກົ້າແລເກສາ ຂວັນຫູຂວັນຕາກໍໃຫ້ມາພ່ຳພ້ອມ ມາເຢືຂວັນເອີຍ ຂວັນເຈົ້າໄປທ່ຽວກ້ຳຄູຫາບຳບາຄາຄຸດບາກ ຂ້ອຍຈັກເຊີນເອົາເຈົ້າພູ່ມພາກຊ່ອຍຮຽກເອົາຂວັນ ມາເຢືຂວັນເອີຍ! ຂວັນແຄ່ງກໍໃຫ້ມາຢູ່ແຄ່ງເປັນແກວ ຂວັນແອວແລທ້ອງນ້ອຍ ຂວັນນິ້ວກ້ອຍໃຫ້ມາສອດສຸບແຫວນ ຂວັນຄໍຄາງແລໄຫລ່ໜ້າ ກໍໃຫ້ມາໂຮມເຮົ້າຢູ່ປະຈຳ ມາເຢືຂວັນເອີຍ! ຂວັນເຈົ້າມາຮອດແລ້ວຢ່າໄດ້ທ່ຽວໄປມາ ຕາມມັກຄາແລເຫວຫ້ວຍ ຂວັນເຈົ້າໄປທ່ຽວບ້ານກິນເຫລົ້າດອມໝູ່ຊາຍໂຖງ ກໍໃຫ້ມາມື້ນີ້ວັນນີ້ ມາຢູ່ສ້າງເຮືອນຕົນຄຳກັງວົນບໍ່ມີມົ້ວ ຂວັນຫົວເຈົ້າຢ່າໄດ້ຄວ່າກາງຄືນ ເດືອນມືດເຈົ້າຢ່າໄດ້ທ່ຽວຄ່ຳ ເດືອນດຳເຈົ້າຢ່າໄດ້ທ່ຽວຫລິ້ນ ກາງເວັນເຈົ້າຢ່າໄດ້

ທ່ຽວທ່ອງ ມາຢູ່ຫ້ອງຫໍແກ້ວຊຸ່ມເຢັນ ມາເຢືອວັນເອີຍ ຝົນຕົກ ເຈົ້າຢ່າໄດ້ດຸ່ງໄປຫນ້າ ຟ້າຮ້ອງຢ່າໄດ້ດຸ່ງໄປໄກ ກ້ອນເສົ້າໄປຈັ່ງໄປ ຄືໄຟຄວ່າຈັ່ງຄວ່າ ລຸກແຕ່ປ່າມາເຮືອນ ລຸກແຕ່ສວນມາບ້ານ ອື້ຄານ ໃຫ້ເຈົ້ານອນຢູ່ເຮືອນນຳພໍ່ແມ່ ກິນເຂົ້າຜີໃຫ້ເຈົ້າຮາກ ຄ້ຽວຫມາກຜີ ໃຫ້ເຈົ້າຄາຍ ໃຫ້ເຈົ້າຄືນມາດາຍຫ້ອງເປົ່າ ໃຫ້ເຈົ້າມາກິນເຂົ້າ ກັບກ້ວຍດອມອາ ໃຫ້ເຈົ້າມາກິນເຂົ້າກັບປາດອມປູ່ ໃຫຍ່ພຽງຕໍ ຢ່າໄດ້ຫັກ ໃຫຍ່ພຽງຫລັກຢ່າໄດ້ໂຄ່ນ ຢ່າໄດ້ຫມິ່ນເຫມືອນຕອງ ຢ່າໄດ້ຫມອງເຫມືອນເຫົ່າ ຢ່າໄດ້ເກົ່າເສຍສີ ໃຫ້ເຈົ້າມີອາຍຸຍືນຍາວ ຢ່າໄດ້ສັ້ນ ໃຫ້ເຈົ້າໃຫຍ່ພຽງລຸງ ໃຫ້ເຈົ້າສູງພຽງປ້າ ໃຫ້ເຈົ້າຈຳເລີນ ຫນ້າຢູ່ສະຫວັດດີ ນອນຫລັບໃຫ້ເຈົ້າໄດ້ເງິນຫມື່ນ ນອນຕື່ນໃຫ້ເຈົ້າໄດ້ ເງິນແສນ ແບນມືໄປໃຫ້ເຈົ້າໄດ້ແກ້ວມະນີໂຊດ ໂທດຮ້າຍຢ່າມາພານ ມານຮ້າຍຢ່າມາບຽດ ໃຫ້ເຈົ້າຫາຍເຄາະຫາຍໄພ ເຄາະເຈົ້າຢ່າ ໄດ້ເຫັນ ເຂັນເຈົ້າຢ່າໄດ້ພໍ້ ໃຫ້ເຈົ້າຫາຍພະຍາດໂລຄາ ໃຫ້ເຈົ້າມີ ສັກດານຸພາບ ຜາບແພ້ຂ້າເສິກສັດຕູ ກໍຂ້າເທີ້ນ.

## ຄຳສູ່ຂວັນເຮືອນ

ສີສີສິດທິພະພອນ ບໍວອນແວນວິເສດ ອະເນກສະຫວັດດີ ໄຊຍະໂສດກີ ພະວັນຕຸ ດັ່ງນີ້ເປັນເຄົ້າ ອາຈານເຈົ້າຈິ່ງບອກໄປແຮກໄມ້ ມາແຕ່ງເປັນເຮືອນ ຂ້ອຍຈິ່ງຫາຂວານດວງກ້າ ພ້າດວງຄົມ ແບກເຂົ້າດົງຫາເສົາແຮກ ໄມ້ຮັງຕົ້ນນັ້ນໃຈແຕກແລໂກນປາຍ

ຮັງຕົ້ນນັ້ນຊຶບໂຄນແລກອດສ້ຽນ ຮັງຕົ້ນນັ້ນໃບຫ້ຽນແລພົ່ນໄພ ໄມ້ຈັ່ງໄຣລໍາຊົ່ວ ໂລກກ່າວໄວ້ວ່າເຂັດຂວາງ ຄົນທັງປວງໃຫ້ຫລີກເວັ້ນ ບັດນີ້ຈິ່ງໄປພໍ້ໄມ້ລໍາດີ ບໍ່ມີຜີຢູ່ເຝົ້າ ນັກປາດເຈົ້າຈິ່ງກ່າວຄາຖາວ່າ "ສັບເພ ຍັກຂາ ປະລາຍັນຕຸ" ດັ່ງນີ້ເປັນເຄົ້າ ຕົ້ນບໍ່ເສົ້າມີສີ ລໍາດີງາມ ກ້ຽງປອດ ດູຍອດຍິ່ງເງີນລຽງ ຢູ່ດິນພຽງບໍ່ຄ້ອຍ ຂ້ອຍຈິ່ງເອົາຂວານ ມາບັກໜ້າແລບັກຫລັງ ໄມ້ລົ້ມດັງສຽງຄ່ອຍ ຂ້ອຍຈິ່ງເອົາເຈົ້າເມືອ ຢູ່ບ້ານຄຸນຄໍ້າຊຸ່ມເຢັນ. ບັດນີ້ເຈົ້າຫາກລົ້ມເມືອໃຕ້ ຂໍໃຫ້ມີງົວຄວາຍ ເຕັມຄອກ ເຈົ້າຫາກລົ້ມເມືອຕາເວັນອອກ ຂໍໃຫ້ໄດ້ຜາບແພ້ແກ່ຜີ ປີສາດຕົວຈັງໄຮ ເຈົ້າຫາກລົ້ມເມືອຕາເວັນຕົກ ຂໍໃຫ້ມີອາຍຸຍືນຍາວ ເກົ່າເກົ້າ ໃຫ້ໄດ້ເປັນເຈົ້າແຕ່ງກິນທານ ຢູ່ສະບາຍບານບໍ່ໄຮ້ ເລີຍລວດ ໄດ້ເສົາຫວນ ມວນມາທັງເສົາຄໍ້າ ກະທອດຊໍ້າແປຂາງ ປ້ານລົມບາງ ກັບຂື່ ສະຍົວຊື່ກອນແຂວງ ຄວາຍເກີກແຮງຊັກແກ່ ຮອດຫາດແຮ່ ເຈົ້າຢ່າໄດ້ເຊົາ, ຮອດກໍເລົາເຈົ້າຢ່າໄດ້ແຕກ ຮອດກໍແຝກໃຫ້ເຈົ້າຄ່ອຍ ຍູ້ກັນມາ ມາເຢືອວັນເອີຍ! ມານໍາຄວາຍເກີກຕົວກວຽນແກ່ ມານໍາ ຄວາຍແມ່ຕົວກວຽນດຶງ ມາຊູນໄມ້ເຈົ້າຢ່າໄດ້ດວນ ມາຊູນຂວານ ເຈົ້າຢ່າໄດ້ສະທ້ານ ຂ້ອຍຈັກເຊີນເຈົ້າເມືອຢູ່ບ້ານຄູນຄໍ້າມັ່ງມູນ ຂ້ອຍຈິ່ງໄປຫາອີລູງມຸງຄຸນ ຜູ້ເພິ່ນເປັນຊ່າງໄມ້ແສນ ໄຊຍະມັງ ຄະລະໄດ້ມາຕາມ ຜູ້ກ້ອນສາມນັ້ນແມ່ນແສນຄໍ້າບຸນເຮືອງ ຜູ້ເພິ່ນພິຈາ ລະນາກ້ອນກີ່ ຜູ້ກ້ອນສີ່ນັ້ນແມ່ນແສນບຸນຍັງ ຄົນສີ່ແສນຄົນນີ້ ຈິ່ງພ້ອມ ກັນມາເບິ່ງກະທອດ ວັນສຸດປອດມື້ດີ ໂບຮານມີຫລາຍແຫ່ງ ແຕ່ງໄວ້ ແຕ່ພາຍຫລັງ ເຄທັງມີກ້ອນແປດ ອາຈານເຈົ້າແກວດກົດຫມາຍ

ຫລັງໜຶ່ງນັ້ນຫລາຍສິບນອງມາຄື່ນເຄົ້າ ຫລັງໜຶ່ງນັ້ນ ຊື່ວ່າສອງເກົ້ານັ່ງທະລົງທຸກ ຫລັງໜຶ່ງນັ້ນ ຊື່ວ່າ ຢືນກິນເທົ້າເຫມິດຊົ່ວ ຫລັງໜຶ່ງນັ້ນຊື່ວ່າ ກົ້ນກົງຮົ່ວເປັນຮູ ຫລັງໜຶ່ງນັ້ນ ຊື່ວ່າ ຊິງຊູ້ຊົມຮັກ ຫລັງໜຶ່ງນັ້ນ ຊື່ວ່າ ມັກປ່ວຍໄຂ້ເສຍຄວາຍ ຫລັງໜຶ່ງນັ້ນ ຊື່ວ່າ ມີເຂົ້າຂອງເຫລືອຫລາຍແຫລ່ ຫລັງໜຶ່ງນັ້ນ ຊື່ວ່າ ລ້ຽງລູກແຜ່ເຕັມເຮືອນ ຫລັງນີ້ຈິ່ງເປັນ ຫລັງກ້ອນແປດ ສຳເລັດດັ່ງຄຳມັກຄຳປາກະຫນາ ຈິ່ງເອົາເຊືອກມາແທກຂື່ ເນັ່ງໃຫ້ຊື່ບັກສາມ ເປັນເຮືອນງາມຍອດຍິ່ງ ຮອດມື້ຈິ່ງມາຍໍ ຂຸດຂຸມເອົາຂວຍເມືອໃຕ້ທ້ອງບາກຫາມເສົາລາກມາທໍ່ ຍໍເສົາແຮກຂຶ້ນຂໍໃຫ້ໄດ້ຂີ້ໄຮ້ເກີດເປັນດີ ຍໍເສົາຂວັນຂຶ້ນຂໍໃຫ້ມີເຂົ້າຂອງເຫລືອຫລາຍແຫລ່ ຍໍເສົາແຈຫນູຂຶ້ນຂໍໃຫ້ລ້ຽງມ້ອນແຜ່ເຕັມເຮືອນ ຍໍເສົາແຈເສືອຂຶ້ນ ຂໍໃຫ້ໄດ້ແກ້ວມະນີມາສູ່ຝູງຫມູ່ຜີຂາມຢ້ານ ສະທ້ານຫລີກຫນີໄກ ແລ້ວຈິ່ງເອົາຂ້າວມາໃສ່ຂື່ເອົາໄມ້ຊື່ມາມັດ ສະຍົວບັກກາດຕັ້ງ ເສົາດັ້ງກາດລິງລົມ ເອົາແປບິນມາຄາດ ນ້ຳຈຸ່ມລ້າງຫວາຍມັດ ຈັດກອນຢາຍພໍຄອງ ປ້ານລົມກອງກິນແປ ທັງສີ່ແຈເຊືອກແທກໄວ້ ຂ້ອຍຈິ່ງເອົາຫຍ້າແຝກມາມຸງໃຫ້ຮົ່ມເຈົ້າຫນາ ເອົາຫຍ້າຄາມາມຸງໃຫ້ຮົ່ມເຈົ້າກວ້າງ ຂ້ອຍຈິ່ງບອກເກົ້າແກ່ແມ່ບ້ານ ພ້ອມກັນແຕ່ງພາຂວັນ ຂ້ອຍຈິ່ງຂົບຂວາຍຫາຫົວມັນແລຫົວເຜືອກ ເລືອກໄດ້ຫມູ່ວັນໂງ ໂຈນໂຈຫມາກພ້າວສ້ອມມາໃສ່ລ້ອມພາຂວັນ ມີທັງເຫລົ້າກອງພັນແລບໍ່ແຮດ ໄກ່ຜູ້ແສດຫົວທໍ່ນົກຊຸມແຊງ ດອກໄມ້ແດງໃສ່ແລ້ວ ຝ້າຍອ້ອມແກ້ວມຸງຄຸນ ຍໍມາຕັ້ງສາດ ນັກປາດເຈົ້າຈິ່ງຮຽກເອົາຂວັນ ມາເຢືຂວັນເອີຍ!

ມາທັງຂວັນໄມ້ຈິກຕົ້ນບໍ່ແຫງ ມາທັງຂວັນໄມ້ແດງລຳປອດ ມາທັງຂວັນກະທອດດັ້ງຂື່ດອມກັນ ມາທັງຂວັນຕົງຂ້າວຂົວເຊັນ ສະຍົວຂື່ ມາຄູນເຈົ້າໃຫ້ດີ ບາສີໃຫ້ເຈົ້າຍົດກວ້າງ ມີຜູ້ແຫນແຫ່ ສອງກ້ຳຫນ້າ ແລະກ້ຳຫລັງ ຢາຍຢັງມາຢູ່ເຝົ້າ ຕາບຕໍ່ເທົ້າເທຍລະຄາ ໄຊຍະຕຸພະວັງ ໄຊຍະມັງຄະລະ ສັບພະສິດທິ ພະວັນຕຸ ເຕ.

## ຄຳສູ່ຂວັນທຳມະດາ ( ທົ່ວໄປ )

ສິສິສິດທິພະພອນ ບໍວອນພິເສດ ອະຕິເລກເຕໂຊ ໄຊຍະມັງຄະລາ ດິເລກ ອະເນກສະຫວັດດີ ໄມຕີຈິ່ງມີແກ່ທ້າວພະຍາ ເສນາອຳມາດ ສີຫາດລາຊະກຸມານ ໃຫ້ຢູ່ສຸກສຳລານຕາບຕໍ່ເທົ້າພະລິຍາ ທັງບຸດຕາ ແລລູກເຕົ້າ ຂໍໃຫ້ໄດ້ເປັນເຈົ້າເປັນໃຫຍ່ແກ່ກວ່າຄົນທັງຫລາຍ ຄືງສຳບາຍບານລ້ຳເລີດ ຂ້າແກ້ວເກີດກາງໂຮງ ທັງລິພົບແລໄພ່ ນ້ອຍ ອາຍຸຄ້ອຍຈາກຊີວັງ ຂໍໃຫ້ອາຍຸຍືນຍາວບໍ່ນ້ອຍ ຂໍໃຫ້ໄດ້ ຮອດຮ້ອຍ ເກົ້າຂວບນິມມານ ຝູງຫມູ່ສັດຕູມານຢ່າມາບັງບຽດໄດ້ ຂໍໃຫ້ພະແກ່ນໄທ້ ມາຕັດສອງສໍລະຍານ ລົງມາໂຈມຂວັນຫລານເຈົ້າ ຂຶ້ນໃຫ້ສູງ ລົງມາຈູງຂວັນຫລານເຈົ້າຂຶ້ນໃຫ້ກວ້າງ ສິສິມື້ນີ້ແມ່ນມື້ດີ ສິສິມື້ນີ້ແມ່ນມື້ຫມັ້ນ ຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າກ້ອນຜາແອ່ນ ຫມັ້ນໃຫ້ ເຈົ້າຫມັ້ນຍິ່ງກວ່າຜາຈວງຜາຈັນ ຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າເຄືອ ເຂົາໄກລາດ ຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າອາກາດສູນຕາວັນ ຫມັນໃຫ້ເຈົ້າ ຫມັ້ນຍິ່ງກວ່າພະຈັນໃສສ່ອງແຈ້ງ ຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າ

ເອົາກວາງຍາມເດືອນສີ່ ຫມັ້ນໃຫ້ເຈົ້າຫມັ້ນ ຍິ່ງກວ່າເສົາກີ່ລູກສາວ ພະຍາແຖນ ພະຍາພົມຟາກຟ້າ ມື້ນີ້ແມ່ນມື້ສະວ້າ ຫມໍເກົ້າວ່າມື້ແຂງ ວັນດີ ວັນດີກືອະມຸດຕະໂຊກ ສິດທິໂຍກພ້ອມອຸດຕະມະມັງຄະລາ ເພິ່ນຈິ່ງໄປອາຣາດທະນາອາຈານຜູ້ສະຫລາດ ມານັ່ງອາດຄູບຂວັນ ຄູບຂວັນຂຶ້ນສະເຫມີຈອມຜາສາດ ຄູບຂວັນຂຶ້ນສະເຫມີທາດສີຈັນ ມື້ນີ້ແມ່ນມື້ສັນ ວັນນີ້ແມ່ນວັນດີ ວັນດີກືອະມຸດຕະໂຊກ ໂຕກຫນ່ວຍນີ້ ຫາກແມ່ນໂຕກໄມ້ຈັນ ຂັນຫນ່ວຍນີ້ຫາກແມ່ນຂັນໄມ້ແກ້ວ ເກົ້າແກ່ ຕົກແຕ່ງແລ້ວ ຈິ່ງໃຫ້ຂ້ອຍຄູບຂວັນ ວັນນີ້ແມ່ນວັນດີຂ້ອຍຈິ່ງສູ່ ຂວັນແກ້ວກູ່ເກີດກາງເມືອງ ບຸນເຮືອງງານຍິ່ງຍ້ອຍ ທັງຫນຸ່ມນ້ອຍ ແລປານກາງ ທັງສາວຮາມແລເກົ້າແກ່ ພໍ່ແມ່ພ້ອມລູກເຕົ້າແລບາລີ ທັງເສດກີແລທວຍຄ້າ ກ້ອນຫນ້າຫມູ່ຊາວເມືອງ ບຸນເຮືອງງານ ເລີດຟ້າ ຂຶ້ນຂີ່ຄໍມ້າແກ້ວເອີ້ນຮຽກເອົາຂວັນ ມາພະລັນພ່ຳພ້ອມ ເກົ້າແກ່ມານັ່ງລ້ອມເຈົ້າຢູ່ສອນລອນ ເຫມີດແຕ່ເຮົາທີ່ນີ້ແລ້ວ ຍໍພາຂວັນຂຶ້ນບໍ່ມີແກນ ເຫມີດແຕ່ເຮົາທີ່ນີ້ແລ້ວ ຍໍພາຂວັນຂຶ້ນກໍບໍ່ມີໄດ້ ຂໍແກ່ພະແກ່ນໃຫ້ເຈົ້າຜູ້ມີບຸນ ມາຊອຍຄູບຊອຍຍໍຂວັນຫລານເຈົ້າເນີ ຂ້ອຍຈັກເຊີນເອົາເຈົ້າມາດຟ້າ ຜູ້ຢູ່ກ້ຳຝ່າຍເຫນືອ ມາຊອຍຄູບຊອຍ ຍໍຂວັນຫລານເຈົ້າເນີ ຂ້ອຍຈັກເຊີນເອົາບາງຄຳເຜືອ ຜູ້ຢູ່ກ້ຳຝ່າຍໃຕ້ ມາຊອຍຄູບຊອຍຍໍຂວັນຫລານເຈົ້າເນີ ຂ້ອຍຈັກເຊີນເອົາບາງຄຳເຜືອ ຜູ້ຢູ່ທໍອາສະຫນາຄຳ ມາຊອຍຄູບຊອຍຍໍຂວັນຫລານເຈົ້າເນີ ສິບຫມໍສະດຳລຸກມາແຕ່ພູນ້ອຍ ມາຊອຍຄູບຊອຍຍໍຂວັນຫລານເຈົ້າເນີ ສາມສິບຫມໍນ້ອຍລຸກມາແຕ່ເມືອງສວງ ມາຊອຍຄູບຊອຍຍໍຂວັນ ຫລານເຈົ້າເນີ ສີ່ສິບຫມໍຫລວງລຸກມາແຕ່ເມືອງຟ້າ ມາຊອຍຄູບຊອຍຍໍ

ຂວັນຫລານເຈົ້າເນີ ຫ້າສິບຫມໍກ້າລຸກມາແຕ່ພູຫໍພູໂຮງ ມາຊອຍຄູນ ຊ່ອຍຍໍຂວັນຫລານເຈົ້າເນີ ຫມໍອັນນີ້ບໍ່ແມ່ນຫມໍກະຈາ ຄາຖາອັນນີ້ ແມ່ນຄາຖາຕັ້ງແຕ່ເຄົ້າ ຫມໍເກົ້າແຕ່ບູຮານ ເຈັດໃບຍໍເພິ່ນຊິເອົາມາ ຫມູນເຈົ້າແລ້ວ ເຈັດໃບຄູນເພິ່ນຊິເອົາມາຄ້ຳເຈົ້າແລ້ວ ນ້ຳເຕົ້າແກ້ວ ອອກບໍ່ກິນເຢັນ ກໍຫາກເປັນດີຫລີເຫມືອນບາະສີຢູ່ຟາກຟ້າ ມີຂ້ອຍຂ້າ ຫລວງຫລາຍ ງົວຄວາຍຫລາຍຄັບຄອກ ຊ້າງມ້າອອກເນືອງນັບ ຄຳຕັບແກ້ວປະເສີດ ຫນໍ່ແກ້ວເກີດກາງເມືອງ ຄຳເຫລືອງໄມ້ໂພໃຊ ສີໄວວອນແກ່ນຫນ້າ ຄົນແກ່ກ້າຫູລະມານ ຄົນຫານນັ້ນແມ່ນທ້າວ ສັງຄີບ ກີບມ້າແກ້ວອວນເອົ້າຄູນຂວັນ ມາເຢີຂວັນເອີຍ! ຂວັນເຈົ້າໄປ ປູກພູເປັນຮາກກໍໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປປູກຫມາກເປັນໃບ ກໍໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປປູກຫົວສີໃຄຂຽວອອນ ກໍໃຫ້ມາສາ ມື້ນີ້ວັນນີ້ ມານຳຫາງຄົນທ່ອງ ມານຳປ່ອງຄົນທຽວ ມາກິນເອົ້າຕົ້ມ ແລເອົ້າຫວານ ມາກິນນ້ຳຕານແລນ້ຳອ້ອຍ ຫມໍເກົ້າເອີ້ນຈ້ອຍໆ ຂວັນເຈົ້າໃຫ້ຕ່າວມາ ມາເຢີຂວັນເອີຍ! ຂວັນໃນ ແລະ ຂວັນນອກ ຂວັນຂອກ ແລຂວັນກາງ ຂວັນແອວບາງກົມກິ່ວ ຂວັນທ້ອງຫົ້ວ ແລຮາວນົມ ຂວັນຜົມດຳດູອາດ ຂວັນປາກຕ້ານຈາລະຈາ ຂວັນຕາ ແລຂວັນຄິ້ວ ຂວັນນິ້ວແລຂວັນແຂນ ຂວັນຂາແພນກາງໄຫລ່ ລະໃຫມ່ນັ້ນຂວັນຫູ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ ກິນເອົ້າຜີ ໃຫ້ເຈົ້າຮາກ ຄ້ຽວຫມາກຜີໃຫ້ເຈົ້າຄາຍ ໃຫ້ເຈົ້າຄືນມາດາຍທ້ອງເປົ່າ ໃຫ້ເຈົ້າມາສືບສ້າງດອມແມ່ມານດາ ທັງປິດຕາແລເຊື້ອໂຄດ ເຈົ້າຢ່າ ໄດ້ກົ້ວໂກດໂກທາ ໃຫ້ເຈົ້າມາຮັກສາຕົນຕົວເຈົ້າ ຕາບຕໍ່ເທົ້າເຫຍລະຄາ ກໍຂ້າເທີ້ນ.

# ຄໍາສູ່ຂວັນຫລວງ

ສີສີສິດທິພະພອນ ບໍວອນແວນວິເສດ ວັນນີ້ເປັນວັນດີ ຂວັນຫົວເຈົ້າຫນີຈັກເຂົ້າມາສູ່ ມາຢູ່ເນື້ອອຸ່ນຄີງຄວນ ສາມສິບຂວັນເຈົ້າໄປຢູ່ດອມເສື້ອ ກໍໃຫ້ຄືນມາ ຂວັນຫນຶ່ງຜີປອບເຊື້ອເອົາໄປ ກໍໃຫ້ຄືນມາ ຂວັນເກສາເກດເກົ້າ ກໍໃຫ້ຄືນມາ ຂວັນຫູຕາໄປຢູ່ດອມນາກ ກໍໃຫ້ຄືນມາ ຂວັນຄິ້ວປາກໄປຢູ່ດອມແກຸນ ກໍໃຫ້ຄືນມາ ຂວັນຫູຕາໄປຢູ່ດອມແລນໃນຊຸ່ງ ກໍໃຫ້ຄືນມາ ຂວັນໄປຢູ່ແຫວຮຸ່ງດອມຜີ ກໍໃຫ້ຄືນມາ ຂວັນໄປຢູ່ໃນມຸ້ງສອງດາງ ກໍໃຫ້ຄືນມາມື້ນີ້ວັນນີ້ ຂ້ອຍຈັກເຊີນເອົາຂວັນຕີນມືທ່ຽວຫລິ້ນກໍໃຫ້ຄືນມາ ຂວັນຢູ່ແອ່ນສາຍຕາ ກໍໃຫ້ຄືນມາ ຂວັນຂັນທາທັງຫ້າ ກໍໃຫ້ຄືນມາມື້ນີ້ວັນນີ້ ຂວັນຫົວໄປຢູ່ບໍາຣູດອມເຫມັ້ນ ກໍໃຫ້ຄືນມາ ຂວັນຫົວໄປຢູ່ພູເກື່ອນຊ້າງ ກໍໃຫ້ຄືນມາ ຂວັນຂ້າງໄປຢູ່ດອມນາກສອງຫາງ ກໍໃຫ້ຄືນມາ ຂວັນຫົວໄປຢູ່ດອມນາງນາກສີ່ຫົວຫ້າເກົ້າ ກໍໃຫ້ຄືນມາມື້ນີ້ວັນນີ້ ມາເຢີຂວັນເອີຍ! ມານຸ່ງເສື້ອແລຜ້າຜືນໃຫມ່ ແຕ່ງໄວ້ກ້າຮັບເຈົ້າຊາວຂວັນອັນຕລາຍະສວາຫະສັບພະໂພຍໄພ ອັນຕະລາຍທັງຫລາຍ ກໍໃຫ້ຫາຍເສຍມື້ນີ້ວັນນີ້ ມາເຢີຂວັນເອີຍ ມາກິນເຂົ້າຕົ້ມແລຂອງຫວານ ມາກິນນໍ້າຕານແລເຂົ້າກ້ອນ ອັນຫອມຂ້ອນໃຫ້ມາກິນ ຢ່າໄດ້ຫນີເປັນຜີດອມເພິ່ນໃຫ້ເຂົ້າມາຢູ່ໃນຄີງຢ່າໄດ້ໄຄຄາ ຄໍາພະພຸດທະເຈົ້າສັ່ງສອນ ຈັກກືກຄ້ອນກຸມພັນ ໃຫ້ເຈົ້າຄືນມາຈໍາເລີນຂັນທັງຫ້າ ຄືນມາຫາຂອງຫອມອັນເອົາແຕ່ງໄວ້ກ້າ ມາທະລົງເສື້ອຜ້າຜືນຢູ່ເມືອງຟ້າຄ່າແສນເມືອງ ຢ່າໄດ້

ເຄືອງຄຳເຮຣ້ອນ ຜັດຜ່ອນຜ້າສະໃບບາງ ຢ່າໄດ້ຄຶດເກີງບາງຜີພີ່ນ້ອງ ມາທະລົງອາຄະຕາວົງສາແຕ່ງໄວ້ກ້າ ຢ່າໄດ້ຫລົງເອົ້າປ່າຊ້າ ແລກອງຟອນ ໃຫ້ເຈົ້າຄືນມາຫມັ້ນແສນປີ ໃຫ້ເຈົ້າຄືນມາດີແສນຊົ່ວ ເຈົ້າຢ່າໄດ້ໂສກເສົ້າເທົ້າຫ້າຜັບພະວັດສາ ສະມັນຕາອາຄົມພົມມະສະ ວາຫຸມ ຂ້າຈັກເຊີນຂວັນຫົວໃຫ້ແລ່ນມາເຕົ້າ ວັນນີ້ຈັກເຊີນຂວັນຫົວເຈົ້າ ໃຫ້ຮີບເອົ້າມາໂຮງ ຂວັນເຈົ້າໄປຕົກປ່າໄລ່ກໍໃຫ້ນຳໄປຫາ ຂວັນເຈົ້າຕົກ ປ່າເລົາປ່າຄາໃຫ້ໄປນຳເອີ້ນນຳຮຽກ ມາເຢີຂວັນເອີຍ, ຂວັນຫົວໄປເອົ້າ ຊອງແກຸນນັ່ງ ໃຫ້ເອົາມາວັນນີ້ ຂວັນຫົວໄປເອົ້າຕັ່ງແກຸນເລົາ ໃຫ້ເອົາມາວັນນີ້ ຂວັນຫົວໄປຂຶ້ນໂຮງແກຸນເກົ້າ ໃຫ້ເອົາມາວັນນີ້ ຂວັນຫົວໄປຂຶ້ນໂຮງເຈົ້າແກຸນຫລວງ ໃຫ້ເອົາມາວັນນີ້ ຂວັນຫົວໄປປູກ ພູເປັນຮາກ ໃຫ້ເອົາມາວັນນີ້ ຂວັນຫົວໄປປູກຫມາກເປັນໃບ ໃຫ້ເອົາມາວັນນີ້ ຂວັນຫົວໄປເອົາສະເຫມນພັບຍອດ ໃຫ້ເອົາມາວັນນີ້ ຂວັນຫົວໄປລອບລີ້ພູຜາ ໃຫ້ເຈົ້າແຕ່ງຄູຟ້າຜ່າໄປນຳເອົາມາ ຂວັນຫົວ ໄປເອົ້າງ່າໄມ້ໃຫ້ເຈົ້າແຕ່ງຂວານສິບ ໃຫ້ເຈົ້າໃຊ້ ຫມໍ່ຫລວງຜູ້ແຮງຄື້ນ ຄືນລຸກ ໃຫ້ເອົາມາວັນນີ້ ໃຫ້ເຈົ້າໃຊ້ຫມໍ່ເກົ້າຜູ້ແຮງປຸກຄືນຕື່ນ ໃຫ້ເອົາມາມື້ນີ້ ເທບພະເຈົ້າອົງຫນຶ່ງຊື່ເທບບັນດານ ເທບພະເຈົ້າ ກ້ວນສອງຊື່ວາ ລົມຜານຟ້າ ເທບພະເຈົ້າກ້ວນສາມຊື່ວາ ຂວັນຢ້ານ ຍິນໃຈກົວ ຂວັນຫົວໄປຢູ່ຕົ້ນແສນຫມອກ ໃຫ້ໄປຊອກເອົາມາວັນນີ້ ຂວັນອອກບອກຟ້າໄປຢູ່ດອມຜີລົມ ໃຫ້ເອົາມາວັນນີ້ ຂວັນຫົວໄປເອົ້າ ຫມັ້ນບາງໄຄ ໃຫ້ເອົາມາວັນນີ້ ຂວັນຫົວໄປເອົ້າໄທບາງໄອ ໃຫ້ເອົາມາ ວັນນີ້ ຂວັນຫົວເຈົ້າໄປເກັບດອກໄມ້ຮອງໄທ້ຢູ່ດອມຫມູຜີພາຍ ໃຫ້ເອົາ ມາວັນນີ້.

ໂອມ ສິດທິສະວາຫຸມ ເທບພະເຈົ້າອົງຫນຶ່ງ ຊື່ເທບບັນດານ ເທບພະດາອົງກ້ອນສອງຊື່ວ່າ ລົມຜ່ານຟ້າ ໃຫ້ໄປຊອກເອົາຂວັນມາ ຂວັນໄປຢູ່ພູຜາແລເກື່ອນກ້ຳ ທ່ານ້ຳແລເມືອງຜີ ເຈົ້າຈິ່ງເອົາໄມຕີ ສິບກ້ອຍ ນຳເອົາຂວັນອອນນ້ອຍຄືນມາ ແມ່ນວ່າເກີດເປັນເທວະດາ ແລຄຸດນາກ ເຈົ້າຈິ່ງແຕ່ງຂອງຝາກໄປຫາ ທັງວິງສາແລພີ່ນ້ອງ ໃຫ້ໄປຄ້ອງເອົາມາ ແມ່ນເອົາຈັບໃສ່ຄາໃຫ້ເຈົ້າຊື້ ຄວນຄ່າລ້ານຄ່າຕື້ ໃຫ້ເຈົ້າແກຸມ ຄວນຄ່າແສນໃຫ້ເຈົ້າຊື້ ຄວນຄ່າຕື້ໃຫ້ເຈົ້າຕື່ມສົມບັດ ໃຫ້ເຈົ້າໄປຊື້ເອົາມາຢ່າໄດ້ວາງເສຍດາຍເປົ່າ ເຈົ້າຈິ່ງໄປອົບຂວາຍ ເອົາມາໃຫ້ໄດ້ ຄ່ອຍຊອກໃຊ້ເອົາມາເທົ້າວັນເທີ້ນ.

ຈະຕຸໂລກອາດອົງຫລວງ ທັງກົງກວງບໍລົມເຈົ້າຟ້າ ຜູ້ແກ່ກ້າ ກວ່າຜີທັງຫລາຍ ຈິ່ງຍາຍຍັງຢູ່ດ້ວຍຜ້າຜ່ອນແລຄວງຈຸ້ມ ລົງມາຄຸ້ມ ແກ່ຄົນທັງຫລາຍ ໃຫ້ຫາຍຄຳກັງວົນແລເດືອດຮ້ອນ ສັບພະໂພຍ ພະຍາດອ້ອນໃຫ້ຫາຍໄປ ທັງພາຍໃນແລະພາຍນອກ ຕັ້ງໄວ້ຂອກ ພໍແສນ ບໍວອນແວນວິເສດຈິບເຜດພ້ຽງອາຄົມ ບໍລົມບໍພິດ ຈິ່ງປະສິດ ພະພອນອັນນີ້ໃສ່ຫົວແຫ່ງຜູ້ອ້າ ວ່າໃຫ້ອ້າເປັນຂຸນ ຮຽກຂວັນໃຫ້ມາເຕົ້າ ເຂົ້າມາທຽມຕົນຕົວ ຂວັນຫົວແລຂວັນແກ້ມ ຂວັນປາກແຍ້ມຈາລະຈາ ຂວັນຕາແລຂວັນຄິ້ວ ຂວັນນິ້ວແລຂວັນແຂນ ຂວັນຂາແພນບ່າໄລ່ ລະໃຫມ່ນັ້ນຂວັນຫູ ຂວັນດັງດູດົມກິ່ນ ຫມັກຫມິ່ນຂວັນຫົວໃຈ ຂວັນໃນ ແລຂວັນນອກ ຂວັນຂອກແລະຂວັນກາງ ຂວັນແອວບາງກົມກິ່ວ ຂວັນທ້ອງນ້ອຍທີ້ວແລຮາວນົມ ຂວັນຜົມດຳດູອາດ ອ້ອຍຈັກເຊີນ

ເອົາເຈົ້າມາດຟ້າມາຊ່ອຍຮຽກເອົາຂວັນ ມາເຢີຂວັນເອີຍ ຂວັນເຈົ້າຮູ້ໄປຫລົ້ນໃນດົງກໍໃຫ້ມາວັນນີ້ ຂວັນເຈົ້າຮູ້ໄປອຶດກະຊິງຢູ່ໃນພຸ່ມ ກໍໃຫ້ມາມື້ນີ້ ຂວັນເຈົ້າຮູ້ໄປຫລົ້ນວິໃສສຸດເຂດ ກໍໃຫ້ມາມື້ນີ້ ຂວັນເຈົ້າຮູ້ໄປຫລົງປະເທດລວ່າເມືອງຜີ ກໍໃຫ້ມາມື້ນີ້ ຂວັນເຈົ້າຮູ້ລັກຫນີໄປເກີດ ກໍໃຫ້ມາມື້ນີ້ ຂວັນເຈົ້າຮູ້ໄປເອົາກຳເນີດໃນເມືອງຄົນ ຂວັນເຈົ້າຮູ້ໄປປະຕິສົນໃນທ້ອງໃຫມ່ ກໍໃຫ້ມາວັນນີ້ ຂວັນເຈົ້າຮູ້ໄປທາງໃຕ້ທາງບົນ ກໍໃຫ້ມາວັນນີ້ ຂວັນເຈົ້າຮູ້ໄປທ່ຽວຊົມຊາຍ ຂວັນເຈົ້າຮູ້ມັກຫລາຍຊົມຊູ້ ກໍໃຫ້ມາວັນນີ້ ຂວັນເຈົ້າຮູ້ໄປຫລົ້ນດອນຜີ ກໍໃຫ້ມາວັນນີ້ ຂວັນເຈົ້າຮູ້ໄປຫລົ້ນຢູ່ຂ່ວງຄີລີແລປ່າຊ້າງ ຂວັນເຈົ້າໄປກາວອ້າງດອນເງືອກແລງ ກໍໃຫ້ມາວັນນີ້ ມາເຢີຂວັນເອີຍ ເຈົ້າບໍ່ມາເຈົ້າຟ້າເພີ່ນຊິນຳຊອກຫາເຈົ້າມາແລ້ວ ເຈົ້າບໍ່ມາເທບພະດາເພີ່ນຊິນຳໄປຜູກເອົາເຈົ້າມາແລ້ວ ມາເຢີຂວັນເອີຍ ເຈົ້າບໍ່ມາລວງຍອດແກ້ວ ເພີ່ນຊິຫນ່ຽວຂວັນເຈົ້າຄືນມາ ມາເຢີຂວັນເອີຍ ມາຢູ່ເຮືອນເສົາແກ່ນມາຢູ່ແທ່ນສະນອນພຽງ ມາຢູ່ຕຽງໄມ້ແກ້ວ ມາຮອດແລ້ວຈິ່ງສະຫວັດດີ ມາເຢີຂວັນເອີຍ ມາຢູ່ຫນັກໃນເນື້ອ ມາຢູ່ເຮື້ອໃນຄີງມາຢູ່ອີງເອື້ອມໄຫລ່ ມາຢູ່ໃຕ້ສະຖານຄຳ ມາຢູ່ນຳຍາດສືບສ້າງໃຫ້ເຈົ້າໄດ້ຕຸ້ມໄພກວ້າງຝູງຫມູ່ວົງສາ ທັງທາສີທາສາຂ້ອຍຂ້າທັງຊ້າງມ້າຫມູ່ງົວຄວາຍ ທັງຕານາຍພໍ່ແມ່ ທັງເຖົ້າແກ່ ແລະຂຸນກວານ ທັງລູກຫລານເຫລັບຫລ້ອນ ປັດຂອດພ້ອມກັນມາພາຂວັນດາແຕ່ງແລ້ວ ຖວາຍແກ່ແກ້ວຂວັນມາ ຫາຂອງກິນດີທຸກເຍື່ອງ ເຄື່ອງຂົ້ວໃສ່ໃນພາ ມາລາຫອມຮວງເຮົ້າ ເຊີນຂວັນເຈົ້າ

ເຂົ້າສະເຫວີຍ ໃຫ້ສະບາຍເບີຍບານຍິ່ງ ທຸກສິ່ງພ້ອມສັບດານ ໃນສະຖານຮຽງຄູ່ ພ້ອມກັນຢູ່ຍືນຍາວ ສົມພາວພຽງຄາຄາດ ທຸກຂາຂາດແວນໄກ ໂລຄາໄພຄາດຈາກ ເຄາະທ່າງພາກຫາຍໄປ ສັບພະໂພຍໄພພົ້ນໂສກ ສັບພະໂຍກກວ້າງຢູ່ສະຫວັດດີກໍຂ້າເທີ້ນ ມາເຢືຂວັນເອີຍ. ມາຢູ່ຫນີ້ກິນເຂົ້າແດກງາ ມາຢູ່ຫນີ້ກິນປາກັບໄຂ່ ມາຢູ່ຫນີ້ເອື້ອມໄຫລ່ມານດາ ດອມທາສີທາສາຂອງເຈົ້າ ມາຢູ່ເລົ້າ ດອມເຂົ້າກ່ອມກະເຊີ ຝົນຊີຕົກຢ່າໄດ້ດຸ່ງໄປຫນ້າ ຟ້າຊີຮ້ອງຢ່າໄດ້ ດຸ່ງໄປໄກ ຂວັນເຈົ້າໄປຫລິ້ນດອມທ້າວນົກເຂົາ ຂວັນເຈົ້າໄປຫລິ້ນ ດອມນາງນົກຈອກ ຂວັນເຈົ້າໄປຫລິ້ນຢອກດອມນົກອິນຊີ ຂວັນເຈົ້າ ໄປນອນໃນຜີປ່າຊ້າ ກໍໃຫ້ມາມື້ນີ້ ຂວັນເຈົ້າໄປທ່ຽວຫລິ້ນດອມທ້າວ ນົກຍາງ ຂວັນເຈົ້າໄປທ່ຽວຫລິ້ນດອມນາງນົກເຈົ່າ ຂວັນເຈົ້າໄປຫລິ້ນ ດອມເຜົ່າຜີພາຍ ໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນດອມຊາຍຜີເປົ້າ ຂວັນເຈົ້າໄປຫລິ້ນດອມເຖົ້າຜີໂພງ ຂວັນເຈົ້າໄປຫລິ້ນນຳໂຮງນາງໄອ່ ກໍໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນເຊີງໃຊ້ເມືອງແມນ ຂວັນເຈົ້າ ໄປຫລິ້ນເມືອງແຖນທ້າວເງືອກ ຂວັນເຈົ້າໄປຫລິ້ນດອມເງືອກ ລາຍລວງ ຂວັນເຈົ້າໄປຫລິ້ນດອມລວງຫລາຍຫລາກ ກໍໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນດອມຊາກຜີຕາຍ ຂວັນເຈົ້າໄປຫລິ້ນດອມຍາຍຜີປ່າ ຂວັນເຈົ້າໄປຫລິ້ນດອມທ່າຜີເມືອງ ກໍໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນ ໃນເຄືອເຫລົ່າຮ້າງ ຂວັນເຈົ້າໄປຫລິ້ນດອມຊ້າງສາມຫົວ ຂວັນເຈົ້າ ໄປຫລິ້ນດອມງົວແມ່ລານ ກໍໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນດອມຄວາຍ ເຂົາຕູ້ແລເຂົາແຫລມ ຂວັນເຈົ້າໄປຫລິ້ນດອມຊູ້ທາງໄກ ຂວັນເຈົ້າໄປ



ການນຸ່ງກື່ຕາມປະເພນີບູຮານ ໃນພິທີແຫ່ພະບາງ ເພື່ອລົງທົດສົງ
ໃນວັນປີໃຫມ່ລາວ ທີ່ ແຂວງຫລວງພະບາງ

ຫລິ້ນດອນຊູ້ໃນທໍຜີເຊື້ອ ຂວັນເຈົ້າໄປຫລິ້ນດອນດິນດ່ານນ້ຳ ຂວັນເຈົ້າໄປຫລິ້ນໃນກ້ຳປ່າແຊງ ກໍໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນເມືອງແມນແຖນຫຼໍ່ ຂວັນເຈົ້າໄປຢູ່ດອນໝູ່ແຖນຫລວງ ຂວັນເຈົ້າໄປຢູ່ດອນນາງມາດຟ້າ ກໍໃຫ້ມາວັນນີ້ ຂວັນເຈົ້າໄປຫລິ້ນດອນທ້າວແຖນເລີງ ຂວັນເຈົ້າໄປແລ່ນຫລິ້ນເມືອງເທິງເປັນເທດ ຂວັນເຈົ້າໄປແລ່ນຫລິ້ນດອນເຜດກົກໄຮ ຂວັນເຈົ້າໄປຫລິ້ນດອນໄຊຊີຊ້າງ ກໍໃຫ້ມາວັນນີ້ ມາເຢີຂວັນເອີຍ ຂວັນເຈົ້າໄປຢູ່ດອນກວາງຟານ ຂວັນເຈົ້າໄປແລ່ນຫລິ້ນກາງລາດ ຂວັນເຈົ້າໄປເຝົ້າຜາສາດຢູ່ດອນໝູ່ນາງຜີ ກໍໃຫ້ມາວັນນີ້ ມາເຢີຂວັນເອີຍ ມາພະລັນຢ່າຊ້າ ຄັນເຈົ້າມາຮອດແລ້ວຈິ່ງໃຫ້ຢູ່ສະຫວັດດີ ມີສີໃສບໍ່ເສົ້າ ຕາບຕໍ່ເທົ້າຫ້າພັນພະວັດສາ (ກໍອ້າເທີ້ນ). ຈັດຕາໂຮທຳມາ ວັດທັບຕິ ອາຍຸວັນໂນສຸຂັງພະລັງທ້ອນ.

## ຄຳສູ່ຂວັນກວຽນ

ໂອກາສະຽ ເກີງກາລ ລະດູດີກີປີໃໝ່ ເຈົ້າຜູ້ໃຫຍ່ກ່າຍລາສີພະພູມີສຸລິເຍດ ເກີງລະດູເຂດເດືອນສາມ ນາງສີມງາມກວຽນແກ້ວອາບນ້ຳແລ້ວເຈົ້າຈິ່ງລາພອນ ລົມພັດວອນແຫ້ງແລ້ວ ເອົາຈິ່ງເອົາພາແກ້ວເບີກຄູນຂວັນ ມີພູພັນແລໝາກຈິບ ທັງຜ້າຜ່ອນແລໃບສີມີທັງຫວີແລຕ້າງແກ້ວ ລວດແລ້ວກະຈົກແຍງ ມີທັງຂອງຫອມແລແປ້ງປິ່ນ ດູເລີດລົ້ນຝ້າຍຜູກແຂນ ມີທັງແຫວນແລສາຍສ້ອຍຝູງຕູ້ຂ້ອຍຈິ່ງມາຫາ ມີທັງບຸບຜາດວງດອກໄມ້ ມີທັງທຽນທູບໄຕ້

ໃສ່ໃນພາ ມີທັງສຸລາແລໄກ່ຕົ້ມ ມີທັງຫວານແລສົ້ມເຂົ້າຕົ້ມແລເຜືອກ ມັນ ສັບພະສັນມີທຸກສິ່ງ ມີທັງກ້ວຍອ້ອຍສິ່ງນານາ ມາຊູອັບຈັດຫາມາ ສະພາດ ເຂົາຈຶ່ງໄປອາລາດທະນາອາຈານຜູ້ສະຫລາດ ມານັ່ງອາດ ຄູນຂວັນ ວ່າ :

" ສີສີສິດທິພະພອນ ມະຫາໄກສອນຫອມຮ່ວງເຮົ້າ ຂ້ອຍຈັກ ເຊີນຂວັນເຈົ້າໃຫ້ເຂົ້າມາ ວ່າ ມາເຢີຂວັນເອີຍ ຂວັນເຈົ້າໄປແກ່ໄມ້ ໃນດົງເດີນຍາກ ກໍໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປແກ່ໄຫແລແກ່ເຂົ້າ ກໍໃຫ້ມາສາມື້ນີ້ ຂວັນເຈົ້າໄປແກ່ເຂົ້າສິ່ງເລົ້າເຈັກໄຫລາວ ແລຫວຽດ ມອນ ກໍາປູເຈຍອິງອາດ ກໍໃຫ້ມາສາມື້ນີ້ ສີສີມື້ນີ້ແມ່ນມື້ດີ ຂ້ອຍຈັກ ບາສີກວຽນແກ້ວ ສູ່ຂວັນແລ້ວໃຫ້ເຈົ້າຢູ່ຄູນເຮືອນ ຫລາຍລະດູປີເດືອນ ຂວບເຂົ້າ ໃຫ້ເຈົ້າຮັກສາໄວ້ງົວຄວາຍ ໃຫ້ຢູ່ສຸກສະບາຍທັງຄູ່ ໃຫ້ອາຍຸຫມັ້ນຍືນຍາວ ຝູງລາວໄຫຈີນມາທ່ຽວຈ້າງ ໃຫ້ເຈົ້າຄ່ອຍພຽນ ອິດ ທາງຄິດເດີນຍາກເຈົ້າຢ່າລື້ມສະແຄງ ຄັນວ່າໄດ້ແກ່ຂອງຫນັກ ໃຫ້ເຈົ້າໄປຄ່ອຍໆ ຝູງເດັກນ້ອຍເຂົາຂີ່ໄປນໍາ ເຂົາບໍ່ຮູ້ຢໍາເກງເຈົ້າຢ່າ ໄດ້ຄຽດຄ້ອຍ ຝູງເດັກນ້ອຍເຈົ້າຢ່າໄດ້ຫົວຊາ ຄົນທັງຫລາຍເຂົາມາ ທ່ຽວຈ້າງ ໃຫ້ເຈົ້າຄ່ອຍຢູ່ສ້າງຫລາຍປີ ມີລັດສະຫມີເຮືອງຮຸ່ງ ຝູງຕູ ຂ້ອຍກໍໃຫ້ຢູ່ເຢັນໃຈ ຄວາມຈັງໄຣຢ່າໄດ້ເກີດ ໃຫ້ປະເສີດເຫມືອນດັ່ງ ແກ້ວໄພທູນ ໃຫ້ເຈົ້າຄໍ້າຄູນເຮືອນເປັນດັ່ງແກ້ວທໍາມະລາດ ຢ່າໃຫ້ເຈົ້າ ມີຄໍາອຸບາດ ທຸກຍາກຈັກເມື່ອຈັກຍາມ ຕາມວາລະຄາຖາ ວ່າ ອາຍຸ ວັນໂນ ສຸຂັງ ພະລັງ ກໍຂ້າເທີ້ນ ".

# ຄຳສູ່ຂວັນເຂົ້າຂຶ້ນເລົ້າ

ສີສີມື້ນີ້ແມ່ນມື້ດີ ສີສີປີນີ້ແມ່ນປີເຮົາ ປູ່ພະເຈົ້າໃຫ້ຂ້ອຍຄູນຂວັນ ກ່ວາດີມື້ນີ້ວັນນີ້ ຫມໍສ້າງໄຮ່ໄດ້ເຂົ້າຮວງຫນາ ກ່ວາດີມື້ນີ້ວັນນີ້ ຫມໍສ້າງນາໄດ້ເຂົ້າຮວງກ້ອນ ກ່ວາດີມື້ນີ້ວັນນີ້ ເອົາບ່າວເຂົ້າຮຽງສາວ ກ່ວາດີມື້ນີ້ວັນນີ້ ຟັນຕາວໃຫ້ແຜ່ກ່ວາແມ່ນມື້ນີ້ວັນນີ້ ເອົາຊ້າງເຂົ້າມາໂຮງກ່ວາມື້ນີ້ວັນນີ້ ທ້າວບຸນເຮືອງຂຶ້ນຜາສາດ ກ່ວາມື້ນີ້ວັນນີ້ ຜູ້ສະຫລາດເຂົ້າມາຟັງທຳ ກ່ວາມື້ນີ້ວັນນີ້ ເຈົ້າໄດ້ເງິນຄຳແສນ ກ່ວາມື້ນີ້ວັນນີ້ ທ້າວເຮັດໄຮ່ປູກແຕງ ກ່ວາມື້ນີ້ວັນນີ້ ລູກໄພ່ເຂົ້າມາເບີກບາສີ ກ່ວາມື້ນີ້ວັນນີ້ ເສດຖີເບີກເງິນກ່ວາມື້ນີ້ວັນນີ້ ສີສີມື້ນີ້ແມ່ນມື້ດີ ສີສີມື້ນີ້ແມ່ນມື້ອະມຸດຕະໂຊກ ໂຕກຫນ່ວຍນີ້ແມ່ນໂຕກໄມ້ຈັນ ຂັນຫນ່ວຍນີ້ແມ່ນຂັນໄມ້ແກ້ວ ຂຸນນາງດາແຕ່ງແລ້ວຈິ່ງຍໍມາ ໄຊຍະຕຸພະວັງ ໄຊຍະມັງຄະລາ.

ໂອກາສະໆ ເກີງກາບລະດູເດືອນຫ້າ ຟ້າຮ້ອງເດືອນຫົກ ຝົນຕົກຟ້າຮ້ອງຮ່ຳ ຝູງຫມູ່ທາສາ ຝູງຊາວນາຈິ່ງຫາພ້າແລຂວານ ດາບຄົມບາງເຂັ້ນໃຫມ່ ແບກໄປໃສ່ປ່າໄມ້ໄພຫນາ ຟັນພະນຽງໄກ ຕັດກົກສິນປາຍ ຮວາຍເປືອກເສຍເອົາແຕ່ແກ່ນ ປຸນແມ່ນແລ້ວຈິ່ງແບກອອກມາ ເກີງເຄຫາໄວ້ໃຕ້ລາງ ຝູງຫມູ່ຊ່າງເຂົາຈິ່ງມາດູ ປຸກສິ່ວຮໍ່ເຂົ້າຮາກ ມີທັງງ້ອນໄກໃຫຍ່ພະນຽງຫນາ ແບກໄປນາໄຮ່ແຮກ ມີທັງແອກອັນງໍ່ ພາດຄໍຄວາຍເຂົ້າຮອງ ເຊືອກໄກຄອງເພື່ອ

ຄວາຍແຮງ ກືກດິນແຂງ ເພື່ອຮາກໄມ້ ໄກລວດໄວ້ຫລາຍວັນ ຄາດຍາຍໄປທົ່ວໄຮ່ ຫວ່ານເຂົ້າໃສ່ໃນຕົມ ພະບໍລົມຕົກແຕ່ງ ຮາກອອກແບ່ງເປັນໃບ ພ້ອມກັນໄປຫລົກອອກ ຫາຕອກມາກົ້ວ ມີດປາດລື້ວໃບເສຍ ເຂົາຈິ່ງເອົາໄປຕັ້ງໄວ້ເຫລືອຫລາຍເດຍລະດາດ ຄາດແລ້ວ ຫາກລາກມາດຳ ປັກໃສ່ຕົມໃສ່ພົງກໍຈິ່ງໄດ້ຫລາຍຕົ້ນ ດຳຫົນຫນ້າແລຫົນຫລັງ ໄປມາຕາມພາສາໄຫນາໄຫນອກ ດຳຂອກ ແລດຳກາງ ດຳເຫີງນານກໍຈິ່ງໄດ້ຫລາຍຕົ້ນ ເຖິງຫລາຍເດືອນ ກໍຈິ່ງປິ່ງ, ເຂົ້າປິ່ງແລ້ວກໍຈິ່ງຊົງໃບວີ ລົມພັດໃບຢູ່ຊີຊວ່າໆ ຝູງເດັກນ້ອຍ ຈິ່ງໄປໄລ່ນົກຈິບນົກຈາບ ບໍ່ໃຫ້ມາກິນນອກກິນຂອກແລກິນກາງ ຫມູ່ກວາງຟານບໍ່ໃຫ້ມາກິນໃກ້ ເຖິງເດືອນສິບສອງຈິ່ງເຫລືອກົກຫ່ຽວ ເຂົ້າກ່ຽວແລ້ວຕາກໄວ້ຊູ່ໄຮ່ຊູຄັນ ເຖິງສອງສາມວັນຈິ່ງກູ້ແລ້ວ ຄັນຫລາວແກ້ວຫາບໃສ່ໄວ້ໃນລານ ກອງກັນຂຶ້ນເຫມືອນດັ່ງກອງທາດ ຮອດມື້ອາດແລວັນດີ ເຂົາຈິ່ງມ້າງເຈົ້າລົງມາ ຄ້ອນສັ້ນເຂົາຈັກຕີ ຄ້ອນຮີເຂົາຈັກຟາດ ເຂົາຈິ່ງເອົາເຈົ້າຕັ້ງໄວ້ໃນລານສະພາດ ເດຍລະດາດເຫລືອຫລາຍ ເຂົາຈິ່ງເອົາຄວາຍມາຢຽບຍີຍ່ຳ ຜົງຫຸລີກົ້ວໄງ່ ວຽນເບື້ອງຊ້າຍຄືຄວ່າ ວຽນເບື້ອງຂວາຄືຄວ້າງ ມີເບື້ອງຊ້າຍກືເຊືອກຄວາຍ ມີເບື້ອງຂວາກືຂໍຕີເຕາະແລຕີຕ່ອຍ ຕີຄ່ອຍແລຕີແຮງ ຕີປັກໆແລແປັກໆ ຕີແຫລກແລ້ວຈິ່ງເອົາຄວາຍ ອອກ ເຂົາຈິ່ງບອກວ່າ ເກົ້ານີ້ເປັນເກົ້າໄຮ່ແລພໍ່ນາ ຈິ່ງໄປຫາຫນາມ ຊະຄອງແລຫນາມໄຜ່ ມາກວັດໄກວ່ເຟືອງເສຍ ແລ້ວຈິ່ງບອກເມຍ ແກ່ນແກ້ວອັນຢູ່ໃນເຮືອນ ໃຫ້ຫາເຫລົ້າເຕົ້າດອງຢາ ຫາລຸງຕາ

ແລພີ່ນ້ອງ ເອົາໃສ່ກ້ອງກອງຂຶ້ນໃຫ້ເປັນກອງ ແລ້ວຈຶ່ງໄປຂົນຂວາຍ ຄືລາແລຫມ້ຽງຫມາກ ມີທັງຕອງອ່ອນແລຕອງຂຽວ ມີຍອດຄູນ ຍອດຍໍຂຽວອ່ອນ ມີທັງກະຈວນຈັບຄູ້ຫອມງາມ ຕາມພາສາຂອງໂລກ ມີທັງໄກ່ຜູ້ໂອກບໍລະບວນ ສາດສິນຄວນປູລາດ ມີທັງຂໍຄືອາດຄັນຫລາວ ປາຍແຫລມຍາວຊາກລາກ ມີທັງເສື້ອຜ້າອາພອນຂາວດີ ມີທັງທຽນ ທອງສີຕິດໄຕ້ ມີທັງຝ້າຍຂາວອ່ອນເປັນມຸງຄຸນ ບຸງສີ່ຫນ່ວຍຕັ້ງໄວ້ ສວຍລວຍເດຍລະດາດ ຂັນໄຂວ່ຂວ້າງເຫລືອຕາ ຕາແຫລວຫນ້າງົວ ປັກໄວ້ສີ່ແຈເລົ້າ ດູເຮືອງງາມອົງອາດ ຈຶ່ງໄປລາດທະນາອາຈານ ຜູ້ສະຫລາດ ມານັ່ງສູດຄູນຂວັນ ວ່າ "ສິສິມື້ນີ້ແມ່ນມື້ຫມັ້ນ ໃຫ້ເຈົ້າ ຫມັ້ນປານກ້ອນຜາແອ່ນ ໃຫ້ເຈົ້າແກ່ນປານແທ່ນຜາຈວງຜາຈັນ ໃຫ້ເຈົ້າຫມັ້ນປານພູຜາຫລວງໄກລາດ ໃຫ້ເຈົ້າຫມັ້ນປານອາກາດ ສູນຕາເວັນ ວ່າມາເຢີຂວັນເອີຍ! ນາງເອົ້າຈ້າວເອົ້າຫນຽວ ກໍໃຫ້ມາ ມື້ນີ້ວັນນີ້ ຕົ້ນຂຽວໆເອົ້າກ່ຳ ຕົ້ນຕ່ຳໆເອົ້າຫມາກເຂືອ ກໍໃຫ້ມາສາ ມື້ນີ້ວັນນີ້ ຮວງເຜືອເອົ້າປ້ອງແອ້ວແລເອົ້າແຂ້ວງູ ສະພູ່ພ້ອມປັດຫນີ ຮວງຣີເອົ້າອີ່ວນ້ອຍ ແລະ ເອົ້າຂີ້ຄວາຍ ເມັດສວຍລວຍເອົ້າງວງຊ້າງ ເມັດຂວາງເອົ້າລວດທຽນ ລາຍວຽນນັ້ນເອົ້າຫມາແງ່ງ ເອົາຈຶ່ງແບ່ງ ໄວ້ໃຫ້ຫມູ່ໄທໄກ ກໍໃຫ້ມາສາມື້ນີ້ວັນນີ້ ເອົາແຕ່ເອົ້າກະເຊີຮວງມຸ່ຍ ອຸ່ຍຮຸ່ຍນັ້ນແມ່ນເອົ້າດໍແດງ ເມັດແດງນັ້ນແມ່ນເອົ້າເລືອດແຮດ ເມັດແຈດນັ້ນແມ່ນເອົ້າຫນຽງເປັດ ເມັດກີ່ນັ້ນແມ່ນເອົ້າຫມາກກອກ ເມັດບອກເອົ້າມັນຫອມ ກິນນົວແມ່ນເອົ້າປາດ ສະພາດພ້ອມເອົ້າ ຫມາກໂພ ຫອມພາໂລເອົ້າງວງຊ້າງເຕັມໄຮ່ ກໍໃຫ້ມາສາມື້ນີ້ວັນນີ້

ວ່າມາເຍີຂວັນເອີຍ ໃຫ້ເຈົ້າມາຈາກປາກມັ່ງໂຕລາຍ ໃຫ້ເຈົ້າມາຈາກປາກຄວາຍຕົວເຂົາງ້ອງ ໃຫ້ເຈົ້າມາຈາກປາກຊ້າງຕົວງາໂງ້ງ ໃຫ້ເຈົ້າມາຈາກປາກກວາງແລກະຕ່າຍ ໃຫ້ເຈົ້າມາຈາກປາກຊ້າງພ່າຍລາຍວັນ ໃຫ້ເຈົ້າມາຈາກປາກຫມູຊຸັບແລປູຄາບ ໃຫ້ເຈົ້າມາຈາກປາກນົກຈິບແລນົກຈາບ ຄາບເຂົ້າຄວ່າຫນີໄປ ໃຫ້ເຈົ້າມາຈາກປາກນົກເຂົາຂຽວຄາບໄປຈັບຮຽວແລປາຍພຸ່ມ ກໍໃຫ້ມາສາມື້ນີ້ວັນນີ້ ໃຫ້ເຈົ້າມາເຕັມເຍຍແລເຕັມເລົ້າ ໃຫ້ເຈົ້າຢູ່ສະຫວັດດີ ກິນສິບປີຢ່າໄດ້ບົກ ຈົກສິບປີຢ່າໄດ້ລົງ ມາເຍີຂວັນເອີຍ ໃຫ້ເຈົ້າມາຈາກປາກບົ້ງຕົວຄໍແດງ ໃຫ້ເຈົ້າມາຈາກປາກແມງແຄງຕົວປີກອ້າ ກະຊາຂາດກະບຸງແຄງ ຄັນຫລາວແທງຫັກຄາບ່າ ຂວັນເຈົ້າຢ່າຕົກໃຈເນີນາງເນີ. ອີ່ຕອງກົງເຂົາລັກແກວ່ງ ຕົ້ນອ້ອຍລໍາທໍ່ຂາ ກໍໄດ້ມາທີ່ນີ້ແລ້ວຕົ້ນອ້ອຍປາລໍາທໍ່ແຄ່ງ ກໍໄດ້ມາທີ່ນີ້ແລ້ວ ຕຶບເຂົ້າແຕ່ງໃສ່ພາຂວັນ ກໍໄດ້ມາທີ່ນີ້ແລ້ວ ມີທັງພູພັນແລຫມາກອອບ ມີທັງກະຈວນຄູ້ຫອມງາມ ຕາມພາສາຂອງໂລກ ມີທັງໄກ່ຜູ້ໂອກຕົວທໍ່ນົກຍູງແລຫ່ານ ບິນຜ່ານຟ້າກີ້ກ່າງແຫລວມັນ ມີທັງເຜືອກຫົວຊຸັບມັນຫົວຊ້ອງ ພີ່ນ້ອງແວນຫລາຍ ຕາຍາຍແວນມາກ ມາເຍີຂວັນເອີຍມາຢູ່ເລົ້າພົ້ນແຜ່ນສະບອນພຽງ ເພິ່ນຕັກເຈົ້າໄປຕໍາຢ່າໄດ້ຫັກສັກກະລັບເຈົ້າຢ່າໄດ້ພົ້ງ ເທໃສ່ດົ້ງເຈົ້າຢ່າໄດ້ບິນຫນີ ໃຫ້ເຈົ້າດຶງກັບມາເຫມືອນດັ່ງຜາສາດ ໃຫ້ເຈົ້າກວາດກັບມາເຫມືອນເກົ້າສາວຫນຸ່ມ ໃຫ້ເຈົ້າຕ້ອນກັບມາເຫມືອນດັ່ງຕ່ອນເງິນລຽງ ເມັດຫນຶ່ງຕັກໄປທານທຸກຄ່ໍາເຊົ້າ ເຫລືອຫລາຍ ເມັດຫນຶ່ງຕັກໄປຊື້ຄວາຍຕົວເຂົາຊ້ອງ

ເມັດຫນຶ່ງຕົກໄປຊື້ລ້ອງເກົ້າກຳ ເມັດຫນຶ່ງຕົກໄປຊື້ຄຳໃຫ້ໄດ້ເກົ້າຫມື່ນ ເມັດຫນຶ່ງຕົກໄປຊື້ເຂົ້າໃຫ້ໄດ້ເກົ້າຫມື່ນມາເຍຍ ເມັດຫນຶ່ງຕົກໄປຊື້ເມຍໃຫ້ໄດ້ເມຍມາຢູ່ເຮືອນຂາຍເຂົ້າ ເມັດຫນຶ່ງຕົກໄປເອົາຜູ້ເກົ້າໃຫ້ມາເລົ່າຂາຍຂອງ ມາເຢືອວັນເອີຍ ເພິ່ນຕົກໃສ່ດົ້ງຢ່າໄດ້ບິນຫນີ ໃຫ້ເຈົ້າມາລ້ຽງຊີວິດອິນຊີຂອງໂລກ ບໍລິໂພກລ້ຽງພະພຸດທະສາດສະຫນາທຸກຄ່ຳເຊົ້າ ຕາບຕໍ່ເທົ້າຫ້າພັນພະວັດສາ ກໍຂ້າເທີ້ນ ".

## ຄຳສູ່ຂວັນນາກ

ສີສີສິດທິໄຊຍະມັງຄະລາບາຄີ ສະຫວັດດີຍາວໂຍດ ເຄາະຮ້າຍໂທດຫາຍຫນີ ອັນຕະລາຍລາຄີຫາຍສວ່າງ ເຂັນຂວ່າງຮ້າຍສູຫນີ ເຄາະເຂັນມີວິບາດ ບໍລິສາດຫນີໄກ ພຸດທາໄປຂົ່ມແພ້ເດຊະຝູງມານ ທຳບັນດານຜັນກີບ ເຄາະຮ້າຍຮີບເຊຫນີ ສັງຄາຕີຝູງຮ້າຍ ເດຊະຍ້າຍຝູງເຂັນ ຢ່າໄດ້ເປັນອັນຕະລາຍສັງຈັກສິ່ງ ທຸກຮ້າຍຍິ່ງທຽມຕົນໃຈກັງວົນເດືອດຮ້ອນ ສັບພະເຄາະຂ້ອນຫາຍຫນີ ອັດຊະໃນວັນນີ້, ( ຕີລ້ອງ 3 ບາດ ).

ສີສີສຸມັງຄະລະ ສຸພະສະຫວັດດີວິເສດ ອະຕິເລກໄຊຍະສີສະຫວັດດີຈົ່ງມີ ແກ່ຂ້າທັງຫລາຍ ທັງບໍລະເທພານາກຄຸດ ເທພະບຸດເທພະຍຸດາ ອິນພົມຍົມມະລາດຈະຕຸລາທັງສີ່ ທຸກທີ່ພ້ອມຈັກກະວານກັບທັງພູມສະກາບເຈົ້າທີ່ ຈົ່ງພ້ອມກັນມາຊົມຊື່ນຍິນດີ ເຊິ່ງມັງຄະລະ

ລາສີອັນວິເສດ ວັນນີ້ພະເກດເຂົ້າສູ່ລາສີ ເປັນວັນດີສຸດຂະໜາດ ອິນທະພາດພ້ອມໄຕຍາງ ທັງນາວາງຄາດຄູ່ ພ້ອມກັນຢູ່ສອນລອນ ອາທິດຈອນຈັນທະລືກ ອັງຄານກຶກມະຫາໄຊ ພຸດພະຫັດໄປເປັນໂຊກ ສຸກເສົາໄດ້ອະມຸດຕະໂຊກພ້ອມລັກຂະນາ ວັນນີ້ຕາມຕຳລາວ່າໄດ້ລືກ ກຶກໜ່ວຍຊື່ວ່າ ອຸດຕະມະລາສີ ເປັນວັນດີວັນດີກືອະມຸດຕະໂຊກ ອຸດຕະມະໂຍກ ອຸດຕະມະລາຊາ ອຸດຕະມະໄຊຍາ ອຸດຕະມະເສດກາ ວັນນີ້ເປັນລາພະອັນລ້ຳເລີດ ປະເສີດມຸງຄຸນ ປຸນແປງດີແຕ່ງແລ້ວ ພາຂວັນແກ້ວຍົກຍໍມາ ມີທັງທ້າວພະຍາເສນາແລອາມາດ ນັກປາດ ພ້ອມມວນມາ ທັງລຸງຕາແລພໍ່ແມ່ ເຖົ້າແກ່ແລວົງສາ ພີ່ນ້ອງພ້ອມກັນ ມາສອນລອນກ້ວນໜ້າໄຫລຫລັ່ງເທມາ ທັງຍິງຊາຍແລສາວບ່າວ ໃຈຄຶດອ່າວຍິນດີ ເພື່ອຈັກມາບາສີເຈົ້ານາກ ເຈົ້າຈັກໄດ້ພັດພາກຈາກ ເຄຫາ ຈັກໄດ້ລາປິດຕາມານດາອອກໄປບວດ ສ້າງຜະໜວດ ໃນສາສະໜາ ເຈົ້າກໍຄຶດເຫັນສັງຂາລາເປັນທຸກອັງ ອະນິດຈັງອະນັດ ຕາບໍ່ໝັ້ນທ່ຽງ ຮູ້ບິດບ່ຽງໄປມາ ເປັນອະນິດຈາບໍ່ເລີກແລ້ວ ບໍ່ໄດ້ວ່າ ໜຸ່ມແກ່ແລຊະລາ ຮູ້ບັງເກີດໂລຄາແລພະຍາດ ບໍ່ໄດ້ຂາດຈາກ ມໍລະນາ ເຈົ້າກໍ່ຄຶດເຖິງຄຸນມານດາໄດ້ລ້ຽງມາເປັນອັນຍາກ ລ້ຽງລຳບາກ ທຸກວັນຄືນ ແຕ່ຢູ່ໃນອຸທອນທ້ອງແມ່ ລຳບາກແທ້ເຫິງນານ ເຈຍລະການໜັກໜ່ວງທ້ອງ ກິນຂອງເຜັດແສບຮ້ອນແມ່ກໍຄ່ອຍ ພຽນອິດ ເຈົ້າກໍໄດ້ຢູ່ກຳນົດສິບເດືອນບໍລະບວນ ກ້ວນທົດສະມາດແລ້ວ ເຈົ້າກໍຄາດແຄ້ວອອກຈາກທ້ອງແມ່ມານດາ ມື້ມທ້ອງມາເລີດແລ້ວ ລູກແກ້ວແມ່ເປັນຊາຍ ຝູງຕາຍາຍກໍຊົມຊື່ນ ຍໍຍົກຍື່ນເຈົ້າອອກມາ

ລາງຄົນຫາໄມ້ແລ້ວຈຶ່ງຕັດສາຍແຮແຜ່ສາຍບື ລາງຄົນກໍ່ບວຍນ້ຳມາລ້າງ ລາງຄົນເອົາຜ້າຜືນກວ້າງມາຕຸ້ມຫໍ່ ແມ່ກໍອູ້ມເຈົ້າໃສ່ໃນອົກຍົກໃສ່ໃນເພົາ ແມ່ຈຶ່ງເອົາເຂົ້າປ້ອນ ແລວັນແລສາມຄາບ ອາບນ້ຳແລວັນແລສາມທີ ແມ່ກໍຜັດສີແລລູບໄລ້ ແມ່ກໍເອົາໃຈໃສ່ທຸກຄ່ຳເຊົ້າບໍ່ມີຄາ ຄັນວ່າເກືອງລະດູປີໃຫມ່ມາຮອດແລ້ວ ຟ້າແຜດຮ້ອງສຽງດັງແມ່ກໍອູ້ມເຈົ້າໃສ່ໃນອົກ ຍົກເຈົ້າໃສ່ໃນອູ່ ອູ້ມຊະຊູກິນນົມ ແມ່ກໍຊົມລູກແກ້ວລ້ຽງໃຫຍ່ແລ້ວພໍແລ່ນໄປມາ ຕາມພາສາເດັກອ່ອນ ຊະຊ່ອນໜ້າແລ້ວໃຫຍ່ເປັນຄົນ ຄຳກົງວົນຄັ່ງແຄ້ນ ຫນັກຫນ່ວງແຫນ້ນໃນໃຈຄຶດອາໄລບໍ່ແລ້ວ ຄຶດແຄ້ວໆຢາກໄປບວດໃນສາສະຫນາ ຄຶດເກືອງຄຸນບິດາມານດາເປັນອັນຍິ່ງ ເຈົ້າກໍຈຶ່ງອຳລາ ອຸດສາຫະເອົ້າໄປບວດສ້າງຜະຫນວດເປັນສາມະເນນ ເຈົ້າກໍຮຽນສິກຂາບົດທົດສະທຳໄດ້ແລ້ວ ອາຍຸໄດ້ 20 ປີຄັກແນ່ ຝູງພໍ່ແມ່ຈຶ່ງຈັດຫາ ບອກສັດທາເກືອງຍາດພີ່ນ້ອງ ຕາມພວກພ້ອງມິດສະຫາຍ ບາງພ່ອງສັດທາຫລາຍໄດ້ເສື່ອສາດ ເປັນຂອງອາດປູນອນ ບາງພ່ອງມີສັດທາໄດ້ຈີວອນແລຜ້າພາດ ບາງພ່ອງໄດ້ຜ້າອາດທັງໄຕ ດ້ວຍໃຈໃສສຸດຂະຫນາດບາງພ່ອງໄດ້ບາດແລຜ້າສະບົງ ບາງພ່ອງໄດ້ກົງແລນ້ຳເຕົ້າ ໄມ້ຄອນເທົ້າແລຄັນຕາລະປັດ ມີດຕັດແລກ່ອງເຂັມ ສໍດຳແລບໍລິຂານບໍລິໂພກບາງພ່ອງໄດ້ໂຕກກ້ອຍແລຄັນທີ ເຫລັກຈານດີອັນຄົມກ້າ ກັບທັງເສື່ອສາດອາດສະຫນາ ທັງຄີລາແລຫມ້ຽງຫມາກ ດູຫລາກດ້ວຍບໍລິຂານ ເປັນຂອງທານອັນລ້ຳຍິ່ງ ເພື່ອຢາກເຫັນຫນ້າພະແກ້ວມິ່ງຈອມໄຕ ຂໍຢ່າໄດ້ທົວລະໄວຢູ່ໃນໂລກ ຂໍໃຫ້ພົ້ນຈາກໂສກໂສກາ

ໃຫ້ໄດ້ເກີດໃນຕຸສິຕາລ້ຳເລີດ ເມືອງແກ້ວເກີດນິລະພານ ເປັນທີ່ສຸກສຳລານລືເດດ ຂໍໃຫ້ພົ້ນຈາກທຸກຂະເວດຢູ່ສະຫວັດດີ ສັດຕະທຳມາວຸທິທຳທັງເຈັດປະການ ຄື ອາຍຸ ວັນນະ ສຸຂະ ພະລະ ອະໂລຄະຍະກ້ອນຫ້າ ປະຕິພານະກ້ອນຫົກ ອະທິປະໄຕຍະກ້ອນເຈັດ ຈົ່ງສະເດັດເຂົ້າມາຮັກສາຍັງຂັນທະສັນດານແຫ່ງເຈົ້າ ຕາບຕໍ່ເທົ້າຫ້າພັນພະວັດສາ ກໍຂ້າເທີ້ນ " (ຕີຄ້ອງ 3 ເທື່ອ ຊະໂຍ 3 ເທື່ອ).

ສີສີສຸມັງຄະລະສຸຂະສະຫວັດດີ ບັດນີ້ຂ້ອຍຈັກເຊີນເອົາຂວັນສິນສີເຈົ້າບາກມາເຕົ້າ ຂ້ອຍຈັກເຊີນຂວັນນາກເຈົ້າເຂົ້າມາໂຮມ ອັດຊະໃນມື້ນີ້ວັນນີ້ ມາເຢີຂວັນເອີຍ ຂວັນເຈົ້າໄປຢູ່ນ້ຳນຳປາ ໃຫ້ມາມື້ນີ້ວັນນີ້ ຂວັນເຈົ້າໄປຢູ່ໃນນາຕ່າງດ້າວ ກໍໃຫ້ມາມື້ນີ້ວັນນີ້ ຂວັນເຈົ້າໄປຢູ່ນຳທ່ານອິສວນ ກໍໃຫ້ມາມື້ນີ້ວັນນີ້ ຂວັນເຈົ້າໄປຊົມຊື່ນສາວອອນນ້ອຍ ກໍໃຫ້ມາມື້ນີ້ວັນນີ້ ມາເຢີຂວັນເອີຍ ເຈົ້າຢ່າໄດ້ໄປຊົມຊະນີໄກ່ແກ້ວຂັນແຈ້ວໆຢູ່ຄູຫາ ຢ່າໄດ້ໄປຊົມຫວຍຄຳແລເນື້ອເກື່ອນ ຢ່າໄດ້ໄປເປັນເພື່ອນຝູງຜີ ຂວັນເຈົ້າຢ່າໄດ້ໄປເດີນຄີລີນອກເຂດ ຂວັນເຈົ້າຢ່າໄດ້ໄປເດີນປະເທດທ່ຽວທາງໄກ ຢ່າໄດ້ໄປຫລົງໄຫລຊົມພົງໄພແລປ່າໄມ້ ຢ່າໄດ້ຫລິ້ນນຳຫມູ່ລີງລົມ ຢ່າໄດ້ໄປຊົມລີງກັງຄ່າງເກົ້າ ຫມູ່ນົກເຄົ້າແລເສືອສີງ ຄວາຍກະທິງແລແຮດຊ້າງ ຢ່າໄດ້ຫລົງເຂົ້າເກື່ອນກວ້າງກ້ຳຫມູ່ຄູຫາ ທັງວັງປາແລສະໃຫຍ່ ຊື່ນຊ້ອຍໃສ່ມາຍາ ດູຕະການຕາງາມສະພູ່ ຜັກບົ້ງແລບົວທອງ ທົ່ງເກສອນຫອມຮ່ວງເຮົ້າ ຂວັນນາກເຈົ້າຈົ່ງເຂົ້າມາໂຮມ ອັດຊະໃນ ມື້ນີ້ວັນນີ້ ໃຫ້ມາຢູ່ໃນໃຈທຸກເມື່ອ

ໃຫ້ມາຢູ່ໃນເບື້ອງທຸກຍາມ ຢ່າໄດ້ມີຄວາມກັງວົນແລເດືອດຮ້ອນ ຢ່າໄດ້ຄຶດຄັ່ງຂ້ອນຫລືລະໄທ ໃຫ້ເຈົ້າມາຮຽນພະວິໃນປີດົກ ອັດກະໄຂ ເຮືອງຮອດຮຸ່ງແຈ້ງຈອດໂສດາ ໃຫ້ເຈົ້າໄດ້ເທສະໜາສອນສັ່ງ ເປັນເຈົ້ານັ່ງພິຈານ ຂໍໃຫ້ມີອາຍຸຍືນນານເປັນສົມພານຍົດກວ້າງ ຢູ່ສືບສ້າງໃນທໍາ ຈັດຕາໂລທໍາມາ ວັດກັບຕິ ອາຍຸ ວັນໂນ ສຸຂັງ ພະລັງ ຂໍໃຫ້ເຈົ້າມີອາຍຸຍືນໄດ້ຮ້ອຍຂວບພະວັດສາ ມີເດຊາເຮືອງຮາບ ຊະນະ ຜາບແພ້ຝູງໝູ່ໂພຍໄພ ຢ່າໄດ້ມີຈັງໄຮມາບຽດ ຢ່າມີຜູ້ຄຽດໃຫ້ ແລຫິງສາ ໃຫ້ມີໃຈກູນາຍິ່ງກວ່າເກົ່າ ຈິ່ງໃຫ້ໄດ້ເປັນເຈົ້າຜ່ານທັງຍົດ ປາກົດເລື່ອງລືຊາ ໃນສາສະໜາຂອງພະພຸດທະເຈົ້າ ໃຫ້ເຈົ້າມີເດຊະ ເໝືອນດັ່ງແສງສຸລິຍະອາທິດ ປະສິດທິເຕໂຊວະໂລທະລາທິລາດ ເປັນດັ່ງອິນທາທິລາດທ້າວພູມິນ ທັງແດນດິນໂອຍອ່ອນນ້ອມ ທຸກທ່ານ ທ້າວສາທຸການ ມາອວຍພອນຊົມຊື່ນ ມາຍື່ນໃຫ້ຂອງດີ ຍໍເອງຄະຊຸລີ ຕັ້ງຕໍ່ ຄິດຮອດຮໍ່ສົມພານ ກວາຍອາຫານທຸກເມື່ອ ເຮືອງເຮື່ອແກ້ວ ເງິນຄໍາ ບູຊາທໍາທຸກຄໍ່າເຊົ້າ ຕາບຕໍ່ເທົ້າເກີງຊີວັງ ໃຫ້ມີຫວັງ ຄອງສືບສ້າງທຸລະອ້າງສາມປະການ ຮຽນກໍາມັດການໄດ້ກີ້ກ້ອນ ໄດ້ຄົບລ້ວນທຸກອັນ ແປດໝື່ນສີ່ພັນພະທໍາມະຂັນໃຫ້ເຈົ້າຮູ້ ຢ່າໄດ້ຫົວຄຶດປູ້ຫົງປັນຍາ ມີສາມັກຄາພຽງພໍ່າພ້ອມ ໃຈອ່ອນນ້ອມ ໃນທໍາ ເຈົ້າຢ່າໄດ້ຄຶດນໍາທາງໂລກ ຂໍໃຫ້ພົ້ນຈາກໂສກໂສກາ ໃຫ້ເຈົ້າມີ ຄວາມສຸຂາຢ່າເດືອດຮ້ອນ ທຸກຄໍ່າເຊົ້າບໍ່ຄາດຄາ ຊະຍະຕຸພະວັງ ຊະຍະມັງຄະລະ ຊະຍະມະຫາມຸງຄຸນ ສຸກສົມບູນຈິ່ງມີແກ່ເຈົ້າ ທຸກປະການກໍຂ້າເທີ້ນ" ( ຕີຄອງ 3 ເທື່ອ ຊະໂຍ 3 ບາດ ).

# ຄຳສູ່ຂວັນນ້ອຍກ່ອນກິນດອງ

ສີສີວັນນີ້ເປັນວັນດີ ວັນດີກີອະມຸດຕະໂຊກ ໂຕກຫນ່ວຍນີ້ແມ່ນໂຕກໄມ້ຈັນ ຂັນຫນ່ວຍນີ້ແມ່ນຂັນໄມ້ແກ້ວ ຂຸນບາງຕົກແຕ່ງແລ້ວຈຶ່ງຍໍມາຮຽກເອົາຂວັນວ່າ ຕາຕະປິຍະປຸຕຕາ (ກູ້າຜູ້ຍິງ ເອທິ ອຳມະປິຍາ ທິຕາ) ປູເລກະມະມະ ປາລະມິງ ທະທະຍັງເມ ພິສັນເຈກະກະໂລກະ ວະຈະນັງ ມະມະ ອາຄັດສາທີຕິ ດັ່ງນີ້ເປັນເຄົ້າ ຂວັນເຈົ້າຈິ່ງເຂົ້າມາ ບັດນີ້ຂ້າຈັກເລົ່າພາກພື້ນດາລາ ແຕ່ລາວແມ່ເຈົ້າກີພາປະຕິສົນທິຮ່ວມທ້ອງເຂົ້າສູ່ທ້ອງແມ່ມານດາ ຄັນນານມາໄດ້ສິບເດືອນລ່ວງແລ້ວ ແມ່ເຈົ້າຈິ່ງສະເທືອນເຈັບປວດທ້ອງ ຝູງພີ່ນ້ອງແລ່ນມາຫາ ຝູງຕານາຍເພິ່ນກໍແລ່ນມາລ່ຳ ແມ່ເຈົ້າຊ້ຳເຈັບຢູ່ຮີຮັກຮີຮ່ອນ ນອນແລ້ວລຸກ ແມ່ເຈົ້າເຈັບຊີຊຸກຊີເຊື່ອນ ໃຫ້ກິ້ງເກື່ອນໄປມາເຫມືອນດັ່ງຊີວາຈັກຂາດ ເປັນດັ່ງຈັກມໍລະນາດມ້ຽນຕາຍໄປ ແມ່ກໍທົນບໍ່ໄຫວຈິ່ງມ້ອຍ ນ້ອຍຫນຶ່ງບໍ່ມີນານ ແມ່ເຈົ້າຈິ່ງປະສູດລູກມົ້ມທ້ອງເປັນຜູ້ຍິງຕົກຫງາຍ ເປັນຜູ້ຊາຍຕົກຂວ້ຳ ແມ່ເຈົ້າເປັນບ້າຢູ່ງົມງົວບາງພ່ອງມືຄວາຫາສາຍແຮ່ ບາງພ່ອງແຜ່ສາຍບື ສອງມືໂຈມລູບລ້າງ ແລ້ວຈິ່ງໂຈມໃສ່ດັ້ງກວ້າງໄປຜອກຜີພາຍ ໄປຜາຍຜີປ່າ ົນົກເຄົ້າມັນຮ້ອງກູກເອົາຂວັນວ່າ ກູຫຸກ ກູຫຸກ ກຸກກູ ກຸກກູ ແມ່ນລູກສູເອົາສາມື້ນີ້ ກາຍມື້ນີ້ເມືອຫນ້າລູກກູ ແມ່ຈິ່ງລ້ຽງແລດູ ແມ່ອູ້ມຊູໃສ່ອູ່ ແມ່ເຈົ້າຈິ່ງຢູ່ໃນໄຟ ໄກວເຈົ້າໄປມາຢູ່ຕີຕ້ອນໆ ແມ່ເຈົ້າກິນນ້ຳຮ້ອນປາກເປື່ອຍໂພງສຸກ ໄຟແຮງລຸກ ແມ່ເຈົ້າທົນຫວຍ ອໍລະທົນ

ອິລະຫວາຍຫິວໃຈໄກວໄດ້ດ່າປ້ອຍ ຂວັນອ່ອນນ້ອຍຄຳຫລ້າຢ່າໄດ້ວອນ ເຈົ້າຈິ່ງນອນຢູ່ອູ່ສາຍຝ້າຍ ເຈົ້າຈິ່ງຍ້າຍມາຢູ່ອູ່ສາຍໄໝ ພໍ່ແມ່ເຈົ້າຍັງຈິງໃຈຮັກຮໍ່ ອັນນີ້ຫາກແມ່ນພໍ່ປິດຕາເຈົ້າແລ້ວ ອັນນີ້ຫາກແມ່ນແມ່ສາຍໃຈເຈົ້າແລ້ວ ນົມແມ່ຮ້າວໃຫ້ເຈົ້າຄ່ອຍກິນ ຜ້າຫົ່ງຜືນແມ່ຫົ່ມເຈົ້າໄວ້ ເດິກຊຸກໃຊ້ເຈົ້າຈິ່ງຕື່ນກິນນົມ ແມ່ເຈົ້າຍັງຊົມບໍ່ເປີດ ແມ່ກຳເນີດຈິ່ງຫນ່າຍຈິ່ງຊັງ ເຮັດລັງຕັງເອົາຈິ່ງໄດ້ໄລ່ອ້າ ເຈົ້າມາແລ້ວໄດ້ມາເກີດເປັນລູກແກ້ວພໍ່ແມ່ບຸນເຮືອງ ຄຳເຫລືອງສີລະໃຫມ່ ໂພໄຊໃຫ້ມາຄູນມາເຢີເຈົ້າເນີ ໂພສີໃສຈະແຈ່ມຫນ້າ ຜູ້ແກ່ກ້າໃຫ້ມາຄູນມາເຢີເຈົ້າເນີ ໃຫ້ຮີບນຳເອົາຂວັນຄືນມາຢ່າໄດ້ທ່ຽວ ພໍ່ແມ່ເຈົ້າຍັງຫນ່ຽວວອນຫາ ທັງຕາຍາຍແລປູ່ຍ່າ ພ້ອມກັນເອີ້ນຊີຊວ່າເອົາຂວັນ ວ່າ ອາຄັດສາທິ ຂວັນເຈົ້າຈິ່ງເຂົ້າມາດູລາລູກຮັກແມ່ມື້ນີ້ແມ່ນມື້ດີ ວັນມີສີເຄົ້າຄື່ນ ເປັນວັນດີລື່ນລ້ຳຜາບແພ້ສັດຕູ ຫມໍຄູນດູວ່າເປັນໂຊກ ວັນຫາຍໂສກສັບພະໂລຄາ ຂວັນເຈົ້າຈິ່ງມາຈະເລີນສີສົມບັດເທົ້າເກົ້າ ຕາບຕໍ່ເທົ້າຊົ່ວຊີວັງ ຝົນຕົກເຈົ້າຢ່າໄດ້ໄປກິນນ້ຳຮອຍກະຮອກ ແດດອອກເຈົ້າຢ່າໄດ້ໄປກິນນ້ຳຮອຍງົວຮອຍຄວາຍ ພໍ່ແມ່ເຈົ້າຍັງອົບຂວາຍມັກໃຄ່ ເຈົ້າໃຫຍ່ແລ້ວພໍ່ແມ່ສອນໃຫ້ນອນກໍນອນ ພໍ່ແມ່ສອນໃຫ້ຮູ້ກະຮູ້ ຢ່າໃຫ້ເສຍແຮງແມ່ເຈົ້າລ້ຽງອົດສະແຄງຄືຄູ່ ໃຫ້ເຈົ້າກິນນົມ ຄີງເຈົ້າກົມໃຜເຫັນກໍຢາກສອງ ເນື້ອເຈົ້າຄ່ອງໃຜເຫັນກໍຢາກລໍ່າແຍງ ຍາມມື້ແລງໃຜກໍຢາກພໍ້ຫນ້າ ກ້ວນລະດູຟ້າສັງຂານປີໃຫມ່ມາແລ້ວ ເກິ່ງເດືອນສາມດອກຮັງຮີ່ ເກິ່ງເດືອນສີ່ດອກຮັງບານຕະການງາມຊ້ອຍໂຊດ ມີທັງດອກແກ້ວໂກດຍາງຫລວງ

24/VII ຫ້າມຈຳໜ່າຍ

ມີທັງດອກຈວງຈັບສະພູ່ ມີທັງດອກພວງພີ່ສາລະພີຈຳປາ ປີກັບນີກາ ກ້ານເກດ ດອກຍາງເທດພ້ອມອາຣວນ ດອກດຳດວນທັງດອກແກ້ວ ບານບໍ່ແລ້ວທັງດອກສາມປີ ບານມີສີເມງມາດ ສະພາດພ້ອມບານາ ແມ່ເຈົ້າຈຶ່ງຊວນສາວຣາມມາຣວດຣ້ອຍ ຝູງສາວບ່າວສຳນ້ອຍ ເຂົາແລ່ນຢູ່ແຊວໆ ແລ້ວຈຶ່ງຢາຍເປັນແຖວເປັນກອງ ເອົາມາໃສ່ຂັນ ກະຍອງສູ່ຂວັນເຈົ້າຊາຍຫນຸ່ມນ້ອຍ (ກຸ້າຍິງ ຍິງຫນຸ່ມນ້ອຍ) ທັງເສື້ອຜ້າລາຍພອກພ້ອຍແມ່ເຈົ້າຫົ່ມເອົາຂວັນ ເອຫີ ຕາຕະ ປີຍະ ປຸດຕາ (ຍິງ ເອຫີ ອຳມະ ປີຍະ ທີຕາ) ອາຄັດສາຫີ ເຈົ້າຈຶ່ງມາຢູ່ດີ ໃນບຸລີແລຜາສາດ ເປັນເຈົ້າອາດພັນປີ ຄວາມຊົ່ວຫນີຄາດແລ້ວ ຫາຍໂສກແລ້ວເຫຍລະຄາ ຄວາມເຈັບຕາແລປວດທ້ອງ ໂພຍພະຍາດ ຕ້ອງຢ່າໃຫ້ມີ ຈົ່ງໃຫ້ນອນຫລັບດີ ຢູ່ໃນຫ້ອງ ປະເທດຫ້ອງທີ່ນອນຕົບ ເຮືອນມຸງຄຸນຫລັງໃຫຍ່ ພໍແຫລ່ງຊ້າງພັງພາຍ ຈົ່ງໃຫ້ສຸກສະບາຍ ເທົ້າເກົ້າ ຕາບຕໍ່ເທົ້າເຖິງພັນປີ ສິນບັດມີບໍ່ໄຮ້ ໃຫ້ໄດ້ເປັນເຈົ້າພະຍາ ພໍ່ຊີຫາຄູ່ມາໃຫ້ຊົມຊ້ອນ ເຈົ້າຢ່າຮ້ອນໃນໃຈ ສິນບັດຫລາຍຫລັ່ງເຂົ້າ ໃຫ້ເຈົ້າມີເຮືອນຊານສົມສະການໃຫຍ່ກວ້າງ ທັງປວງຍາດມາໂຮມ ຊຸມແຊວສຽງຫົວມ່ວນ ເຈົ້າຢ່າດ່ວນນອນໃຈ ທຳອັນໃດໃຫ້ຮີຮ່ຳຫນ່ຳໆ ພ້ອມພິຈານສິນທານທຳຢ່າຂາດ ຕັກບາດພ້ອມຈັງຫັນ ເຖິງວັນສິນ ໃຫ້ຮ່ຳຮູ້ ໃຫ້ອົດສາສູ້ພາວະນາ ຈັດຕາໂລທຳມາ ວຸດທິທຳສີ່ປະການ ຄື ອາຍຸ ວັນໂນ ສຸຂັງ ພະລັງ ອາຍຸໂສດຍືນຍາວ ວັນນະພາວ ຜິວຜ່ອງ ສີເນື້ອຄ່ອງເຫລືອຫລາຍ ສຸກສະບາຍຢ່າເສົ້າ ພະລະເຂົ້າ ກຳລັງແຮງ ຄວາມແຂງແຮງຢ່າແກ່ເກົ້າ ຕາບຕໍ່ເທົ້າຊີວາ

ພັນລະບາເຮືອງຮອດ ຍານຍອດແກ້ວຕິຕິກຂາ ອະໂລຄະຍາຮຽງຮາບ ຜາບແພ້ຫມູ່ມານມາ ອໍໃຫ້ມີຍົດຖານະສັກດາລ້ຳເລີດ ສົມບັດເກີດ ອະນັນຕັງ ສັກໂກສັກກາຍັງອົງອາດ ຢາຄາດແຄ້ວວັນດີ ຈົ່ງໃຫ້ມີ ສີສະຫວັດດີເກືອງເກົ້າ ກໍຂໍາເທີ້ນ.

## ຄໍາສູ່ຂວັນບ່າວສາວເວລາກິນດອງ

ສິສິສິດທິພະພອນ ບໍວອນແວນວິເສດ ອະຕິເລກເຕໂຊ ຊະຍະຕຸ ພະວັງ ຊະຍະມັງຄະລັງ ຕະໂຕ ໂລມັງ ສຸຂັງ ພະລັງ ອາວາຫະ ວິວາໂຫ ຊະຍະມະຫາມຸງຄຸນ ວັນນີ້ແມ່ນວັນດີ ວັນດີກໍອະມຸດຕະໂຊກ ໂຕກຫນ່ວຍນີ້ແມ່ນໂຕກໄມ້ຈັນ ຂັນຫນ່ວຍນີ້ແມ່ນຂັນໄມ້ແກ້ວ ຂຸນນາງ ປຸນແມ່ນແລ້ວຈຶ່ງໄດ້ແຕ່ງພາຂວັນ ຢູ່ສະລອນຊະລ້າຍ ມີທັງຝ້າຍ ຜູກແຂນແຫວນໃສ່ກ້ອຍ ປັດນ້ອຍສ້ອຍສັງວານ ອາຫານຫລາຍ ເຫລືອຫລາກ ສັບພະພາກພ້ອມຊູອັນ ມີທັງພູພັນແລຫມາກຈີບ ຟ້າວວາງຮີບເດົາດາ ມາລາຫອມຫວງເຮົ້າ ເຫລົ້າກອງແກ້ວໃສ່ພາ ຂວັນ ພາກັບມາມ່ວນເຕົ້າ ເຂົ້າຕົ້ມກ້ວຍໃບສີ ມີທັງໄຂ່ຫນ່ວຍດີ ກ້ຽງປອດ ພະຍອດໄທ້ທັດສະພົບ ທະຍານຕົນມາແຕ່ເມືອງຟ້າ ກວັດແກວ່ງຫນ້າທັກຊື່ຂຸນສີຂຸນພັນ ສົມສີສັນງາມສະພາດ ທ່ານຈຶ່ງ ມີພະລາດຊະອາດຍາປົງ ສິດທິໄຊຍະພະພອນ ບໍວອນແວນວິເສດ ອະຕິເລກເຕໂຊ ຊະຍະຕຸພະວັງ ຊະຍະມັງຄະລັງດັ່ງນີ້ເປັນເຄົ້າ ປະກົດເຂົ້າເປັນປີ ສົມລິດທິໄຊຍະໂຊກ ປະກອບໂຍກເປັນມິ່ງເມຍຂວັນ

ຕາມສິນຄວນບູຮານແຕ່ງໄວ້ ອັນດອກໄມ້ຍົກຂຶ້ນພຽງຕາ ອັນສິນມາ ລຸງຕາເຈົ້າໂຄດ ໂພດອ້າໄວ້ເງິນຂາວ ລູກສາວກົກສາວກາງ ແລສາວຫລ້າ ເພິ່ນຄາດຄ່າກວ້າງຊ້າງສີ່ຄວາຍສາມ ສິນນາງງາມ ບໍ່ຍາກແຄ້ນດີຫລີ ປຸນແປງດີພໍ່ແມ່ ທັງເຖົ້າແກ່ແລຕາຍາຍ ຝົນຮວາຍ ຮ່ຳປີໃຫມ່ ຟ້າຮ້ອງໄຮ່ເດືອນສາມ ຝູງບ່າວຮາມມາໂອມນາງງາມ ຄ່າກວ້າງ ບໍ່ໃຫ້ຮ້າງເປັນສອງ ຂໍເປັນດອງຮັກຍິ່ງ ລູກແກ້ວກິ່ງ ຍັງປະສິງ ຝູງວົງສາຕາຍາຍເບື້ອງປູ່ ເຈົ້າຮູ້ແລ້ວຕົກແຕ່ງປຸນແປງ ແພງຄຳຮັກລູກແລ້ວ ປຸນແລ້ວຈິ່ງຍໍມາ ມີທັງອຳພາຫອມຮ່ວງເຮົ້າ ເຄື່ອງຮັບເຈົ້າເຫລືອຫລາຍ ທັງຕາຍາຍພໍ່ແມ່ ເຖົ້າແກ່ພ້ອມສາວບ່າວ ນົງຮາມ ມາຊອຍຍໍພາຂວັນເບື້ອງຂວາເຈົ້າຢູ່ລີລ້າຍ ມາຊອຍຍໍ ພາຂວັນເບື້ອງຊາຍເຈົ້າຢູ່ລີລຽນໆ ວຽນຊ້າຍແລະວຽນຂວາບັ້ນແມ່ນ ຊາຍໂຖງແຈກເຫລົ້າ ຝູງຜູ້ເຖົ້ານັ່ງຢູ່ທາງເທິງ ບັດນີ້ຂ້ອຍຈັກເຊີນເອົາ ຂວັນຜົວເຈົ້າມາຫຽມເບື້ອ ມາຢູ່ເຮືອໃນຄີງ ຂ້ອຍຈັກເຊີນເອົາຂວັນ ນາງງາມໃຫ້ເອົ້າມາຫຽມຄູ່ ທັງຂວັນເຈົ້າຜູ້ເປັນຜົວມາເຢືຂວັນເອີຍ ໃຫ້ເຈົ້າມາເຊີຍຊິມຂວັນຄູ່ແກ້ວ ມາຮອດແລ້ວທັດດອກຂຸມຟູມ ບານຈູມເຈືອແມ່ນດອກອັດເຄົ້າ ທັດດອກເອົ້າກວມຕາ ເກສາງາມ ຕັ້ງໄຫລ່ ຫຽມທ້າວໃຫມ່ວັນດີ ຂວັນໂສມສີສອງເຈົ້າ ກໍໃຫ້ມາຢູ່ເຕົ້າ ໃນຄີງມື້ນີ້ວັນນີ້ ຂວັນເຈົ້າໄປຊອກໃຊ້ເກັບດອກໄມ້ມາລາ ກໍໃຫ້ມາ ມື້ນີ້ວັນນີ້ ຂວັນແຂ່ງໃຫ້ມາຢູ່ແຂ່ງລີລາ ຂວັນຂາໃຫ້ມາຢູ່ຂາລີລ້າຍ ເອົ້າຢູ່ຄ່າຍໄຊຍາ ຍາມຄືນມາຫານທ້າວ ແທນແທ່ທ້າວບາຄານ ໃນວັນວານຊົມຊື່ນ ແທ່ເຈົ້າຂຶ້ນຫານາງ ຕີນຫົວທາງຄຸດນາກ

ຫລາວເຫລັກຫລາກຜີຫລວງ ໃນດວງທຳກາວໄວ້ ທີ່ບັ່ງໃຫ້ສີມຄວນ ບໍລະບວນແຖນແຕ່ງໄວ້ ແບ່ງໃຫ້ເປັນຄູ່ມາບຳລູກແກ້ວ ພໍ່ແມ່ເກົ້າແກ່ ຜູກແລ້ວ ໃຫ້ເປັນຄູ່ທຽມສອງ ໃຫ້ເຈົ້າມາປຸນປອງເປັນລູກພໍ່ ປູກໄວ້ເປັນເຮືອນ ສອງບຸນເຮືອງລູກຫລ້າ ຮັກເກິ່ງຫນ້າທຽມທັນ ຂ້ອຍຈັກເຊີນເອົາຂວັນບາຄານໃຫ້ເຂົ້າມາທຽມໄຫລ່ ລະໃຫມ່ເນື້ອ ຜີວບາງ ສີມບາງງາມຢູ່ກ້າ ອິນຟາກຟ້າປຸນແປງ ໃຫ້ເຈົ້າມາເຝືອແຝງ ເມຍແພງເກິງເກົ້າ ຮ້ອຍຂວບເຂົ້ານານຍິ່ງເຫຍລະຄາ ໃຫ້ເຈົ້າມີ ບຸດຕາຍິງຊາຍຢ່ານ້ອຍ ຂ້ອຍຊວງໃຊ້ພໍ່ແສນ ຂອງກັບແນນໃຫ້ເຈົ້າມີ ທຸກສິ່ງ ຊ້າງມ້າມີ່ງອານຄຳ ພະຍາທຳຕົນອິງອາດ ລິດເດດກ້າລືຊາ ຕາມຕຳລາກາວໄວ້ ອິນທ່ານໄທ້ກວາຍພອນ ເປັນຄຳສອນສັ່ງໂລກ ໂຕກຂັບແກ້ວຮັບພາຂວັນ ຄືດັ່ງສະຫວັນມາຕັ້ງແຕ່ງ ອິນທ້າວແບ່ງ ໄຂສອນ ດອກໄມ້ຊອນແຊມເກົ້າ ຂ້ອຍຈັກເຊີນຂວັນເຈົ້າພ້ອມພໍ່າ ທັງສອງ ມາເຢີຂວັນເອີຍ ຍາມເມື່ອຕາວັນຄ່ຳລົງລັບປ່າແຊງ ຍາມເມື່ອຕາເວັນແດງລົງລັບປ່າໄມ້ ໃຫ້ຂວັນນາງມາທຽມນາງຢ່າຊ້າ ແມ່ເຈົ້າແອ້ມສ້ວມກ້າຄອງຫາ ມີທັງຜ້າກາສາແພລາຍຊອນເສື່ອ ລັດສະຫມີແກ້ວເຮື່ອປັກແສ່ວໃຫມແດງ ຂວັນຈອມແພງໃຫ້ເຂົ້າມາ ທຽມຄູ່ ຂວັນເຈົ້າຢູ່ຟາກຟ້າແດນໄກ ກໍໃຫ້ມາມື້ນີ້ວັນນີ້ ມາເຢີ ຂວັນເອີຍ ໃຫ້ເຈົ້າມາສະເກດເກົ້າທັດດອກບົວລະພັນ ໃຫ້ເຈົ້າມາທາ ນ້ຳມັນຈັນແມ່ເຈົ້າແຕ່ງໄວ້ ໃຫ້ເຈົ້າມາທັດດອກໄມ້ຄອງເກດສວຍລວຍ ມວຍບໍ່ຍາວປະສົງໃສ່ຊ້ອງ ຝູງພີ່ນ້ອງພາຍໃຕ້ຄອຍຫາ ນາງທີດາ ບ້ານເຫນືອມາຄອຍເບິ່ງຫນ້າ ເພີ່ນຊາເຈົ້າບຸນກວ້າງຊູພາຍ

ໃຫ້ເຈົ້າມາສະເຫວີຍງາຍພາຂວັນແຕ່ງໄວ້ ຫມໍບອກໃຫ້ວ່າມື້ນີ້ວັນດີ ຂ້ອຍຈັກເອົາສອງສີຣຽງຫມອນຊ້ອນເສື່ອ ໃຫ້ເຈົ້າໄດ້ສືບເຊື້ອພໍ່ແມ່ ແທນເຮືອນ ເຖິງປີເດືອນຝົນຮວາຍຮ້ອງຮ່ຳ ວັນເຈັດແປດຄ່ຳໃຫ້ເຈົ້າຢູ່ ຈຳສີນ ຂວັນຕາໃຫ້ເຈົ້າມາຢູ່ຕາຍິແຍ້ມ ຂວັນແກ້ມແລຂວັນຄາງ ຂວັນແອວບາງຂວັນນົມພ່ຳພ້ອມ ໃຫ້ມານັ່ງລ້ອມອ້ອມຢູ່ພາຂວັນ ມາເຢີຂວັນເອີຍ ມື້ນີ້ແມ່ນມື້ດີ ມື້ນີ້ແມ່ນວັນເຮົ້າ ຜູ້ເຖົ້າເກີດເປັນສາວ ກໍວ່າແມ່ນມື້ນີ້ວັນນີ້ ຂ້ອຍທ່ານໄດ້ແທນເຮືອນ ກໍວ່າແມ່ນມື້ນີ້ວັນນີ້ ນອນຫລັບໄດ້ເງິນຫມື່ນ ກໍແມ່ນມື້ນີ້ວັນນີ້ ນອນຕື່ນໄດ້ເງິນແສນ ກໍ່ແມ່ນມື້ນີ້ວັນນີ້ ແຂນທ້າວກ່າຍແຂນນາງ ກໍວ່າແມ່ນມື້ນີ້ວັນນີ້ ເອົ້າເຕັມສາງລົ້ນຂື່ ກໍ່ວ່າແມ່ນມື້ນີ້ວັນນີ້ ສາມວັນໃຫ້ເຈົ້າໄດ້ແກ້ວ ມຸງຄຸນມາເຈົ້າເນີ ທ້າມື້ໃຫ້ເພິ່ນໄດ້ເສື້ອຜ້າມາຫາເຈົ້າເນີ ໃຫ້ແຂນ ທ້າວກ່າຍແຂນນາງ ສຸກສຳບາຍພ່ຳພ້ອມ ໃຫ້ອອນນ້ອມຕັ້ງຕໍ່ຊິມເຊີຍ ເຈົ້າເປັນເອີຍໃຫ້ເຮັດໃຈກວ້າງ ຢ່າໄດ້ກ່າວອວດອ້າງສັບພະສິ່ງອັນໃດ ໄລ່ໄກ່ໃຫ້ເຈົ້າວ່າໂຊ ໄລ່ຫມາໃຫ້ເຈົ້າວ່າເສີ ໄລ່ຄວາຍໃຫ້ເຈົ້າວ່າຮີ ເຈົ້າຢ່າໄດ້ດີ້ເຕະຕ່ຽວຊຸຍລຸຍຕໍ່ຫນ້າເຈົ້າໂຄດ ຢ່າປາກໂພດສັບພະສິ່ງ ອັນໃດ ໃຫ້ເຈົ້າມີໃຈໃສຕໍ່ນາງແກ່ນໄທ້ ເຈົ້າເປັນລູກໄພ້ໃຫ້ເຈົ້າຮັກ ແມ່ຜົວ ຢ່າໄດ້ເວົ້າຂວາງໆ ຂວັນຜົວເຊີງຊູ້ ເຈົ້າຜູ້ຮູ້ນັກປາດຟັງທຳ ເຖິງເດືອນດຳຢ່າໄດ້ໄປທ່ຽວຫລິ້ນຍາມຄ່ຳ ເຮືອນຫລັງຕ່ຳນັ້ນແມ່ນ ເຮືອນອາ ຊາຍຄາສູງຫລັງໃຫຍ່ກະທອດໃສ່ປ່ານລົມ ຫລັງກົມນັ້ນແມ່ນ ເຮືອນພໍ່ ເກີຍຊານຕໍ່ຫລັງສູງແມ່ນເຮືອນລຸງ ແລະ ເຮືອນປ້າ ຫລັງຫນ້າກວ້າງດັ້ງໃສ່ແຂນນາງ ລາຍລວງກົມຮູບນາກ ແປ້ນພື້ນ

ຮາບມຸງກະເບື້ອງດິນຂໍ ມີທໍເຢັນຫລັງສູງພ້ອມພາບ ໂຮງມ້າອາດ ແຂວນທີ່ງອາຊະໄນ ໄຫໃນເຮືອນໂຮງນ້ຳບໍ່ແກ້ວ ຫລັງນັ້ນພໍ່ໃຫ້ແລ້ວ ແກ່ລູກທັງສອງ ໃຫ້ເຈົ້າມາປຸນປອງກິນທານຢ່າໄຮ້ ໃຫ້ເຈົ້າໄດ້ ຢາດນ້ຳຢືນຍິ່ງເຫຍລະຄາ ໄດ້ກິນຊີ້ນໃຫ້ເຈົ້າສິ່ງເຮືອນອາ ໄດ້ກິນປາ ໃຫ້ເຈົ້າສິ່ງເຮືອນຍ່າ ເພິ່ນຊ່າເຈົ້າບຸນກວ້າງຊູ່ພາຍ ມີລູກຊາຍໃຫ້ໄດ້ຜູ້ ປະເສີດ ໃຫ້ເຈົ້າໄດ້ລູກແກ້ວເກີດຮ່ວມອຸທອນ ໃຫ້ເຈົ້າໄດ້ຟັງຄຳສອນ ຕາຍາຍພໍ່ແມ່ ໃຈແຜ່ກວ້າງພື້ນ້ອງວິງສາ ຕາເບື້ອງຊ້າຍເຈົ້າຢ່າ ຫລຽວເບິ່ງຊາຍ ຕາເບື້ອງຂວາເຈົ້າຢ່າຫລຽວເບິ່ງຊູ້ ເກີງຍາມແລງ ໃຫ້ເຈົ້າຫາພາເອົ້າ ເກີງຍາມເຊົ້າໃຫ້ເຈົ້າແຕ່ງພາງາຍ ຢ່າໄດ້ນອນ ຫລັບຫລາຍຕື່ນສວາຍຜິດຮີດ ໃຫ້ເຈົ້າຈີບຫມາກໄວ້ປະສິງແຕ່ງ ພາງາຍ ເຈົ້າມີຜົວໃຫ້ເຈົ້າກົ້ມໃຈເກົ່າ ເຫລົ້າໄຫນ້ອຍໃຫ້ເຈົ້າຢາຍໄພ່ ເຫລົ້າໄຫໃຫຍ່ໃຫ້ເຈົ້າຢາຍຂຸນ ມື້ມຸງຄຸນຂອງເຈົ້ານາງແກ້ວ ຫມໍກ່າວ ແລ້ວຊ້ຳຕື່ມແຖມພອນ ເປັນຄຳສອນພະອິນສັ່ງໂລກ ເຈົ້າຫາກມີໂຊກ ແລ້ວເຈົ້າຄ່ອຍພຽນເອົາ ມາເຢືອວັນເອີຍ ຂວັນຜົວໃຫ້ເຈົ້າມາຊົມເມຍ ນີຫນ່ຳ ເກີງຍາມຄ່ຳໃຫ້ເຈົ້າເອົ້າບ່ອນນອນ ຫົວຮຽງຫມອນໃຫ້ເຈົ້າ ຮັກຮໍ່ ໃຫ້ເຈົ້າຕັ້ງຫນ້າຕໍ່ເຮັດແຕ່ຄວາມດີ ຄວາມສຸກຂີມີພຽງບໍ່ນ້ອຍ ແລງຄ່ຳຄ້ອຍເຈົ້າຢູ່ສະຫວັດດີ ກໍຂໍເທີ້ນ.



ການສຶກສາຮ່ຳຮຽນອັກສອນທຳ ຂອງສາມະເນນບ້ານຊຽງແມນ ສະມາຊິກນັກຮຽນຂອງລຸງເຂັມມັງ
ເມືອງຈອມເພັດ ແຂວງຫລວງພະບາງ

# ຄຳສູ່ຂວັນຄົນປ່ວຍ

ຊະຍະມັງຄະລັງ ພະວະຕຸ ທີຄາຍຸໂກ ໂຫຕຸ ອະເນກະສະຫວັດດີ ປາງເມື່ອ ພະມຸນີຜາບແພ້ແກ່ຝູງມານ ພະພູບານຕົນວິເສດ ຮູ້ເຫດຮ້ອນຄຳກັງວົນ ໃນເມືອງຄົນແລຊັ້ນຟ້າ ມີຫນ້າເສົ້າໂສກເຫລືອຫລາຍ ສັດເຈັບຕາຍມູນມາກ ເຈົ້າພູມພາກຄິດສິງສານສັດຢູ່ຈີໃຈ້ໆ ພະຈິ່ງໃຫ້ທີບພະພອນ ເພື່ອໃຫ້ຫາຍກັງວົນແລະເດືອດຮ້ອນ ເປັນຕົ້ນວ່າ ສັບພະທຸກ ສັບພະໂສກ ສັບພະໂລກ ສັບພະໄພ ສັບພະຈັງໄຣເຈັບໄຂ້ ລວມຂວັນໄດ້ສາມສິບສອງ ຕາມທຳນອງແຕ່ເກີດ ຂວັນກຳເນີດສາມສິບສອງ ໃຫ້ມາຄອງໃນເນື້ອມື້ນີ້ວັນນີ້ ມາເຢີຂວັນເອີຍ ຂວັນຫົວໃຫ້ມາຢູ່ຫົວປັກປິ່ນເກົ້າ ນ້ຳມັນເຂົ້າພາຫອມ ຂວັນຂົນຕາແລຂວັນຄິ້ວ ຂວັນນິ້ວຊ້າຍແລນິ້ວຂວາ ຂວັນບາທາທັງຄູ່ເກີບແກ້ວຢູ່ຮັບຮອງ ເຈົ້າຢ່າວອງພາດ່ວນ ຟ້າຮ້ອງຫ່ວນຮີບກັບມາ ຂວັນຕາມາຢູ່ຕາສອງກ້ຳເຈົ້າຢ່າຫລິງຫລ່ຳແລດູດາຍ ເຊີນຂວັນເຈົ້າມາຢູ່ກາຍທຸກແຫ່ງ ຂວັນແຄ່ງແລຂວັນຂາ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ ຂວັນປາກໃຫ້ມາຢູ່ປາກຢ່າເພີ້ຈົ່ມຫລົງໃຫລ ຂວັນຫົວໃຈພາຫ່ຽວ ເຈົ້າຢ່າໄດ້ຄຶດຫນ່ຽວໄປໄກ ໃຫ້ເຈົ້າມາສາມື້ນີ້ວັນນີ້ ເຊີນຂວັນເຈົ້າມາຢູ່ລີ້ໃນເຮືອນ ຂວັນປີເດືອນໃຫ້ມາເຕົ້າ ຂວັນເກດເກົ້າແລເກສາ ຂວັນນາສິກດັງຄົມງາມຄ່ອງ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນຫູໃຫ້ມາຢູ່ຫູສອງກ້ຳ ຂວັນເຈົ້າໄປທ່ຽວກ້ຳພູຜານຳນາຄາແລຄຸດນາກ ຂ້ອຍຈັກເຊີນເຈົ້າພູມພາກຊອຍຮຽກເອົາຂວັນ ຂວັນແຂ້ວໃຫ້ມາຢູ່ແຂ້ວ

ເປັນແຖວ ຂວັນແອວແລທ້ອງນ້ອຍ ຂວັນນິ້ວກ້ອຍໃຫ້ມາສຸບແຫວນ ຂວັນຄໍຄາງແລໄຫລ່ໜ້າ ກໍ່ໃຫ້ມາໂຮມເຂົ້າຢູ່ປະຈໍາ ເອຫີ ມະມະ ອາຄັດສາຫີ ຂວັນເຈົ້າຈິ່ງມາໃນມື້ນີ້ວັນນີ້ ຂວັນເຈົ້າມາຮອດແລ້ວຢ່າໄດ້ທ່ຽວໄປມາ ຕາມມັກຄາເຫວຫ້ວຍ ຂວັນເຈົ້າໄປຕົກນໍ້າປະເທດທ່າເມືອງຜີ ຂວັນເຈົ້າໄປທ່ຽວໃນຄີລີປ່າໄມ້ ຜີຈັບໄວ້ກໍ່ໃຫ້ມາ ຂວັນເຈົ້າໄປລີ້ຢູ່ເມືອງຜີມະເຫສັກຮຽກເອົາໄວ້ ຂ້າຈັກເຊີນພະແກ່ນໄທ້ໂລກກະບານ ທັງທ້າວມັກຄະວານຜູ້ວິເສດ ມາຊ່ອຍປ້ອງຮຽກເອົາຂວັນ ມາເຢີຂວັນເອີຍ ຂວັນເຈົ້າໄປໄຮ່ກໍ່ໃຫ້ມາ ຂວັນເຈົ້າໄປນາຕາແຮກ ກໍ່ໃຫ້ມາ ຂວັນເຈົ້າໄປຕິດຄາກົງເຫລັກໃຫຍ່ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປຫລິ້ນນໍາປ່າຄາ ຂວັນເຈົ້າໄປປ່າຊ້າເມືອງຜີ ຍັກຂີນີຜູກໄວ້ ກໍ່ໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ ຂວັນເຈົ້າໄປກິນເຫລົ້າເມົາມົວລົ້ມທ່າວ ກໍ່ໃຫ້ມາສາມື້ນີ້ວັນນີ້ ມາຢູ່ລີ້ໃນເຮືອນຕົນ ຄໍາກົງວົນຢ່າມົ້ວ ຂວັນຫົວເຈົ້າຢ່າໄດ້ຄວ່າກາງຄືນ ເດືອນມືດເຈົ້າຢ່າໄດ້ທ່ຽວຂຽວຄໍ່າ ເດືອນດໍາເຈົ້າຢ່າໄດ້ທ່ຽວຫລິ້ນ ກາງເວັນຢ່າທຽວທ່ອງ ມາຢູ່ຫ້ອງຫໍແກ້ວຊຸ່ມເຢັນ ມາເຢີຂວັນເອີຍ ໃຫ້ເຈົ້າມາຢູ່ເຮືອນພື້ນແປ້ນຫຍ້າແຝກມຸງຫນາ ໃຫ້ເຈົ້າມາຢູ່ເຮືອນພື້ນແປ້ນຫຍ້າຄາມຸງກີ່ ມາຮອດແລ້ວ ຂວັນເຈົ້າຢ່າໄດ້ທ່ຽວໂຄຈອນ ເດີກອໍລະຊອນຂວັນເຈົ້າຢ່າໄດ້ທ່ຽວບ້ານອື້ຄານໃຫ້ເຈົ້ານອນຢູ່ເຮືອນນໍາພໍ່ນໍາແມ່ ນໍາລູກນໍາເຕົ້າ ໃຫ້ເຈົ້າມາກິນເຂົ້າຂຸບແຕ່ງໃສ່ພາ ຂອງມວນມາພ້ອມທຸກສິ່ງ ຂຸບຈັດຫາເອົາເດົາດາແຕ່ງໄວ້ແລ້ວ ມາເຢີຂວັນເອີຍ ເຊີນເຈົ້າເຂົ້າມາຫາໃນກາຍາຄົນປ່ວຍໄຂ້ ເຈົ້າຢ່າໄດ້ເຮຮ້ອນຈິ່ງພະລັນມາ ເຈົ້າບໍ່ມາ

ເທວະດາຊິຕາມເອົາເຈົ້າແລ້ວ ເຈົ້າບໍ່ຕ່າວມື້ນີ້ ນາງນາດນ້ອຍທໍລະນີ ຈັກໄປຜູກເຈົ້າໄລ່ເອົາຂວັນ ຝູງເທວະດາທຸກຫມູ່ ສະພູ່ພ້ອມຄອຍນາງ ມາເຍີຂວັນເອີຍ ມາກິນເຂົ້າພາເງິນຕົກແຕ່ງໄວ້ແລ້ວ ພາຄໍາແປງແຕ່ງແລ້ວ ພາແກ້ວແລພາທອງ ເຊີນເຈົ້າມາຢູ່ຫ້ອງສະເຫວີຍພາເທວະລາດ ຢ່າຄາດແຄ້ວແວນຫນີ ຂອງດີມີທຸກຢ່າງ ເຊີນເຈົ້າມາຢູ່ປາງແກ້ວດອມຫມູ່ວົງສາ ທັງຕາຍາຍພໍ່ແມ່ ທັງເຖົ້າແກ່ລູກຫລານເຫລັນ ທັງງົວຄວາຍແລຊ້າງມ້າ ຂ້ອຍຂ້າພ້ອມຫມູ່ທາສາ ມາເຍີຂວັນເອີຍ ມາຮອດແລ້ວໃຫ້ເຈົ້າຍິນສະບາຍ ຫາຍໂພຍໄພທຸກໂສກ ວິປະໂຍກຫນັກຫນາ ຂໍໃຫ້ຫາຍໂລຄາພະຍາດຮ້າຍ ເຈັບແຂ່ງໃຫ້ລາ ເຈັບຕາແລປວດທ້ອງ ເຈັບທີ່ທ້ອງເຈັບໃນຕົວ ປວດຫົວແລປວດໄລ່ ເຊີນຂວັນເຈົ້າໄຕ່ເຕົ້າເຂົ້າມາຄືງ ໃຫ້ຫາຍໂພຍໄພພະຍາດ ທັງອຸບາດແລອັນຕາຍ ທັງພາຍໃນແລພາຍນອກ ຂວັນເຈົ້າອອກກໍ່ໃຫ້ມາ ມາເຍີຂວັນເອີຍ ມາຮອດແລ້ວເຈົ້າຢ່າຫນີ ໄດ້ພັນປີຍາວຍິ່ງ ຂວັນແກ້ວກິ່ງຈິ່ງມາ ຟາກນ້ຳກໍ່ໃຫ້ມາ ຟາກຂາກໍ່ໃຫ້ຂ້າມ ມາຮ່ວມທ້ອງເຄຫາ ອຸອະມຸມະ ມຸນມາ ຊະຍະຕຸ ພະວັງ ຊະຍະມັງຄະລັງ ໂສດກິເຕ ໂຫຕຸສັບພະທາ ແຕ່ນີ້ໄປຫນ້າ ຂວັນເຈົ້າໃຫ້ຢູ່ຫມັ້ນຍືນນານ ຕະຫລອດການອາຍຸໄຂໃຫ້ຂວັນເຈົ້າຫມັ້ນເຫມືອນດັ່ງເຂົາຈັກກະວານ ໃຫ້ເຈົ້າຫມັ້ນທ່ຽງເຫມືອນພະນິບພານຢ່າຄາດແຄ້ວ ຢູ່ຫມັ້ນແລ້ວສະຫວັດດີ ທີຄາຍຸໂກ ໂຫຕຸ ສັບພະທາ ອະໂລຄະພະຍາເວລາໂສກາ ສັດຕຸຈຸປັດທະວາ ອະເນກາອັນຕະລະຍາປີ ວິນັດສັນຕຸ ອະເສສະໂຕ.

# ຄຳສູ່ຂວັນຂຶ້ນເຮືອນໃຫມ່

ສີສີສິດທິ ຊະຍະຕຸ ພະວັງ ຊະຍະມັງຄະລະດີກີ ວັນນີ້ເປັນວັນດີ ວັນດີກີສຸລາເລີກ ກີກຫນ່ວຍຊື່ວ່າ ມະຫາມຸງຄຸນ ຍັງມີເຈົ້າພະຍາຜູ້ມີບຸນອົງຫນຶ່ງ ສະເດັດມາຈາກເມືອງຫມັ້ນຄຳຟອງ ມາສະແຫວງຫາຈອງສະຖານດີຕັ້ງບ້ານເຮືອນ ສ້າງໃຫ້ຢູ່ຊຸ່ມກິນເຢັນ ຄວາມເປັນເຂັນເຂັດຂວາງຈັງໄຣບໍ່ມີພໍ້ ຈິ່ງຕັ້ງຕໍ່ປູກແປງໄປ ພະເນດໃຕໂພທິເຈົ້າວ່າດີບ່ອນນີ້ ແຕ່ກ່ອນກີ້ພະເຈົ້າສ້າງໂພທິສົມພານ ຜາບແພ້ພະຍາມານຜູ້ສາໂຫດ ບ່ອນນີ້ບ່ອນພະເຈົ້າໂຜດສັດຕະນິກອນ ບ່ອນນາງທໍລະນີເອົາຄຳຜູກໄວ້ ພະແກ່ນໄທ້ວ່າຢູ່ສະຫວັດດີ ຫມື່ນພັນປີບໍ່ມີໂພຍໄພມາຕ້ອງ ບັດນີ້ເຈົ້າຊິນັ່ງຢູ່ຫ້ອງແກ້ວກ່ອງເງິນຄຳ ເອົາຊິນຳແກ້ວແຫວນມາໃຫ້ ກັບທັງຂ້ອຍຊວງໃຊ້ຫລຸຫລັ່ງໄຫລມາ ມີສັກດາລິດທີອົງອາດ ຝູງຫມູ່ຍາດຊິໄດ້ແຕ່ງຂອງຝາກມາຫາ ກັບທັງພັນລະຍາຫນຸ່ມນ້ອຍ ຫນ້າຊື່ນຊ້ອຍໂສພາ ບັດນີ້ຈັກພັນລະນາແຕ່ເດີມດາເຄົ້າ ຈັດແຈງເອົ້າຫາໄມ້ປຸກເຮືອນ ມີໃຈພຣຸນທັງເຍື້ອນທັງຍາກ ແຕ່ງກິ່ງຫມາກທັງນ້ຳບັ້ງທີ່ງ ຄິວເຄຍຫາຂວານຄົມມີດພ້າແບກເອົາປ່າດັ້ນຄວ່າດົງດອນ ເດີນໂຄຈອນມື້ແລງມື້ເຊົ້າ ວັນຄ່ຳເສົ້າສູນແລ້ວຕາວມາ ບາງພ່ອງກິນສຸລາແກມເອົ້າ ຕື່ນມື້ເຊົ້າງາຍແລ້ວເລົ່າໄປ ຈິງໃຈເອົ້າດົງເລົາຫາຊອກ ໄປພົບພໍ້ລຳດົ້ວປອດດີ ໄມ້ມີສິເອົາເປັນເສົາແຮກ ແລ້ວຈິ່ງແບກຂວານໃສ່ຟັນລົງ ຕັດປາຍກົງລຳດີສະອາດ ນີ້ແມ່ນທຳມະຊາດໄມ້ຄ້ຳໄມ້ຄູນ ລຳຟັນລຸນເສົາຂວັນເປັນຄູ່

ທີ່ເກີດຢູ່ຝ່າຍຂ້າງຕີນດອຍ ຫລຽວເບິ່ງງາມສອນລອນອິນແປງປູກໄວ້ ຕັດເອົາໄດ້ມາກູາກເປັນເສົາ ໄປຫາເອົາບໍ່ຢຸດບໍ່ຢອນ ເດີນເຣຣອນ ເຂົ້າປ່າດົງຫນາ ຫລາຍເວລາປີເດືອນຕິດຕໍ່ ຫລາຍພໍ່າມື້ຕົວເຈົ້າ ອອນແຮງ ຍາມແລງເຂົ້າຍາມແລງປະເປົ່າ ມື້ສືບມື້ປ້ຳໄມ້ສືບໄປ ປີເດືອນໄດ້ວັນຍາມເຂົ້າປ່າ ແດດແຮ່ງຮ້ອນຣົນໄຫມ້ຄ່ອຍພຽນ ປີເດືອນເຂົ້າຫາມາຂ້າມລ່ວງ ຝົນຫລັ່ງຍ້ອຍຣຳຜ້າຊຸ່ມເຢັນ ບໍລະບວນ ແລ້ວຟັນເຮືອນຫລັງໃຫຍ່.

ບັດນີ້ ຂ້າຈັກແຕ່ງຂັນດອກໄມ້ເຊີນເຈົ້າເຂົ້າສູ່ເຮືອນ ເອົາຟັນ ຕົກຕໍ່ເຈົ້າຢ່າໄດ້ທັກເມືອເມືອງເຫນືອ ເອົາຟັນຕົກເຄືອເຈົ້າຢ່າໄດ້ ທັກເມືອເມືອງບາກ ເອົາຟັນຕົກຟາກເຈົ້າຢ່າໄດ້ເສົ້າເສຍສູນ ໃຫ້ເຈົ້າ ມາຄ້ຳຄູນຮຸ່ງເຮືອງພຽງອາດ ໃຫ້ເຈົ້າມາສະພູ່ຢູ່ຊຸ່ມກິນເຢັນ ຄວາມເຂັດຂວາງຢ່າໃຫ້ໄດ້ ຄວາມເຈັບໄຂ້ຢ່າໃຫ້ມີ ມາເຢີຂວັນເອີຍ ຂວັນເສົາຫວນຢູ່ປ່າຫຍ້າແຝກ ກໍ່ໃຫ້ມາມື້ນີ້ວັນນີ້ ຂວັນແຈຢູ່ດອຍຢູ່ກູ້າ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນປ້ານລົມຢູ່ດົງຊ້າງນ້ຳ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນຂື່ຂ້າວກໍ່ໃຫ້ເອີ້ນຮຽກກັນມາ ມາເຢີຂວັນເອີຍ ມາພະລັນຢ່າຊ້າ ໃຫ້ເຈົ້າໄດ້ຕັ້ງຫນ້າຂ້າມເຫລົ່າດອນເລົາມາເນີ ໃຫ້ເຈົ້າມາຈຳເລີນ ຮຸ່ງເຮືອງເຮືອນກວ້າງ ຢ່າໄດ້ຕົກໄດ້ຫ່ວງຢູ່ສະຫວັດດີ ຍໍຄືໄຟຂຶ້ນໃຫ້ໄດ້ ເປັນເຮືອນລາດ ຍໍຜາສາດຂຶ້ນໃຫ້ໄດ້ເປັນຍອດທາດຈອມສູງ ເຮືອນ ໂຮງຄຳເປັນລົດແກ້ວ ຍໍຂຶ້ນແລ້ວຢູ່ສະຫວັດດີ ຍົກເສົາຫນຶ່ງໃຫ້ໄດ້ງົວ ແມ່ລາຍ ຍົກເສົາສອງໃຫ້ໄດ້ຄວາຍເຂົາຢ້ອງ ຍົກເສົາສາມໃຫ້ໄດ້ຄ້ອງ

ເກົ້າກໍາຍົກເສົາສີ່ໃຫ້ໄດ້ຄໍາເກົ້າໝື່ນ ຍົກເສົາຫ້າໃຫ້ໄດ້ເອົ້າລ້ານໝື່ນ ມາເຍຍ ຍົກເສົາຫົກໃຫ້ໄດ້ເມຍຜູ້ງາມມານອນພ່າງຂ້າງ ຍົກເສົາເຈັດຂຶ້ນ ໃຫ້ໄດ້ລູກຈ້າງມາແຕ່ງພາແລງພາງາຍ ຍົກເສົາແປດຂຶ້ນໃຫ້ໄດ້ຊາຍ ຜູ້ດີຜູ້ງາມມາຍາຍແຈກເຫລົ້າແລຂອງຂວັນ ຂໍໃຫ້ໄດ້ມາມວນງົວ ຄວາຍເຕັມຄອກ ຊ້າງມ້າອອກເນືອງນອງ ເງິນຄໍາກອງພໍແບກ ເສົາຄໍ້າກໍຢ່າໃຫ້ແຕກ ເສົາແຮກກໍຢ່າໃຫ້ເຊຊວນ ເສົາຂວັນກໍໃຫ້ ເຈົ້າໝັ້ນແກ່ນ ໃຫ້ເຈົ້າໝັ້ນປານແຜນເຫລັກແດງ ໃຫ້ເຈົ້າແຂງປານ ແຜ່ນຫີນລາດ ໃຫ້ເຈົ້າໝັ້ນປານຫລຽມອາດເສົາສະເໜມນ ຈໍາເລີນ ເປັນອາດກວ້າງ ຫ້ອງໜຶ່ງແອ້ມອາດໄວ້ແຕ່ງບົວນາງຫຽມ ຫາງກາງໃຫ້ມີສະບໍ່ແກ້ວ ນາງອາບແລ້ວໃຫ້ຢູ່ສະຫວັດດີ ເສົາຄໍ້າ ໃຫ້ເປັນແກ່ນພູຫອມຊິ່ວພັນວາ ເສົາຂວັນໃຫ້ເປັນແກ່ນຈັນຫອມຊິ່ວ ແສນໂຍດ ເພິ່ນມາຊື້ໃຫ້ເຈົ້າໄດ້ຈໍາໜ່າຍ ຍາມເມື່ອຈ່າຍໃຫ້ເຈົ້າໄດ້ ຂອງດີ ໃຫ້ເຈົ້າໄດ້ຮຸ່ງເຮືອງສີປຸນປັນຫ້ອງໄວ້ ຜູກຊ້າງສານໃຫຍ່ ງາຍາວ ຫ້ອງໜຶ່ງໃຫ້ລູກເຂີຍລູກສາວເອົ້າມາສູ່ຊວງໃຊ້ ຫ້ອງໜຶ່ງ ໄວ້ໃຫ້ລູກຊາຍແລລູກໃພ້ແສນສ່ໍາມາແຍງ ລູກສາວແພງເຄື່ອງຄໍາ ພັນຮ້ອຍ ຫລອນວ່າໄດ້ລູກເຂີຍລູກໃພ້ນ້ອຍໆ ມາສູ່ສົມໃຈຢູ່ເດ ຫ້ອງໜຶ່ງໄວ້ກ້າສັງຄະເຈົ້າມາເທສະໜາສອນ ຫ້ອງໜຶ່ງໄວ້ບູຊາ ນົກເກິ່ງຄຸນແກ້ວ ຫ້ອງໜຶ່ງໄວ້ກ້າບິດາມານດາພໍ່ແມ່ ຫ້ອງໜຶ່ງໄວ້ໃຫ້ ເກົ້າແກ່ຊຸມນຸມ ຫ້ອງໜຶ່ງໄວ້ໃຫ້ຂຸນທາງໄກຫລາຍມື້ມາເຝົ້າ ຫ້ອງໜຶ່ງໄວ້ກ້າລູກເຕົ້າແລຫລານເຫລັນ ຫ້ອງໜຶ່ງໄວ້ເກັບຄໍາຮ້ອຍ ຫ້ອງໜຶ່ງໄວ້ແອ້ມສ້ວມນ້ອຍໃຫ້ລູກສາວຫລ້າເອົ້າມາຢູ່ນອນ.

ບັດນີ້ ຂ້ອຍຈັກເຊີນເອົາຂວັນເຈົ້າຄົວເຮືອນໃຫ້ມາຢູ່ ເຊີນເອົາຂວັນລູກເຕົ້າໃຫ້ມາເຂົ້າສູ່ໂຮງ ມາເຢີຂວັນເອີຍ ຂວັນເຈົ້າໄປຟັນໄມ້ເສົາຫວນເຊົາຢູ່ປ່າແຝກ ຂວັນເຈົ້າໄປຟັນໄມ້ເສົາແຮກເຊົາຢູ່ປ່າຫນາມຫັນ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປຟັນໄມ້ເສົາຂວັນເຊົາອາບນໍ້າ ຂວັນເຈົ້າໄປຟັນໄມ້ເສົາຄໍ້າມິວແບກເຊຊວນ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປຟັນໄມ້ສະຍົວເຊົາຢູ່ຮິມເຫມືອດ ຂວັນເຈົ້າໄປຟັນໄມ້ກະທອດເຊົາຢູ່ກາງດົງ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປຕັດໄມ້ຕົງຕັດກອນເຊົາຢູ່ໂຄກຄ້ອຍໆ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປຂຶ້ນໂຄກສູງ ຂວັນເຈົ້າລົງໂຄກຄ້ອຍໃຫ້ວອຍຂ້າມຕາວມາ ມາເຢີຂວັນເອີຍມາພະລັນຢ່າຊ້າ ເຊີນທັງຂວັນອອນຫລ້າກຸມາລາເຂົ້າມາສູ່ ເຊີນເອົາຂວັນຫມູ່ເຈົ້າໃຫ້ມາເຂົ້າສູ່ໂຮງ ໃຫ້ເຈົ້າມາທະລົງເຮືອນຊານບ້ານໃຫມ່ຄັນເຈົ້າມາຮອດແລ້ວ ຄວາມທຸກຢ່າໃຫ້ໄດ້ ຄວາມໄຂ້ຢ່າໃຫ້ມີ ທຸກຕົນທຸກຄົນກໍ່ຂ້າເຫີ້ນ ຍະກາ ວາລິວະໂຫ ປູໂລ ສັບພະກາລັງ ນະຂິຍັນຕິອຸອະມຸມະ ມຸນມາ ສັບພະສິດທິ ພະວັນຕຸ ເຕ.

## ຄຳສູ່ຂວັນງົວຄວາຍ

ສິສິມື້ນີ້ແມ່ນມື້ຫມັ້ນ ຫມັ້ນໃຫ້ເຈົ້າຫມັ້ນກວ່າກ້ອນຜາແອ່ນຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າແທ່ນຜາຈວງຜາຈັນ ຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າພູເຂົາຫລວງໄກລາດ ຫມັ້ນໃຫ້ເຈົ້າຫມັ້ນຍິ່ງກວ່າສີລາອາດຫີນເຜີດ ເຮັດນາເຈົ້າຢ່າໄດ້ຊ້າ ໃຫ້ເຈົ້າຕັ້ງຫນ້າຊື່ໄປໄວໆ ເຈົ້າຢ່າໄດ້

ມີໃຈໂກດກ້າທຣາບຊ້າອວດສະຫາວ ຂ້ອຍມັກເຈົ້າຄືສາວມັກບ້ອງ ໄມ້ລ້ອງຄ້ອງເຕາະຕ່ອຍຕີໄປ ກູຊິແກ້ຊິປົດມື້ນີ້ວັນນີ້ ຂ້ອຍຈິ່ງສູ່ຂວັນ ຄວາຍທັງຫມູ່ ປູ່ຍ່າທັງຫລານເຫລັນ ຕົວໃດເຂັນຫລາຍໃຫ້ເຈົ້າແຜ່ພື້ນ ເມືອຫນ້າ ເຈົ້າກິນຫຍ້າເຈົ້າຢ່າໄດ້ເຂົ້າສວນ ໃຫ້ເຈົ້າຊວນກັນມາ ແຕ່ນາຮອດບ້ານ ໃຫ້ເຈົ້າອວນກັນມາຢູ່ແຫລ່ງໃຕ້ລ່າງຮຽງເສົາ ບ່ອນຂ້ອຍຊິຜູກເຈົ້າໄວ້ ໃຫ້ເຈົ້າໄດ້ລູກເຕົ້ານ້ອຍອ່ອນພໍພັນ ມື້ນີ້ແມ່ນ ມື້ສັບ ວັນນີ້ແມ່ນວັນກ້າ ຂ້ອຍຈິ່ງສູ່ຂວັນຄວາຍບັກຄໍາອີ່ເຜືອກ ຕົວບຸນມີ ອີ່ເຂົາປີຕົວບຸນກວ້າງ ຂ້ອຍຈິ່ງເອົາເຈົ້າເມືອຢູ່ສ້າງກະທໍາ ການ ມີລູກຫລານແລລູກນ້ອຍ ແລ່ນອ້ອມອ້ອຍແອ່ວກິນນົມ ທົມໆໃຈ ຈັກຂາດ ນໍ້າຕາຢາດໄຫລຕົກ ເຈົ້າຈິ່ງຄະນຶງໃນອົກໃນທວງຈັກແຕກ ທະລາຍ ຢູ່ເຫິງຫລາຍສວາຍພໍງາຍແດດແກ່ກ້າ ເຈົ້າຈິ່ງຕ່າວຫນ້າ ຄືນມາ ຂ້ອຍຈິ່ງມີໃຈຄຽດຄ້ອຍ ຂ້ອຍຈິ່ງບາຍເອົາຄ້ອນນ້ອຍໆ ເຕາະຕ່ອຍຕີໄປ ໄປບໍ່ດີຂ້ອຍຈິ່ງໄດ້ດ່າ ໄປຊ້າຂ້ອຍຈິ່ງໄດ້ໄລ່ໄວໆ ເຈົ້າຈິ່ງໄປຊີຊຸດ ເຈົ້າຈິ່ງໄປຊີຊາດ ຊິດຂ່າວຂາດເຊໄປ ປົດໄກເຊົາ ຂ້ອຍກໍ່ໄດ້ຕີຊໍ້າ ມາເຢີຂວັນເອີຍ ຂວັນຫົວເຈົ້າໄປກິນຫຍ້າຢູ່ກາງດົງ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນເຈົ້າໄປເຊຊິງຢູ່ໃນປ່າ ກໍ່ໃຫ້ມາສາມື້ນີ້ວັນນີ້ ຂວັນຫົວເຈົ້າໄປແມບນໍ້າຢູ່ໃນຫນອງແຫນລີ້ເຫລືອກ ກໍ່ໃຫ້ມາສາມື້ນີ້ ວັນນີ້ ມາເຢີຂວັນເອີຍ ເຈົ້າຢ່າໄດ້ຕົກສະທ້ອນຮ້ອນໃຈກົວຂ້ອຍເປີ ຝົນຕົກຟ້າຮໍ່າຮ້ອງໃຫ້ເຈົ້າຕັ້ງຫນ້າຕໍ່ຫາງມາ ດູສອງຕາງາມລະຫ້ອຍ ກັບທັງຂວັນລູກນ້ອຍແລ່ນອ້ອມອ້ອຍນໍາແມ່ຢູ່ລີລາ ໃຫ້ເຈົ້າມາກິນຫຍ້າ ແຝກໃບຫນາ ຂ້ອຍກະໄດ້ມາແລ້ວ ໃຫ້ເຈົ້າມາກິນຫຍ້າຄາໃບຂຽວອ່ອນ

ຂ້ອຍກະໄດ້ມາແລ້ວ ຫຍ້າປ້ອງແອ້ວເຫລືອຫລາຍ ຂ້ອຍກະໄດ້ມາແລ້ວ ຫຍ້າຫວາຍກິນແຊບຊ້ອຍ ຂ້ອຍກະໄດ້ມາແລ້ວ ໃບແລບນ້ອຍນັ້ນແມ່ນຫຍ້າໄຊ ຂ້ອຍກະໄດ້ມາແລ້ວ ໃບສວຍລວຍຍອດກ້ວຍຍອດອ້ອຍ ຂ້ອຍກະໄດ້ມາພ້ອມ ມາຕັ້ງລ້ອມພາຂວັນຢູ່ສວຍລວຍ ມັກອັນໃດໃຫ້ເຈົ້າກິນອັນນັ້ນ ມາເຢີຂວັນເອີຍ ຕົວໃດບໍ່ມາເສືອເຫລືອງມັນຊິນຳໄປອ້າເຈົ້າແລ້ວ ມາເຢີຂວັນເອີຍ ຕົວໃດບໍ່ມາຫມາປ່າຊິນຳໄປຢຽບສູເຈົ້າແລ້ວ ມາເຢີຂວັນເອີຍ ຕົວໃດບໍ່ມາຫມາໄນຊິນຳໄປຢຽບສູເຈົ້າແລ້ວ ມາຢູ່ຍືນຍາວໃນຫ້ອງ ໄມ້ລ້ອງຄ້ອງເຕາະຕ່ອຍຕີໄປ ຂ້ອຍຊິແກ້ຊິປົດມື້ນີ້ວັນນີ້ ຂ້ອຍຈັກຕ່ອຍທັງຫລິ້ມຈິ່ມໄກ ຂ້ອຍຈັກຕ່ອຍທັງໄລຈິ່ມຄາດ ໃຫ້ເຈົ້າຍືນຍາວຫມັ້ນທັນຕາຕັ້ງຢູ່ດີເຢີ ຢ່າໄດ້ຄວຍໂຄ່ນຄ້າງຄອນລົ້ມຫລ່ອນເສຍ ຊະຍະຕຸ ພະວັງ ຊະຍະມັງຄະລັງ ສະຕະວັດສາທິຄາຍຸໂກ ໂຫນຕຸ ມະຫິງສາໂຄນາ.

## ຄຳສູ່ຂວັນຄົນໄຂ້ຄົນປ່ວຍ

ສີສີສິດທິໄຊຍະມັງຄະລະເລີດລ້ຳ ສິດທິເດດລືຍົດ ຍໍແຍງຄຸນຄູຕົນຕັນຕ້ອນ ລະຕະນັງແກ້ວສາມປະກາບກົ້ມຂາບ ເຊີນຊ່ວຍອ້າຄາວແຄ້ນຂອດຂວັນແນ່ຫ້ອນ ບັດນີ້ ຂ້ອຍຈັກເຊີນທັງປວງທ້າວເທພາພົມມະໂລກ ເຊີນເທບແຜ່ນຫລ້າຫລາຍຊັ້ນຊ່ອຍຊູ ເຊີນທັງຄຸດນາກນ້ຳໃນກົ່ງກົງສະຫມຸດ ຈະຕຸໂລລາຊາຄູຕົນຕັນຕ້ອນ ແມ່ນວ່າຂວັນເຂີນຄ້າງໄພຂວາງຂາມລາດ ເຊີນໃຕ່ເຕົ້າຂວັນເຂົ້າຄອບຄົງ

ບັດນີ້ ຂ້ອຍຈັກເຊີນຂວັນເຈົ້ານິງເຍົາເຍື້ອນຍ່າງ ຢ່າໄດ້ຮ້າຍເຮວຮ້ອນ ຮີບມາ ພໍ່ແມ່ຕົ້ມໄຂ່ໄວ້ຕັ້ງແຕ່ງພາຂວັນ ບາງໆມີຄູ່ອັນມວນພ້ອມ ມີທັງແພຂາວພ້ອມແພແດງດູອາດ ມີທັງເທພະທ່ອນໄຫ້ທຽມເບື້ອນງຸ່ງທົງ ມີທັງພາຫວານພ້ອມພາຄາວຂິນໄຂວ່ ພໍ່ແມ່ຕົ້ມໄຂ່ໄວ້ປະສົງຊ້ອມສູດຂວັນ ເຊີນເຢີຂວັນເອີຍ ເຊີນທັງຂວັນທົວພ້ອມ ເກສາສະເດັດດ່ວນ ເຊີນເຈົ້າມາຮ່ວມຫ້ອງເຮືອນຢ້າວຢູ່ເຢັນ ມີທັງຕຽງສູງຊ້ອນສະຫນາຄຳທົງອາດ ສາດເສື່ອຊ້ອນຊິມກົ້ວກິ່ນເສນ ສະຫນຸກຍິ່ງແມ້ງມຸງເມກບັງບິດ ຫມອນທົວສິມແສ່ວຄຳລາຍແກ້ວ ມາລາລົ້ນເປັນແກຸວກັນກີ່ ລະອອງອູດເອົ້າຍູ່ຫ້ອມທີ່ນຫອມ ເຊີນເຢີຂວັນເອີຍ ເຊີນທັງຂວັນ ໂລມາແມ້ງມະໂນກອງຄື້ວຄ່ອງ ໃຫ້ເຈົ້າມາລູບໄລ້ຫາແປ້ງປິ່ນຫອມ ເຊີນເຢີຂວັນເອີຍ ເຊີນທັງຂວັນເລັບເບື້ອງຕີນມືພ້ອມພ່ຳ ໃຫ້ເຈົ້າມາຢູ່ຊ້ອນປາຍນີ້ວປິ່ງຫາ ເຊີນທັງທັນຕາແຂ້ວເປັນແກຸວກັນກີ່ ຍາມເມື່ອໃສ່ຊີ່ແລ້ວດຳປີ້ຮູບງາມ ໃຫ້ເຈົ້າມາສະເຫວີຍເຂົ້າຂາວອວນອ້ວນອອນ ມີທັງປູປາປີ້ງປະສົງຈ້ຳແຈ່ວບອງ ຫລາຍພ່ຳເຊື້ອປີ້ງຈີ່ເຈຍຈິນ ຍູທ່າງທົງຄວາມສຸກຢູ່ສະບາຍຫາຍຮ້ອນ ເຊີນເຢີຂວັນເອີຍ ເຊີນທັງຂວັນຫນັງໃຫ້ມາຫວຍທົງຜ້າຜືນງາມເບື້ອອອນ ໃຫ້ເຈົ້າຍືນຍາວຫມັ້ນພັນປີເປັນເຂດ ຝູງຫມູ່ໂພຍພະຍາດຮ້າຍຫາຍຮ້ອຍຢ່າມີ ເຊີນທັງຂວັນມັງສັງຊີ້ນໃນຄີງນ້ອຍອອນ ໃຫ້ເຈົ້າມາຢູ່ຊ້ອນໃນເສັ້ນຊູ່ເອັນ ຢ່າໄດ້ມີພະຍາດຕ້ອງໂລຄາບັງບຽດ ຢ່າໄດ້ເຈັບປ່ວຍໄຂ້ໃນເບື້ອຫນ່ວງຫນາວ ເຊີນເຢີມະຫາລູເສັ້ນພາທົງທຽວທ່ອງ ຢ່າໄດ້ເຈັບປວດເສັ້ນເອັນອ້າງຢ່າຈັງ ເຊີນເຢີອັດກີມິນຊີງເຍື້ອ ສະຫມອງເນົາໃນກະດູກ ໂພຍພະຍາດ

ຮ້າຍແມ່ເຮັງຜ້າໃຫ້ພ່າຍພັງ ເຊີນຂວັນກ້າຂາຫລັງນິທະເຫນັ່ງ ໃຫ້ເຈົ້າມາຢູ່ຊ້ອນໂຄງກ້າຝ່າຍຫລັງ ທະທະຍັງນັ້ນຫົວໃຈດູອາດ ເຈົ້າຫາກສະຫລາດຮູ້ເຫັນແຈ້ງຮີດຄອງ ໃຫ້ເຈົ້າມາຊິມຫ້ອງໃນຄີງຂອງເກົ່າ ເຂົ້າສູ່ໂຄງຄາບຮ້າຍຢ່າຟ້າວຫນ່າຍຊັງ ຍະກະນັງນ້ອມຂວັນຕັບມາເປັນຫມູ່ ກິໂລມະກັງຜັງຜືດນັ້ນ ໃຫ້ມາພ້ອມພ່ຳມວນ ເຊີນເຍີປິທະກັງກ້າໃຫ້ມາໄວແວນທ່ຽວ ເຊີນເຍີປັບຜາສັງກໍ່ໃຫ້ມາພ້ອມພ່ຳມວນ ເຊີນເຍີອັນຕັງໄສ້ພຸງຫລວງອັນໃຫຍ່ ເຊີນເຍີອັນຕະຄຸນັງໄສ້ນ້ອຍ ໃຫ້ມາພ້ອມພ່ຳມວນ ເຊີນເຍີກະລີສັງກ້າອາຫານກິນຂອງເກົ່າ ອຸທະລີຍັງເຊີນເອົາຂວັນໃຫມ່ເຂົ້າມາທ້ອນທ່ຽວ ເປືອງ ເຊີນເຍີປີຕັງນ້ຳບີເບື້ອງຝ່າຍ ພາຍໃນອົມເຝືອນນັ້ນຕົບເຈົ້າກໍ່ໃຫ້ມາ ເຊີນທັງຂວັນເສມທະຫມໍ້ໃນຄໍຄືອົ້ກະເທີ່ ກໍ່ໃຫ້ມາ ເຊີນເຍີບຸບໂພທ້ອງຫນອງໃນບູມເນົ່າກໍ່ໃຫ້ມາ ເຊີນທັງໂລຫິຕັງພາຍໃນນອງເລືອດກໍ່ໃຫ້ມາ ເຊີນທັງເສໂທເມໂທໄຄຄາດເບື້ອໃຫ້ມາພ້ອມພ່ຳມວນ ເຊີນທັງອັດສຸນ້ຳໃນຕາໄຫລຍອດກໍ່ໃຫ້ມາ ເຊີນທັງຂວັນວະສານ້ຳພັນແຫລວໄຫລລ່ວງ ໄຫລອອກເຂົ້າທ່ຽວເທົ້າທົ່ວຄີງ ເຊີນເຍີເຂໂລນ້ຳລາຍໄຫລເຫລືອປາກ ກໍ່ໃຫ້ມາ ສິງຄາລະສິການ້ຳມູກຍ້ອຍສອງຂ້າງກໍ່ໃຫ້ມາ ເຊີນເຍີມຸດຕັງນ້ຳທຽວທາງທຸກຍາກກໍ່ໃຫ້ມາ ເຊີນທັງມັດກະເກໂບງຫົວອັນໃຫຍ່ກໍ່ໃຫ້ມາ ມັດກະລຸງຂະຫມອງຢູ່ຊ້ອນໃນນັ້ນກໍ່ໃຫ້ມາ ເຊີນທັງຂວັນຫົວພ້ອມຫູຕາຄິ້ວກ່ອງ ໃຫ້ເຈົ້າມາຍືນຍາວຫມັ້ນພັນວັດສາທັດທ່ຽງ ຢ່າໄດ້ລວຍໂລ່ນຄ້າງຄອນລົ້ມຫລົ່ນເສຍ ໃຫ້ເຈົ້າມາຢູ່ຊ້ອນເຊື້ອຊາດແນວຄົນ ຢ່າໄດ້ປິນເປເຊື້ອແນວ

ຜີຜິດຊາດ ຢ່າໄດ້ໄປປົນຊ້ອນແນວຟ້າຊົ່ວສູງ ໄກຊົນເຊື້ອຊາວຄົນຕອງຍາກ ຢ່າໄດ້ໄປຢູ່ຊ້ອນຊາວເສືອນາກຄຳ ຢ່າໄດ້ໄປຢູ່ກ້ຳຊາວຄົນປະເທດອື່ນ ບຸນບໍ່ສ້າງສິນຈ້າງບໍ່ມີ ເມືອງເຮົາສ້າງສົມພານທຸກເມື່ອຊົມຊື່ນສ້າງສິນຊ້ອຍສູ່ອັນ ອີງພຸດໂທເຈົ້າຈອມຄຸນຄາວກ່ອນ ເພິ່ນກໍຊົມຊື່ນສ້າງຊົມພູພື້ນທີ່ບເຮົານີ້ແລ້ວ ກໍຈຶ່ງໄດ້ຜ່ານພົ້ນເປັນຫນໍ່ໂພທິສັດຕັດສັບພັນຍູຍອດທຳເຫໄວ້ ເຊີນທັງຂວັນຕີນພ້ອມຂວັນມືນີ້ວອ່ອນໃຫ້ເຈົ້າມາສຸບໃສ່ກ້ອຍກະຈອນນ້ອຍໃສ່ຫູ ບຸນຊູສ້ອຍສົມງາມສະເຫມີຫລໍ່ ພໍ່ແມ່ເຈົ້າຫິວໄຫ້ຮຸ່ງຫາ ຕານາຍເຈົ້າຫິວຫາທຸກຮຸ່ງ ຝູງພີ່ນ້ອງຊາວບ້ານເພິ່ນບໍ່ຊັງ ເພິ່ນກໍ່ຮັກແຈ່ມເຈົ້າຊົມຈູບຈອມຂວັນ ໃຫ້ເຈົ້າລີລາເດີນດ່ວນມາຍາຊ້າ ໃຫ້ເຈົ້າລີລາເອົ້າໃນຄີງຂອງເກົ່າເຈົ້າເນີຝູງພີ່ນ້ອງເຫັນແລ້ວຊື່ນຊົມ ຊະຍະຕຸ ພະວັງ ຊະຍະມັງຄະລະ ອຸອະມຸມະ ມຸນມາ ມຸນມັງ ໂຫຕຸ.

## ຄຳຜູກແຂນ

1. ອາຍຸວັດທະໂກ ທະນະວັດທະໂກ ສິລິວັດທະໂກ ຍະສະວັດທະໂກ ພະລະວັດທະໂກ ວັນນະວັດທະໂກ ສຸຂະວັດທະໂກ ໂຫຕຸ ສັບພະມາ ( ແບບ 1 ).

2. ສັບພະໂລຄະພະຍາເວລາ ໂສກາສັດຕຸຈຸປັດທະວາ ອະເນກາອັນຕະລາ ຍາປິວິນັດສັນຕຸ ອະເສສະໂຕ ( ແບບ 2 ).

3. ອະພິວາທະນະສີລິດສະ ນິດຈັງ ວຸດທາປະຈາຍິໂນ ຈັດຕາໂລ ທຳມາ ວັດກັມຕິ ອາຍຸ ວັນໂນ ສຸຂັງ ພະລັງ (ແບບ 3).

4. ໂຫຕຸ ສັບພັງ ສຸມັງຄະລັງ ລັກຂັນຕຸ ສັບພະເທວະຕາ ສັບພະພຸດທານຸ ພາເວນະ ສັບພະທຳມານຸພາເວນະ ສັບພະສັງຄາ ນຸພາເວນະ ໂສດກິ ໂຫຕຸ ນິລັນຕະລັງ.

## ຄຳຜູກແຂນຂຶ້ນເຮືອນໃຫມ່

ສິດທິຊະໂຍ ສິດທິຊະໂຍ ຂໍໃຫ້ມີໄຊຊະນະຜາບແພ້ຂ້າເສິກສັດຕູ ຜູ້ຫລັກໃຫ້ເອົາສິນມາໃຫ້ເຈົ້າເນີ ຜູ້ໃບ້ໃຫ້ເອົາສິນມາປັນເຈົ້າເນີ ເພີ່ນຂາຍກຸບໃຫ້ແລ່ນມາຫ້ອຍເຈົ້າເນີ ເພີ່ນຂາຍຂ້ອຍຂາຍຂ້າໃຫ້ແລ່ນ ມາໂຮມເຈົ້າເນີ ເພີ່ນໂອມທ້າວໂອມນາງໃຫ້ແລ່ນມາສູ່ເຈົ້າເນີ ນອນ ຫລັບໃຫ້ເຈົ້າໄດ້ເງິນພັນ ນອນຝັນໃຫ້ເຈົ້າໄດ້ເງິນຫມື່ນ ນອນຕື່ນໃຫ້ເຈົ້າ ໄດ້ເງິນແສນ ແບບມືໄປໃຫ້ເຈົ້າໄດ້ແກ້ວມະນີໂຊດ ໂທດຮ້າຍໃຫ້ຫາຍເສຍ ທາງໃຕ້ໃຫ້ມີຜູ້ຊອຍເຮືອ ທາງເຫນືອໃຫ້ມີຜູ້ຊອຍຊ້າງ ສອງຂອກຂ້າງ ໃຫ້ມີຜູ້ ຊອຍດອກໄມ້ເງິນຄຳ ອຸອະ ມຸມະ ມຸນມາ ມະຫາມຸນມັງ (ແບບ 1).

ຍະຖາ ວາລິວະໂຫ ປູໂລ ສັບພະກາລັງ ນະຂິຍຸນຕິ ຂໍເຊີນເອົາ ຂວັນເຈົ້າເຮືອນເຈົ້າຊານ ເຈົ້າບ້ານເຈົ້າຊອງ ຂວັນລູກເມຍ ເຫລັນຫລານ ມາສຸກສະບາຍບານຢູ່ເຮືອນຫລັງສູງຢູ່ໂຮງຫລັງໃຫຍ່ ແອ້ມແປ້ນໃຫມ່ມຸງດິນ ຊັບສິນໄຫລເນືອງນອງຢ່າຂາດ ເຫມືອນດັ່ງນ້ຳ

ໃນອະໂນມານະທີ ກິນຢ່າໄດ້ບົກ ຈົກຢ່າໄດ້ລົງ ມີງົວໃຫ້ໄດ້ງົວແມ່ລາຍ ມີຄວາຍໃຫ້ໄດ້ຄວາຍເຂົາຍ້ອງ ໃຫ້ໄດ້ຄອງເກົ້າກໍາ ໃຫ້ໄດ້ຄໍາເກົ້າຫມື່ນ ໃຫ້ໄດ້ເຂົ້າລ້ານລື່ນມາເຍຍ ໃຫ້ໄດ້ເມຍສາວຜູ້ຈົບຜູ້ງາມມານອນ ຜ່າງອ້າງ ໃຫ້ໄດ້ລູກຈ້າງມາແຕ່ງພາແລງພາງາຍ ໃຫ້ໄດ້ລູກຊາຍ ຫົວປີເປັນຄົນດີຄົນງາມເກົ່ງຂະຫນາດ ໃຫ້ໄດ້ບວດໃນພະສາສະຫນາ ຈັດຕາໂລ ທໍາມາ ວັດກັບຕິ ອາຍຸ ວັນໂນ ສຸຂັງ ພະລັງ.

## ຄໍາຜູກແຂນຄົນປ່ວຍ

ສີສີສິດທິພະພອນ ບໍວອນດວງປະເສີດ ຝ້າຍແກ້ວເກີດເມືອງ ສະຫວັນ ປັນກັນມາຕົກແຕ່ງ ອິ້ວແອດແກວ່ງກົງຫລາ ເປັນເສັ້ນງາມ ເລີດລ້ຳ ຝ້າຍປະເສີດພັນຄໍາ ເສັ້ນຫນຶ່ງຄໍາຜີວຜ່ອງ ເປັນດັ່ງມຸກແກ້ວ ສ່ອງໃສແສງ ເປັນຂອງແພງອັນປະເສີດ ຝ້າຍແກ້ວເກີດມຸງຄຸນ ປຸນກັນມາສາມຮອບ ຜູກແຂນຊ້າຍໃຫ້ເຈົ້າໄດ້ວັດກັງຜືນອອນ ຄາຄໍາຜ່ອນຜໍແສນ ຫົວແຫວນຄໍາເຫດ ທຸກຂອບເຂດທົ່ງສາ ໄຫລນອງມາແຕ່ອະໂນມານະທີບໍ່ຂາດເຫລືອຫລາຍ ເຫມືອນດັ່ງ ຫາດຊາຍແລທ່າກວ້າງ ທຸກທີ່ກ້ຳຊິມພູ ຝູງສັດຕູຢ່າໄດ້ມາບັງບຽດ ເຈົ້າເນີ ຢ່າໄດ້ມີຜູ້ຄຽດຕໍ່ເຈົ້າຈັກຄົນ ຜູກແຂນຂວາໃຫ້ເຈົ້າມີອາຍຸ ຫມັ້ນຍືນຢ່າກ່ອຍຊ້າ ໃຫ້ເຈົ້າຈໍາເລີນຫນ້າຢູ່ສະຫວັດດີ ມາເຢີຂວັນເອີຍ ຂວັນເຈົ້າໄປນໍາໄຟລຸບລວາບຫນ້າ ຂວັນເຈົ້າໄປຢູ່ນໍາໄຟຟ້າລຸກລວາບ ແດງ ກໍ່ໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ ກ້ອນເສົ້າໄປຈັ່ງໄປ

ຄືໄຟຄວາຈຶ່ງຄວ່າ ລຸກແຕ່ປ່າມາເຮືອນ ລຸກແຕ່ສວນມາບ້ານ ຂີ້ຄ້ານໃຫ້ເຈົ້ານອນຢູ່ເຮືອນຢູ່ຊານນຳ ... ເຈົ້າຈິ່ງຈະເລີນສຸກສະຫວັດດີກໍ່ອ້າເທີ້ນ.

## ຄຳຜູກແຂນກິນດອງ

ສີສີວິໆວອນໆ ພະພອນດວງປະເສີດ ຝ້າຍແກ້ວເກີດເມືອງສະຫວັນ ອິນປຸນປັນຕົກແຕ່ງ ອີ້ວກວັດແກວ່ງເປັນປຸຍ ຊຸຍຊາຍມາເປັນເສັ້ນໆລະພັນຄຳ ເສັ້ນເລີງງາມລ້ຳເລີດ ຝ້າຍແກ້ວເກີດມຸງຄຸນປຸນກັນມາສາມຮ້ອຍ ມານັ່ງຕອບບາຍແຂນເຈົ້າເນີ ຜູກແຂນຊ້າຍໃຫ້ເຈົ້າໄດ້ຫມື່ນບາງ ຜູກແຂນຂວາໃຫ້ເຈົ້າໄດ້ວັດກັງຜືນອອນ ຄຳບໍ່ຜ່ອນພໍແສນ ຜູກແຂນທ້າວໆຈັກໄດ້ເປັນພະຍາ ຜູກແຂນພໍ່ບາໆຈັກໄດ້ເປັນຂຸນຜູ້ອິງອາດ ຜູກແຂນອຳມາດທ້າວຈັກໄດ້ນັ່ງເມືອງເບື້ອງໃຕ້ໃຫ້ມີຜູ້ມາຊ່ອຍເຮືອ ເບື້ອງເຫນືອໃຫ້ມີຜູ້ມາຊ່ອຍຊ້າງສອງຕອບຂ້າງໃຫ້ມີຜູ້ມາຊ່ອຍດອກໄມ້ເງິນດອກໄມ້ຄຳ ນອນຫລັບໃຫ້ເຈົ້າໄດ້ເງິນຫມື່ນ ນອນຕື່ນໃຫ້ເຈົ້າໄດ້ເງິນແສນ ແບນມືໄປໃຫ້ເຈົ້າໄດ້ແຫວນຄ່າລ້ານ ອອກຈາກບ້ານໃຫ້ເຈົ້າພໍ້ໄຫເງິນໄຫຄຳ ອາຍຸວັນໂນສຸຂັງ ພະລັງ (ແບບຫນຶ່ງ).

ຫນຶ່ງມາສອງ ໃຫ້ເຈົ້າໄດ້ກອງເງິນກອງຄຳມາສູ່ ສອງມາສາມໃຫ້ເຈົ້າໄດ້ຍໍມືຊີ້ບອກເຜີ່ນທຳການ ສົມພານມີຫລາຍຫລາກ ບຸນຫລັງຫາກນຳມາ ໃຫ້ເຈົ້າໄດ້ເປັນພະຍາຈັກກະພັດຕິລາດ ຜາບແພ້ໂລກາ

ສາມມາສີ່ ສິນບັດມີບໍ່ໄຮ້ ໃຫ້ເຈົ້າໄດ້ເຍຍເຂົ້າເປືອກແລເຂົ້າສານ ສີ່ມາຫ້າ ໃຫ້ເຈົ້າໄດ້ອ້າປາກເວົ້າບອກທ່ານກະທຳບຸນ ຫ້າມາຫົກ ໃຫ້ເຈົ້າໄດ້ຍົກຂັນເງິນຂັນຄຳຂຶ້ນພຽງແທ່ນ ບໍ່ທຸກຍາກຄຳແຄນຊິມພູ ແດນຂາບໄຫວ້ ໃຕ້ລຸ່ມຟ້າສາທຸການ ທີ່ມະພານຍົດກວ້າງ ຄົນກ່າວອ້າງທົ່ວທັງເມືອງ ຫົກມາເຈັດ ເຮັດກໍ່ໄດ້ກິນ ບໍ່ເຮັດກໍ່ໄດ້ກິນ ເຈັດມາແປດ ແວດລ້ອມທຸກພາຍຊ້າງມ້າຫຼາຍຄື່ນເຄົ້າ ຂ້ອຍຄື່ນເຄົ້າເຕັມເຮືອນ ເກົ້າມາສິບ ໃຫ້ເຈົ້າຍີບຂັນຄຳຂຶ້ນພຽງຕາ ໃຫ້ເຈົ້າໄດ້ເປັນພະຍາບາຫມື່ນ ຄົນຊົມຊື່ນທັງເມືອງ ໃຫ້ເຈົ້າຫາຍທຸກຫາຍໂສກ ຫາຍໂລກຫາຍໄພ ໃຫ້ເປັນຜົວຮັກເມຍແພງກັນແກ່ເຖົ້າ ຕາບຕໍ່ເທົ້າເຫຍລະຄາ ຈັດຕາໂລທຳມາ ວັດກັບຕິ ອາຍຸວັນໂນ ສຸຂັງ ພະລັງ.

## ຄຳຜູກແຂນລູກຫລານປ່ວຍ

ສີສີສິດທິພະພອນ ບໍວອນແວນປະເສີດ ຝ່າຍແກ້ວເກີດມຸງຄຸນປຸນລົງມາຕົກແຕ່ງ ກວັດກິ້ວແກວງກົງຫລາ ພັດອອກມາເປັນຫລອດກຸອດອອກມາເປັນປຸຍ ກຸຍອອກມາເປັນເສັ້ນ ແລເສັ້ນແລພັນຄຳເສັ້ນຫນຶ່ງດຳໃສສອງເປັນດັ່ງແກ້ວມຸກສອງໃສແສງ ຝ່າຍຂອງແພງລ້ຳເລີດ ຝ່າຍແກ້ວເກີດເມືອງສະຫວັນ ປັນລົງມາສາມຮອບຄອບແລ້ວຈິ່ງໄດ້ຜູກແຂນຫລານ ມາເຢີຂວັນເອີຍ ຂວັນເຈົ້າໄປມຸດນ້ຳສະໃຫຍ່ກິນປາ ຂວັນເຈົ້າໄປຢູ່ນາທົ່ງຫລວງກຽວເຂົ້າ ຂວັນເຈົ້າໄປນັ່ງເວົ້າດອມຫມູ່ຜີຕາຍ ກໍໃຫ້ມາສາມື້ນີ້ວັນນີ້ ມາເຢີຂວັນເອີຍ

ມາເຂົ້າຄີງເຈົ້າຢ່າໄດ້ເຫມັນສາບ ມາເຂົ້າຄາບເຈົ້າຢ່າໄດ້ເຫມັນກູຍ ຂວັນຕັບໃຫ້ມາຢູ່ຕັບແດງຮອບ ຂວັນປອດໃຫ້ມາຢູ່ປອດແດງໃສ ຂວັນຫົວໃຈໃຫ້ເຈົ້າມາຢູ່ຫົວໃຈຢ່າໄດ້ເສົ້າ ມີລູກເຕົ້າໃຫ້ແຜ່ຫລາຍ ມີລູກຍິງລູກຊາຍໃຫ້ລ້ຽງໃຫຍ່ ຍ່ຍົກໃສ່ກິນເມືອງ ຂວັນບຸນເຮືອງ ງາມບໍ່ນ້ອຍ ໃຫ້ເຈົ້າໄດ້ຂ້ອຍຫມື່ນເຫລືອຫລາຍ ມາຮອດກາງໄຮ່ ເຈົ້າຢ່າໄດ້ຊຶ້ນປ່າຄາ ມາຮອດກາງນາເຈົ້າຢ່າໄດ້ຊຶ້ນກໍເຂົ້າ ມາຮອດ ເຫງົ້າໄມ້ເຈົ້າຢ່າໄດ້ທອດຫົວນອນ ໃຫ້ເຈົ້າມາຢູ່ເຮືອນພື້ນແປ້ນ ຫຍ້າແຝກມຸງຫນາ ໃຫ້ເຈົ້າມາຢູ່ເຮືອນພື້ນແປ້ນຫຍ້າຄາມຸງກີ່ ຝົນຕົກ ເຈົ້າຢ່າໄດ້ດຸງໄປຫນ້າ ຟ້າຮ້ອງເຈົ້າຢ່າໄດ້ດຸງໄປໃກ ກ້ອນເສົ້າໄປ ເຈົ້າຈິ່ງໄປ ຄືໄຟຄວ່າເຈົ້າຈິ່ງຄວ່າ ລຸກແຕ່ປ່າໃຫ້ມາເຮືອນ ລຸກແຕ່ສວນໃຫ້ມາບ້ານ ຂີ້ຄ້ານໃຫ້ເຈົ້ານອນຢູ່ມີແຮງ ຂີງແຄງປີ້ງ ເປັນຍອດ ເຈົ້າຈິ່ງຫນີເນີ ກະຮອກປີ້ງເປັນເຂົາເຈົ້າຈິ່ງຫນີເນີ ຫມາກ ກາກະເລົາປີ້ງຫຸ້ມກົ້ນເຈົ້າຈິ່ງຫນີເນີ ຂວັນເກດເກົ້າໃຫ້ເຈົ້າໃສ່ ກະໂຈມຄຳ ໃຫ້ເຈົ້າລົງມາເຫລື້ອມຫລາກ ຂວັນປາກໃຫ້ເຈົ້າເສບພາດ ຄ້ອງເຕາະຕ່ອຍສີຊໍ ຂວັນຄໍໃຫ້ເຈົ້າໃສ່ສາຍສ້ອຍ ຂວັນກ້ອຍໃຫ້ໃສ່ກ້ອຍ ສຸບແຫວນ ຂວັນແຂນໃຫ້ເຈົ້າກີ່ປີແກ້ວ ຄັນວ່າມາຮອດແລ້ວໃຫ້ເຈົ້າຢູ່ ສະຫວັດດີ ມີອາຍຸຍືນຍາວຫມັ້ນພັນປີເປັນເຂດ ຮ້ອຍປະເທດທ້າວ ໃຫ້ມາຂຶ້ນສ່ວຍສີນ ໃຫ້ເຈົ້າລຸລາບໄດ້ອີງເອກມະຫາຄຸນ ມຸນທຽນມີ ຫມື່ນນາງນອນຊ້ອນ ນານາພ້ຽງລັງສີໂສມຕາງ ປະດັບຍິ່ງຍ້ອຍປຸນປັ້ນ ແປກຂຽນ ຈັດຕາໂລ ທຳມາ ວັດກັ້ນຕີ ອາຍຸ ວັນໂນ ສຸອັງ ພະລັງ ( ແບບ 1 ).

ມາເຢືອວັນເອີຍ ສາມສິບຂວັນໃຫ້ມາເຮົາ ເກົ້າສິບຂວັນໃຫ້ມາໂຮມ ຝົນຕົກເຈົ້າຢ່າດຸ່ງໄປໜ້າ ຟ້າຮ້ອງເຈົ້າຢ່າໄດ້ດຸ່ງໄປໄກ ກ້ອນເສົ້າໄປຈຶ່ງໄປ ຄືໄຟຄວ່າຈຶ່ງຄວ່າ ລຸກແຕ່ປ່າໃຫ້ມາເຮືອນ ລຸກແຕ່ສວນໃຫ້ມາບ້ານ ຂີ້ຄ້ານໃຫ້ເຈົ້ານອນຢູ່ເຮືອນຢູ່ຊານ ກິນເຂົ້າຜີໃຫ້ເຈົ້າຮາກ ຄ້ຽວໝາກຜີໃຫ້ເຈົ້າຄາຍ ໃຫ້ເຈົ້າຄືນມາດາຍທ້ອງເປົ່າໃຫ້ເຈົ້າມາກິນເຂົ້າກັບກ້ວຍດອມອາ ມາກິນເຂົ້າກັບປາດອມປູ່ ໃຫຍ່ພຽງຕໍ່ຢ່າໄດ້ຫັກ ໃຫຍ່ພຽງຫລັກຢ່າໄດ້ໂຄ່ນ ຢ່າໄດ້ໝົ່ນເໝືອນຕອງຢ່າໄດ້ໝອງເໝືອນເຫົ່າ ຢ່າໄດ້ເກົ້າແກ່ເສຍສີ ໃຫ້ເຈົ້າມີອາຍຸຍືນຍາວຢ່າໄດ້ສັ້ນ ໃຫ້ເຈົ້າໃຫຍ່ພຽງລູງ ໃຫ້ເຈົ້າສູງພຽງປ້າ ໃຫ້ເຈົ້າຈຳເລີນໜ້າຢູ່ສະຫວັດດີ ນອນຫລັບໃຫ້ເຈົ້າໄດ້ເງິນພັນ ນອນຝັນໃຫ້ເຈົ້າໄດ້ເງິນໝື່ນ ນອນຕື່ນໃຫ້ເຈົ້າໄດ້ເງິນແສນ ແບນມືໄປໃຫ້ເຈົ້າໄດ້ແກ້ວມະນີໂຊດ ໂທດຮ້າຍຢ່າມາພານ ມານຮ້າຍຢ່າມາບຽດໃຫ້ຫາຍສະຫນຽດຈັງໄຮ ເຄາະຢ່າໄດ້ເຫັນ ເຂັນຢ່າໄດ້ພໍ້ ໃຫ້ເຈົ້າຫາຍພະຍາດໂລຄາ ໃຫ້ເຈົ້າມີສັກດານຸພາບ ຜາບແພ້ອາເສິກສັດຕູດ້ວຍອະນຸພາບພະພຸດ ພະທຳ ພະສົງ ຈັດຕາໂລ ທຳມາ ອັນວ່າທຳສີ່ປະການ ຄື ອາຍຸ ວັນນະ ສຸຂະ ພະລະ ຈົ່ງມີຕະຫລອດທຸກຍາມວັນເດືອນປີ ກໍຂ້າເທີ້ນ.

## ຄຳຟາຍເຫລົ້າ

ສິສີສິດທິກາບ ຂ້າຈັກກ່າວຕຳນານນິທານຟາຍເຫລົ້າ ຄວາມຜູ້ເກົ້າເພິ່ນວ່າຂຸນສູງ ເປັນຄວາມລູງຄວາມຕາມາແຕ່ພໍ່ແຕ່ແມ່

ເປັນຄວາມເກົ້າຄວາມແກ່ ມາແຕ່ເບີ້ງທົ້ທົວຂາວ ເປັນຄວາມຍວນຄວາມລາວ ມາແຕ່ເບີ້ງຫມາອິງຮົ້ວ ນ້ຳອັນນີ້ຫາກຫອມກິ່ນກົ້ວເທົ້າທົ່ວຈັກກະວານ ເປັນນິທານຕໍ່ໄປພາຍຫນ້າ ຄວາມອ້າເອົາວ່າອິນຊະເຈັງ ເປັນຄວາມມ່ານຄວາມເມັງ ເອົາວ່າມັງຈໍ້ ເປັນຄວາມທໍ້ຄວາມຫານ ເອົາວ່າສຽວຈຽວ ເປັນຄວາມມອນຄວາມແກວເອົາວ່າສຽວຫວ້າງ ຄວາມໄທເມືອງລ້ານຊ້າງ ເອົາວ່າເຫລົ້າສາໂທ ຕັກໃສ່ໂອເພິ່ນວ່ານ້ຳເຫລົ້າ ປາລີພະເຈົ້າເພິ່ນວ່ານ້ຳສຸລາ ໄທເຮົາແປວ່ານ້ຳອ້ອຍນາ ຫລືນ້ຳຕາຜີເຜດ ຫລາຍປະເທດເອົາມາຊ່າງຈາເດນໍ ! ຫລາຍພາສາເອົາມາຊ່າງເວົ້າເດນໍ ! ນ້ຳອັນນີ້ຫາກເປັນນ້ຳກ້ານ້ຳຫານ ໃຜຈັກທຳການມຸງຄຸນຫາກເອົາຍັງນ້ຳເຫລົ້າແຕ່ເພິ່ນຫລໍ່ພະເຈົ້າຍັງເອົາໄປເຮັດຄາຍພິດສະນຸ ຫວິດຮອດຜີພູຜີແຖນແລຜີຟ້າ ຊາວເມືອງພະມ້າຍັງເອົາໄປຂຶ້ນຜີທຳມະດານ້ຳອັນນີ້ເກີດມາສຳລັບໂລກ ໃຜໄດ້ກິນກໍຫາກໂສກໂພຍໄພ ຜູ້ຂີ້ໄຮ້ໄດ້ກິນ ກໍກ່າວຄວາມຮັ່ງຄວາມມີ ດີກວ່າພໍ່ກວ່າແມ່ ດີກວ່າຜີດ້ຳຜີຄວງ ຜູ້ປູມຫລວງໄດ້ກິນກໍ່ວ່າປູມໂຕນີ້ດີງາມໃສປອດ ປູມຍອດຜະຫຍາ ຜູ້ເຈັບຫູເຈັບຕາໄດ້ກິນກໍວ່າຕາໂຕນີ້ ຮຸ່ງເມືອຮອດເມືອງທໍ່ກໍແຜວ ຮຸ່ງເມືອຮອດເມືອງແກວກໍເຫັນຫມົດຊູແຫ່ງ ຜູ້ສິບແວ່ງໄດ້ກິນກໍວ່າສິບໂຕນີ້ແວ່ງດີແວ່ງງາມ ຕັ້ງແຕ່ສາວຜູ້ດີຜູ້ງາມເອົາກໍຍັງແວ່ງທາງກົ້ນ ໃຜບໍ່ມີມົ້ມນ້ຳເຫລົ້າ ແລະ ນ້ຳຢາ ແຕ່ຜູ້ມີຜະຫຍາກໍຍັງເວັ້ນບໍ່ໄດ້ ຜູ້ຂີ້ໄຮ້ຍອມສະແຫວງຫາ ຂ້ອຍຈັກຫວິດໃສ່ມືກ້ຳຂວາໃຫ້ເຈົ້າໄດ້ອິງຫມອນລິງຫມອນລາຍຄ້ຽວຫມາກ ແຂນສອກເທົ້າ



ການນຸ່ງກືຂອງຊົນເຜົ່າລື້
ໃນງານວາງສະແດງເຄື່ອງນຸ່ງຫົ່ມຊົນເຜົ່າ ແຂວງອຸດົມໄຊ

ນິມນາງ ມີລູບເອີກລູບອາງໃຫ້ເຂົາຫົວຢູ່ຍິ້ມຍິແຍ້ມ ຂ້ອຍຈັກຫວິດລົງດິນ ຂໍໃຫ້ນາງທໍລະນີມາຊ່ອຍຄ້ຳເຈົ້າເນີ ຂ້ອຍຈັກຫວິດລົງນ້ຳ ຂໍໃຫ້ພະຍາຄຸດພະຍານາກມາຊູເຈົ້າເນີ ຂ້ອຍຈັກຫວິດເມືອພູເມືອຜາ ໃຫ້ເຈົ້າໄດ້ຈົກໄຫເງິນໄຫຄຳກ້ອນສອກ ຂ້ອຍຈັກຫວິດໄປກ້ຳບາງກອກ ຂໍໃຫ້ເຈົ້າໄດ້ແພກາສາ ແລະ ເງິນຫມາກຄໍ້ມາໄວ້ເຮັດແນວ ຂ້ອຍຈັກຫວິດໄປກ້ຳເມືອງແກວ ໃຫ້ເຈົ້າໄດ້ເງິນຮາງ ແລະ ເງິນແຫມ້ນ ຄວາມຄັ່ງແຄ້ນເຈົ້າຢ່າໄດ້ມີ ໃຫ້ເຈົ້າຮັ່ງຄືດັ່ງເສດຖີ ໃຫ້ເຈົ້າມີຄືດັ່ງຫວຍຄ້າ ມີລູກຍິງໃຫ້ເຈົ້າໄດ້ຫມາຍ ມີລູກຊາຍໃຫ້ເຈົ້າໄດ້ລ້ຽງງາຍ ຈ່າຍແຕ່ແກ້ວແຕ່ຄຳ ຊະຍະຕຸ ພະວັງ ຊະຍະມັງຄະລະ ສະຫວັດດີ ຂຶ້ນເກີນດັ່ງນີ້ເທີ້ນ.

## ຄຳໂສກຕ່າງໆ

* **ໂສກຜູ້ຊາຍ**
- ບັກກ່ຳ
- ບັກຂຽວ
- ບັກຊາຍນອນດຽວ
- ບັກຍ່ຽວໃສ່ຜ້າ
- ບັກຂ້າລູກເຜີ່ນຕາຍ
- ບັກຂາຍລູກເຜີ່ນກິນ
- ບັກວິນນຳຊູ

* **ໂສກຜູ້ຊາຍ**
- ປູ່ທິ້ມອື້ນ
- ຍາທິ້ມລົງ
- ສອງແຂນປົງໄວ້ທີ່ຕ່ຳ
- ຊູ້ພາບສິບພາບຊາວແລ່ນມາສູ່
- ຕຸ້ມຫມູໄດ້ຜໍກອງ
- ຕຸ້ມຂອງໄດ້ຜໍລ້ານ
- ມີບ້ານບໍ່ມີນາ

- ບັກຊູ້ເມຍທ່ານ
- ບັກຜານຄອງເມືອງ
- ບັກເຟືອງນາເຮືອ
- ບັກເຊື້ອຮູຄັນ
- ບັກຢັບຜ້າກັ້ງ

- ກາສັບຫົວກິນເລືອດ
- ຫຍ້າມ້າບໍ່ເຫືອດຄໍ
- ປໍແດງມັດກະດົ້ນ
- ປາກພົ້ນເພີ່ນທັງເມືອງ

* **ຄຳໂສກຜູ້ຍິງ**
- ກະລິກກະລື່ນ
- ພໍກິນພໍຢູ່
- ຕັນຕູ້ຕັນຫາ
- ກາເຝົ້າເຈົ້າຮັກ
- ຂົວຫັກຂົວຄ່າຍ
- ປ່າຍຂຶ້ນປ່າຍລົງ
- ( ເງິນ ) ເຕັມກົງແອວຄ້າ
- ຂີ່ມ້າລຽບເມືອງ
- ຄຳເຫລືອງເຕັມແທ່ນ
- ( ເງິນ ) ບໍ່ແກນກັບກົງ
- ຊາຕາລົງຂີ້ຄ້ານ
- ບໍ່ຄ້ານກັບຕຸງ

* **ຄຳໂສກຄ້ອງ**
- ສິດທິໄຊຍະມັງຄະລະໂຊກ
- ຕືອວດໂລກເປົ່າດູດາຍ
- ສຽງດັງວາຍບໍ່ມິ້ວ
- ສຽງດັງກົ້ວເທົ້າທົ່ວທໍລະນີ
- ແສນມະເຫສີມານັ່ງເຝົ້າ
- ເປັນເຈົ້າແຜ່ນທອງເຫລືອງ
- ແທ່ຂຸນເມືອງຂຶ້ນນັ່ງແທ່ນ
- ແສນຂຸນແລ່ນມາເຕົ້າ
- ຕີໂອບເອົ້າເສບຂອບຜີ
- ນາງທໍລະນີຕົກໃຈກົວສະທ້ານ
- ຕືອອກບ້ານຜາບເອົາໄຊ

*** ຄຳໂສກກອງ**

- ບັນທະເພລີ
- ສີຊຸມຊຶ່ນ
- ຮື່ນເມືອງພົມ
- ສົມຢູ່ສ້າງ
- ມ້າງສັງໂຄ
- ໂພທິສັດ
- ວັດພະເຈົ້າ
- ເຕົ້າຄົນໂຮມ

*** ຄຳໂສກກຸຕິ**

- ກອນກະດີ
- ມີພະແຕກ
- ແຂກມາໂຮມ
- ໂຍມມາສູ່
- ພໍ່ຄູຕາຍ
- ລູກສິດຫລາຍຮ່ວມເຮົ້າ
- ລູກເຕົ້າມິດສາຈານ
- ກິນທານບໍ່ມີຂາດ

*** ຄຳໂສກເຮືອນ**

- ຕ່ອນຄຳຟູ
- ຟູຄຳຫອມ
- ຫອມສິບໄວ້
- ໄຮ້ເຫົ້າຕາຍ
- ວາຍພັດພີ່
- ໄດ້ເອື້ອຍພີ່ມາເຮືອນ
- ຂັບຄຳລຽນລ້ຽງແຂກ
- ກ້ວຍປາກແວກຕັກແກງບອນ
- ບອນຫາງາຍຕີນຕາກແດດ

*** ຄຳໂສກຂັ້ນໄດ**

- ເດືອນດັບຕັດໄມ້
- ຂີ້ໄຮ້ຈົນຕາຍ
- ງົວຄວາຍເຕັມລາງ
- ເຂົ້າຂອງເຕັມດູນ
- ຊັບສິນມູນມາ

* **ຄຳໂສກກະທອດ**

- ສາມສິບທີ່ງບາແມນ
- ແສນປີບໍ່ໄດ້ເຂົ້າເຕັມເລົ້າ
- ເກົ້າປີບໍ່ໄດ້ເຂົ້າເຕັມເຍຍ
- ກິນໜົດເສຍບໍ່ຮອດເຂົ້າໃໝ່
- ຜີບ້ອງໄຮ້ແລ່ນມາຫາ
- ຂອງເຕັມພາບໍ່ຢາກ
- ທຸກຍາກຢ້ານບໍ່ມີ
- ເປັນເສດກີ້ຍ້ອນຂາຍເຂົ້າ
- ຕັກໃສ່ເລົ້າເຕັມພູນ

* **ຄຳໂສກເສົາເຮືອນ**

- ສຸໂຂ
- ໂຈໂຣ
- ສິດທິລາໂພ
- ມັດຈຸ

* **ຄຳໂສກກະທອດເຮືອນ**

- ສິບນອງມາຄື່ນເຄົ້າ
- ສອງເກົ້ານັ່ງທົບທກ
- ຄອງຄວາມສຸກເທົ້າຊົ່ວ
- ກົ້ນກົງຮົ່ວເປັນຮູ
- ສາວມາຊູຊົມຮັກ
- ມັກປ່ວຍໄຂ້ເສຍຂອງ
- ເງິນຄຳກອງເຫລືອທີ່ໄວ້
- ຂີ້ໄຮ້ເກີດເປັນດີ
- ເປັນເສດກີ້ຍ້ອນພອຍໄຮ້
- ນອນຕື່ນໄດ້ກົງຄຳ
- ຕໍພຽງດິນປົ້ງຍອດ

* **ຄຳໂສກຜ້ານຸ່ງ**

- ຜ້າທໍ່ແຮ່
- ຜ້າແພເຊີງ
- ຜ້າສະເອີງກິບມ້າ
- ຜ້າໄປຄ້າເສຍທ້າພັບຄຳ
- ຜ້າກ້ອງແຂນຄຳເກົ້າກິ່ງ
- ຜ້າແຕ່ມື້ງມານດາ
- ຜ້າປິຕາປັນໃຫ້
- ຜ້າໄດ້ແລ້ວທົ່ມຂອນນອນ

* **ຄຳໂສກຕາຊົ່ວ**

- ຊົ່ວແມ່ຍິງ
- ຊົ່ວຜູ່ຄ້າ
- ອວຍໜ້າມາແລ້ວຊົ່ວ
- ຊົ່ວແລ້ວໜີ
- ທີ່ຄ່າລ້ານ
- ຕ້ານເອົາຂອງ
- ປອງເອົາໜີ້
- ສີ້ກົ້ນຄວາມ

* **ຄຳໂສກດາບ**

- ຣິ່ມໂພ
- ຣິ່ມໄຣ
- ໄກວແຂນໄປກ່ອນເທົ້າ
- ບ້າວຊູ້ເຜີ່ນມາຊົມ
- ຊົມໃຫ້ຊົມທັງເຄື່ອງ
- ເຄື່ອງໆດາບຟັນຜີ
- ດາບບໍ່ດີຟັນເຈົ້າ
- ດາບບໍ່ເອົ້າຟັນເມຍ
- ຟັນເມຍເສຍພີ່ນ້ອງ

* **ຄຳໂສກກົງ**

- ຜ້າຫຍິບກົງ
- ຜ້າທະລົງຂື້ບ່າ
- ຫ້ອຍບ່າແລ້ວແຊງແຊະໄປມາ

* **ຄຳໂສກປືນ**

- ປູດຕຳງ່ອນ
- ງ່າໄມ້ຢ່ອນປືນພັດ
- ຝູງສັດຕາຍບໍ່ມື້ວ
- ງົວເງຍແບກມາດາຍ

ອີກແບບໜຶ່ງ

- ຕຸ້ມມາຊີ້ວ
- ກົ້ວຕາສັດ
- ແສນສັດຕາຍຕຸ່ມມ້ວຍ
- ຮວ້າຍເຣ້ຍແບກມາດາຍ

* <u>ອີກແບວໜຶ່ງ</u>

- ໜ້າຂຽງກ້ອມ
- ແຫ່ຂຸບໜີ້ນມາເມືອງ
- ກ່ອມຕາສັດ
- ເກັບຜັກເຫລືອງໃສ່ຊ້າ
- ຍິງສັດຕາຍຕຸ່ງມ້ວຍ
- ຍິງທີ່ນີ້ໜີໄປຕາຍທີ່ອື່ນ
- ງວ້າຍໆແບກມາດາຍ
- ອວນຄົບໜີ້ນມາກິນ
- ຍິງດອນນີ້ໜີໄປຕາຍດອນອື່ນ ( ອ. ບຸນຍົກ ແສນສຸນທອນ )
- ປາແດກຂີ້ລ້າຂອງເກົ່າເລີຍເໜີດ

* <u>ອີກແບວໜຶ່ງ</u>

- ເຫລັກໜຽງ
- ເຫລັກບ່ອງ
- ປອງແຍ່ງໃສ່ຊຳຄໍ
- ສອງມືຍໍໃສ່ກະໂພກ
- ເຫລັກອັນນີ້ກຶກໂສກອີຫລີ
- ເຫລັກຍາວຣີຍິງສັດຕາຍຜ່ຣ້ອຍ

* **<u>ຄຳໂສກອູ່</u>**

- ຕາອູ່
- ຕາແອງ
- ຕາແມງແຄງໄຫ້ຮ່ຳ
- ຕາແສນສ່ຳນອນສະບາຍ

* **ຄຳໂສກຄົກ**

- ຄົກຕຳຢູ່
- ຄູ່ຕຳກິນ
- ມີສິນຍອມເຂົ້າ
- ເປັນເຈົ້າເພິ່ນລືຊາ

* **ຄຳໂສກໄມ້ຄານ**

- ໄມ້ຄານ
- ໄມ້ແຄນ
- ຍາກແຄ້ນ
- ມັ່ງມີ

* **ຄຳໂສກແຫ**

- ແຂແຫ
- ແຂປາ
- ມາເປົ່າ
- ເນົ່າຊານ
- ຄານຫັກ
- ຜັກເຫມືອດ
- ເລືອດຕິດ
- ຈິດປິດຈີ່ປີ່
- ບີ່ຫົວ

* **ຄຳໂສກແຫແບບຫນຶ່ງອີກ**

- ແຂແຫ
- ແຂປາ
- ມາເປົ່າ
- ເນົ່າຊານ
- ຄານຫັກ
- ຜັກເຫມືອດ
- ເລືອດແດງ
- ແກງສົ້ມ
- ຕົ້ມຫົວ
- ແມ່ຄົວແຕດຫຮົ້

( ອ. ບຸນຍົກ ແສນສຸນທອນ )

*** ຄຳໃສກເຮືອ**

- ຊີ້ກີ້ກຂາຍແພງ
- ກິນແຫນງເພາະຄວາມຄ້າ
- ຂີ້ອ້າເກີດເປັນໄທ
- ຫີນຜາໄຫລແລ່ນຕ້ອນ
- ກ້ອນຄຳແຫນ້ນໃສ່ກົງ
- ລົງຕາມຮູບໍ່ແຄ້ວ
- ໄປຮອດແລ້ວຍ່ອມມາດີ
- ເປັນເສດກີ່ຍອມພອຍໄຮ້
- ນອນຕື່ນໄດ້ກົງຄວາມ

*** ຄຳໃສກເສື່ອ ແລະ ອາສະໜາ**

- ສີມູນມານັ່ງເຮົ້າ
- ຜູ້ເຖົ້ານັ່ງທະລົງທຸກ
- ນອນສຸກກິນເຫົ້າຊິ່ວ
- ກົງເປົ້ງຮົ່ວເປັນຮູ
- ສາວມາຊູຊິງຮັກ
- ມັກປ່ວຍໄຂ້ເສຍດາຍ
- ມີຂອງຫລາຍເຫລືອບ່ອນໄວ້
- ຂີ້ໄຮ້ເກີດເປັນດີ

*** ຄຳໃສກຂ້າງຂຶ້ນ ແລະ ຂ້າງແຮມ ( ໂຄງຊ້າງແກ້ວ )**

| | |
|---|---|
| ຫນຶ່ງຄ່ຳ | ຊ້າງແກ້ວຂຶ້ນສູ່ໂຮງຄຳ |
| ສອງຄ່ຳ | ຜີຟັງທຳປ່າຊ້າ |
| ສາມຄ່ຳ | ລ້າງມືກ້າຄອງກິນ |
| ສີ່ຄ່ຳ | ປາຍຕີນຕົກຕາກແດດ |
| ຫ້າຄ່ຳ | ຜີແວດລ້ອມລະວັງເອົາ |
| ຫົກຄ່ຳ | ລົງສະເພົາໄປຄ້າ |
| ເຈັດຄ່ຳ | ເຄາະຢູ່ກ້າຄອງຕົບ |
| ແປດຄ່ຳ | ຄວາມກັງວົນມີມົ້ວ |
| ເກົ້າຄ່ຳ | ກົກສຽນພະຍາລາມ |

| | |
|---|---|
| ສິບຄ່ຳ | ຫາຄວາມງາມບໍ່ໄດ້ |
| ສິບເອັດຄ່ຳ | ຂີ້ໄຮ້ເກີດເປັນດີ |
| ສິບສອງຄ່ຳ | ຄວາມບໍ່ມີຈັກຢາດ |
| ສິບສາມຄ່ຳ | ໄຊຍະຜາບແພ້ຊີມພູ |
| ສິບສີ່ຄ່ຳ | ຝູງສັດຕູປອງຂ້າ |
| ສິບຫ້າຄ່ຳ | ກີກແມວາຍຫລວງ |

* <u>**ຄຳໂສກກອນເຮືອນ**</u>
- ຕ່ອນຄຳຟູ
- ກູລີ່ງຮ່ອມ
- ຮ່ອມກອງໄຮ້
- ຂີ້ໄຮ້ເກີດເປັນດີ
- ຫາມຜີລົງເຮືອນຊັກໃຊ້
- ໄດ້ນາງອ້ອຍອິ່ນມາເຮືອນ
- ມີເພື່ອນເງີນຄຳຢູ່ມາກ
- ປາກຮ້າຍຂູນແກງບອນ
- ບອນປາຍຕີນສ່ອງແດດ
- ຄະແລັດບໍ່ເປັນເຮືອນ

## * ໂຄງ 2 ໂຕເຜິ່ງ

| | | | |
|---|---|---|---|
| ຊິກມິກ | ( ຊ້າງ ) | ທິກກວຽນ | ( ງົວ ) |
| ຫຽນແອ່ນ | ( ຄຸດ ) | ແບ່ນໂຕ | ( ແມວ ) |
| ໂສພາບ | ( ລາຊະສີ ) | ບາບຟານ | ( ເສືອ ) |
| ຫານນ້ຳ | ( ນາກ ) | ຊ້ຳໂກນ | ( ຫມູ ) |

## * ໂຄງປູກຂອງຕາມວັນ

| | | |
|---|---|---|
| ທິດ | ເປັນຮາກເຫງົ້າ | ທົວດີ |
| ຈັນ | ເຄືອຍາວຣີ | ບໍ່ມົ້ວ |
| ຄານ | ເປັນຜົ້ວຫມາກ | ດົກຫນາ |
| ພຸດ | ມີມາລາ | ບໍ່ເສົ້າ |
| ພະຫັດ | ຫມາກແຕ່ເຄົ້າ | ເກິງປາຍ |
| ສຸກ | ເປືອກຫນາຫລາຍ | ສຸດຍິ່ງ |
| ເສົາ | ມີກ້ານກິ່ງ | ລຳງາມ |

## * ກອນຕົວເຜິ່ງ

ຄຸດກໍ່ເນົານັ່ງເບື້ອງ ທັນແຫ່ງບົວລະພາ
ອາຄະເນແມວ ຢູ່ເຜືອແຝງຝັ້ນ
ທັກຂິນກ້ຳ ລາຊະສີແຫ່ນແຫ່
ບັກເຄົ້າເມົ້າ ບັງເຝົ້າທໍລະດີ
ປັດສິເມ ນາກກັ້ຽວພັນດອນ
ພາຍັບກ້ຳ ໂຄຈອນຫມູຢູ່
ອຸດອນຊ້າງ ພາຍສານຊ້າງເກື່ອນ
ເລື່ອນໆ ງົວແມ່ງອງ ກິນຫຍ້າຝ່າຍອີສານ.

## * <u>ຄຳສັບບາລີ</u>

| | | |
|---|---|---|
| ກະເບື້ອງມຸງ | : | ສະທະນິດຖະກາ, ອິ. |
| ກ້ອນຫີນ | : | ສັກຂະລາ, ອິ. |
| ກຽງເຫລັກ (ມີພະທາຍເຫລັກ) | : | ອະຍະປານິກາ, ອິ. |
| ກຽງໄມ້ (ມີພະທາຍໄມ້) | : | ທາລຸປານິກາ, ອິ. |
| ກະແຈ | : | ກຸນຈິກາ, ອິ. |
| | : | ຕາລະ, ປ. |
| | : | ອະປາປຸລະນະ, ນປ. |
| | : | ອະວາປຸລະນະ, ນປ. |
| ແປງທາສີ | : | ຕຸລິກາ, ອິ. |
| ດິນຊາຍ | : | ວາລຸກາ, ອິ. |
| ຂັ້ນໄດ | : | ໂສປານະ, ປ.; ອາໂລຫະນະ, ນປ. |
| ບານປະຕູ | : | ທະວາລະພາຫາ, ອິ. |
| | | ປິດຖະສັງຄາຕະກະ, |
| | : | ທະວາລະກະວາຕະ, ນປ. |
| ບານປະຕູປ້ອງຢ້ຽມ | : | ວາຕະປານະກະວາຕະ, ນປ. |
| ບານພັບ | : | ທະວາລາວັດຕະກະ, ນປ. |
| ປູນຂາວ | : | ສຸທາ, ອິ. ເສຕະຈຸນນະ, ນປ. |
| ຊີມັງ | : | ກາລະຈຸນນະ, ນປ. |
| ສ້ວມຖ່າຍຫນັກ | : | ວັດຈະກຸຕິ, ອິ. |
| ສ້ວມຖ່າຍເບົາ | : | ປັດສາວະກຸຕິ, ອິ. |

| | | |
|---|---|---|
| ດິນຈີ່ | = | ຈະນະບົດກະກາ, ອິ. |
| ກະເບື້ອງ | = | ອິດກະກາ, ຄິນຊະກາ, ອິ. |
| ຂວານ | = | ຜະລະສຸ, ປ. |
| ຄົມ | = | ສັນທາສະ, ປ. |
| ຄ້ອນຕີ | = | ກູຕະ, ນປ.; ອະໂຍຄະນະ, ປ. |
| ມີດຕັດ | = | ກັດຕິລິກາ, ອິ.; ປິບຜະລະ, ສັດກະ, ນປ. |
| ຄ້ອນທັ່ງ | = | ອະທິກະລະນີ, ມຸດກີ, ອິ.; ອະຍະພູຕະ, ນປ. |
| ເຫລັກສະຫວ່ານ | = | ອາລາ, ອິ.; ສ່ຈິວິດຊະນະ, ນປ. |
| ສິ່ວ | = | ນິຂາທະນະ, ນປ. |
| ເຈ້ຍອະນາໄມ | = | ອະວະເລຂະນະປັນນະ, ນປ. |
| ວ້ຽວ | = | ເຂລະມັນລະກະ, ນປ. |
| ກ່ອງເຂັມ | = | ສູຈິຄະລະ, ນປ. |
| ກຸຕິ | = | ກຸຕິ, ອິ. |
| ຈອກແກ້ວ | = | ຜະລິກະພາຊະນະ, ນປ. |
| ຂາຕຽງ | = | ມັນຈາທາລະ |
| ເຕົ້ານ້ຳ ( ຄົນໂທ ) | = | ກະມັນຕະລຸ, ນປ. |
| ເຂັມ | = | ສູຈິ, ອິ. |
| ເຈດີ | = | ເຈຕິຍະ, ອາຍະຕະນະ, ນປ. |
| ຕີນບາດ | = | ປັດຕາທານະ, ນປ. |
| | = | ປັດຕາທາລະກະ, ປ. |
| ຕຽງ | = | ມັນຈະ, ມັນຈະກະ, ປ. |

| | | |
|---|---|---|
| ໄຕຈີວອນ | = | ຕິຈີວະລະ, ນປ. |
| ກົງບາດ | = | ປັດຕະກະວິກາ, ອິ. |
| ບ່ອນນອນ | = | ສະຍະນະ, ເສນະ, ນປ. |
| ທໍກອງ | = | ນັນທະເຜລິຄາລ, ນປ. |
| ບ່ອນຢູ່ບ່ອນອາໃສ | = | ອຸປັດສະຍະ, ປ. |
| | = | ເສນາສະນະ, ນປ. |
| ທໍທຳມາດ | = | ທຳມາສະນະ, ນປ. |
| | = | ທຳມະປັນລັງກະ, ປ. |
| ນ້ຳຝາດ | = | ກາສາວະ, ປ. ນປ. |
| ນ້ຳຍ້ອມ | = | ລະຊະນະ, ລະຊະນະຈຸນນະ, ນປ. |
| ບັນລັງ ( ຕັ່ງນັ່ງເທດ ) | = | ປັນລັງກະ, ປ. |
| ບິນດະບາດ | = | ປິນດະປາຕະ, ປ. |
| ບາດ | = | ປັດຕະ, ປ. |
| ສາຍແອວ ( ຜ້າມັດເອິກກໍ່ໄດ້ ) | = | ກາຍະພັນທະນະ, ນປ. |
| ຜ້າກອງນ້ຳ | = | ທຳມະກະລະກະ, ປ. |
| ຜ້າຄຸມ | = | ອຸດຕະລາສັງຄະ, ປ. |
| ຜ້າເຊັດໜ້າ | = | ມຸຂະປຸນສະນະ, ນປ. |
| ຜ້າເຊັດຕີນ | = | ປາທະປຸນສະນະ, ນປ. |
| ຜ້າປູນັ່ງ | = | ນິສີທະນະ, ນປ. |
| ຜ້າສະບົງ | = | ອັນຕະລະວາສະກະ, ປ. |
| ຜ້າສັງຄາ | = | ສັງຄາຕິ, ອິ. |

24/VII
ห้ามจำหน่าย

| | | |
|---|---|---|
| ຜ້າບ່ຮວ | = | ອັງສະຈີວະລະ, ນປ. |
| ຜ້າອາບນ້ຳຝົນ | = | ວັດສິກະສາຕິກາ, |
| | | ອຸທະກາສາຕິກາ, ອິ. |
| | = | ວັດສິກະວາຕະກະ, ປ. |
| ຝາບາດ | = | ປັດຕະປິທານະ, ນປ. |
| ວີ | = | ວິຊະນີ, ອິ. |
| ຜ້າຈຳນຳພັນສາ | = | ວັດສາວາສິກະຈີວະລານິ. ນປ. |
| ຜ້າມ່ານ ( ຜາກັ້ງ ) | = | ສານີ, ອິ. |
| ມີດ | = | ວາສີ, ອິ. |
| ມີດແຖ | = | ຂຸລະ, ປ. |
| ມີດຕັດເລັບ | = | ນະຂະເສທະນີ, ອິ. |
| ມຸ້ງ | = | ມະກະສາວະສະນະ, ນປ. |
| | = | ມະກະສະກຸຕິກາ, ມະກະສະກຸຕິ,ອິ. |
| ໄມ້ແມ່ແຄ່ | = | ອະຕະນີ, ອິ. |
| ໄມ້ແກ້ງ ( ໄມ້ປັດພື້ນ ) | = | ອະວະເລຂະນະກັດຖະ, ນປ. |
| ໄມ້ສີແຂ້ວ | = | ທັນຕະໂປນະ, ປ. |
| | = | ທັນຕະກັດຖະ, ນປ. |
| ຢາສີແຂ້ວ | = | ທັນຕະເພສັດຊະ, ນປ. |
| | = | ທັນໂຕສະຖະ, ນປ. |
| ກົ່ງພາຍ | = | ຖະວິກາ, ອິ. |
| ຈ້ອງ ( ຄັນຮົ່ມ ) | = | ສັດຕະ, ນປ. |

| | | |
|---|---|---|
| ເກີບ | = | ອຸປາຫະນະ, ນປ. |
| ວັດ | = | ວິຫາລະ, ອາລາມະ, ປ. |
| ສາຍບາດ | = | ອັງສະວັດທະກະ, ປ. |
| ຫມອນ | = | ພິມໂພຫະນະ, ອຸປະທານະ, ນປ. |
| ໂອລ້າງອຸດຈາລະ ຫລື ປັດສະວະ | = | ອະວະເລຂະນະປິກຸະລະ, ປ. |
| ໂຮງສັນເຂົ້າ ( ທໍແຈກ ) | = | ອາສະນະສາລາ,<br>ໂພຊະນະສາລາ, ອິ. |
| ຕູ້ຫນັງສື | = | ມັນຊຸສາ, ອິ. |
| ຈອກ | = | ນິລິດາ |
| ໂຮງໃສ່ນ້ຳ, ນ້ຳກ້ອກ | = | ປະປາ, ອິ. |
| ໂມງ | = | ນາລິກາ, ອິ. |
| ທຸງ | = | ທະຊະ, ປ. |
| ກະດານດຳ | = | ກາລະຜະລະກະ, ປ, ນປ. |
| ເຈ້ຍກະດາດ | = | ກາກະຈະປັນນະ, ນປ. |
| ເກົ້າອີ້ | = | ໂກດສະ, ນປ. |
| ເຂັມຫມຸດ | = | ປັນນະສູຈິ, ອິ. |
| ສໍດຳ | = | ອຳພະກະເລຂະນີ, ອິ. |
| ປາກກາ | = | ເລຂະນີມຸຂະ, ນປ. |
| ໂຕະ | = | ເລຂະນະຜະລະກະ, ປ. ນປ. |
| ໃບລານ | = | ຕາລະປັນນະ, ນປ. |
| ປາກກາ | = | ເລຂະນີ, ມະສິເລຂະນີ, ອິ. |

| | | |
|---|---|---|
| ປາກກາຊືມ | = | ບາລະເລຂະນີ, ອິ. |
| ໄມ້ບັນທັດ | = | ອຸຊຸເລຂະກະ, ອຸຊຸທນດະ, ປ. |
| ຢາງລຶບ | = | ປຸນສະນະນິຍາສະ, ປ. |
| | = | ປຸນນະປຸນສະນີ, ອິ. |
| ໂຮງພິມ | = | ມຸດທະນະຍັນຕາລະຍະ, ປ. |
| ເຫລັກຂີດວົງມົນ | = | ມັນດະລະກະລະນີ, ອິ. |
| ນ້ຳມຶກ | = | ເລຂະນະກະສະຕະ, ປ. |
| | = | ເລຂະໂນທະກະ, ນປ. |
| ນ້ຳມຶກໂລນຮວ | = | ມຸດທາມະສີ, ນປ. |
| ຫໍສະໝຸດ | = | ໂປດກະກາລະຍະ, ປ. |
| ຫ້ອງຂຽນຫນັງສື | = | ເລຂະນະຄັບພາ, ປ. |
| ນ້ຳສ້າງ | = | ວາລຸທະກະ, ນປ. |
| ຄ້ອງ | = | ຄັນດິກະ, ນປ. |
| ລະຄັງ | = | ຄັນດີ, ອິ.; ຄັນຕາ, ຄັນຕີ, ອິ. |
| ສິ່ງ | = | ຄະນະ, ປ. |
| ກອງສອງຫນ້າ | = | ມຸທິງຄະ, ມຸລະຊະ, ປ. |
| ແກ, ປີ່, ຂຸ່ຍ | = | ສຸລິລະ, ນປ. |
| ກອງນ້ອຍສອງຫນ້າ | = | ວິດຕະ, ນປ. |
| ກອງໂທນນ້ອຍ | = | ອາລິງຄະຍະ, ປ. ນປ.; ອັງກະຍະ, ປ. |
| ພິນ | = | ວັນລະກີ, ວີນາ, ອິ. |
| ລະຄັງນ້ອຍ | = | ຂຸດທະກະຄັນຕາ, ອິ. |

ລະຄັງໃຫຍ່ = ມະຫາຄັນຕາ, ອິ.

ຫອຍສັງ = ສັງຂະ, ປ.

ກອງຫາງ = ອາຕະຕະ, ນປ.

ໂປງລາງ = ອາລຳພະລະ, ປ.

ບ້າສ້າງ = ວາລຸທະກະ, ນປ.; ອຸທະປານ, ປານະກູປະ, ປ.

ເກົ້າອີ້ນວມ = ຊານລົງ = ອາສັນທິ, ນປ.

ຕຽງ = ມັນຈະ, ນປ.

ຕັ່ງ = ປີກະ, ອາສະນະ, ນປ. ປີກິກະ,ອິ.

ຕຽງຫວາຍ = ວິທະລະມັນຈະກະ, ປ.

ກ້ວຍ = ສູປະທາລະ, ມັນລະກະ, ປ.

ຊານ = ມັນລະກະ, ສະລາວະ, ປ.

ຊານລົງ = ຜີສີ, ນປ.

ຜາສາດເຜີ້ງ = ມະທຸປຸບຜັງປາສາທະ, ນປ.

ຕົ້ນກາລະພຶກ = ກັບປາລຸກຂະ, ນປ.

## * ເອກະສານອ້າງອີງ


1. ປະເພນີບູຮານ ພາກ 1 ຂອງກົມວັນນະຄະດີ ພິມເທື່ອທີ 4 ວຽງຈັນ ວັນທີ 1 ທັນວາ ພ.ສ. 2512
2. ຄຳຜູກແຂນ, ຄຳສູດຂວັນເດັກນ້ອຍ ຄຳສູດຂວັນບ່າວສາວ ຄຳສູດຂວັນທຳມະດາ, ຄຳສູດຂວັນນາກ, ຄຳສູດຂວັນນ້ອຍ ກ່ອນກິນດອງ ແລະ ຄຳເຊີນຂວັນ ເຊິ່ງໄດ້ຈາກ ທ່ານມະຫາ ສີບູ່ ສີຫາລາດ ( ບໍ່ຮູ້ວ່າຜູ້ໃດແຕ່ງ )
3. ວັນນະຄະດີລາວ ເພື່ອການສຶກສາ ລິດຈະນາໂດຍ ມະຫາ ສີລາ ວີຣະວົງ ກົມວັນນະຄະດີ ວຽງຈັນ ພຸດທະສັກກະລາດ 2503.
4. ປະເພນີບູຮານໄທອີສານ ໂດຍມະຫາປີຊາ ປະລິນຍາໂນ ( ບໍ່ຮູ້ວ່າພິມປີໃດ ) ( ມີຄຳໂສກເສື່ອ ແລະ ອາດສະຫນາ ເປັນຕົວໄທ ແຕ່ສຳນວນລາວ )
5. ປື້ມຄຳກອນ ພື້ນເມືອງລາວ ພິມປີ 1990 ຂອງສະຖາບັນຄົ້ນຄວ້າ ວິທະຍາສາດສັງຄົມ.
6. ໄວຍາກອນ ບາລີ ຂອງທ່ານມະຫາ ສີລາ ວີຣະວົງ ພິມປີ ພ.ສ. 2482
7. ວັດຈະນານຸກົມພາສາລາວ ຂອງກະຊວງສຶກສາທິການ ພິມເທື່ອ ທີ 2 ພ.ສ. 2505 ຂອງທ່ານ ມະຫາ ສີລາ ວີຣະວົງ.
8. ສັບຫມວດໄທ-ບາລີ ຮຽບໂຮມໂດຍ ພະມະຫາພິມມາ ປັນຍາທີໂປ ປ.ທ.9 ( ເປັນພາສາໄທ )

9. ໄວຍາກອນພາສາລາວ ຂອງພະແນກສຶກສາສູນກາງ ຂອງທ່ານ ພູມີ ວົງວິຈິດ ( ຫລັກການແຕ່ງກອນຮ່າຍ ສຳລັບສູ່ຂວັນ ແລະ ກອນໂຄງ )

10. ຮີບໂຮມຈາກການບອກເລົ່າ (ປາກເປົ່າ) ຂອງຜູ້ເຖົ້າຜູ້ແກ່ ອີກຫລາຍທ່ານ.

ວຽງຈັນ, ວັນທີ 15-10-1990



ຕູ້ຄຳພີໃບລານ ທີ່ບູຮານນຳໃຊ້ເປັນບ່ອນເກັບຮັກສາເອກະສານໃບລານ
ເຫັນໄດ້ໃນທຸກໆພາກຂອງປະເທດລາວ

*ຕໍ່ຈາກໜ້າປົກຫລັງ*

* **ເຂົ້າຮັບວຽກລັດຖະການ :**

1978 : ພ/ນ ຊັ້ນກາງຫໍສະໝຸດພິພິທະພັນ ກ/ຊ ສຶກສາ

1979-80 : ສຶກສາຕໍ່ທີ່ ຣ/ຮ ສ້າງຄູດົງໂດກ ຂະແໜງພາສາອັງກິດ (ຮຽນບຳລຸງ) ກັບມາເຮັດວຽກຕໍ່

1983-89 : ເຮັດວຽກສູນຫ້ອງສະໝຸດວິທະຍາສາດ-ເຕັກນິກ (ນາໄຮດຽວ) ສຳນັກງານ ຄະນະກຳມະການວິທະຍາສາດເຕັກນິກ.

1990-1997 : ບັນນາຮັກ ຫໍສະໝຸດແຫ່ງຊາດ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

* **ເຂົ້າຮ່ວມວຽກ :** ໂຄງການປົກປັກຮັກສາໜັງສືໃບລານລາວ

1991 : ໄປຝຶກງານການຂຶ້ນບັນຊີ ແລະ ຖ່າຍໄມໂຄຼຟິມ ທີ່ຊຽງໃໝ່ ປະເທດໄທ (2 ເດືອນ) ສຳຫລວດ ແລະ ຂຶ້ນບັນຊີ ນຳທີມງານລົງສຳຫລວດນັບແຕ່ປີ 1991 ເຖິງປັດຈຸບັນ.

1996-97 : ເປັນຮອງ ຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ ( ການຮ່ວມມື ລາວ-ເຢຍຣະມັນ ).

- ເປັນຮອງອຳນວຍການຫໍສະໝຸດແຫ່ງຊາດ.

* **ຄະຕິພົດ :** ສຶກສາດີ ມີສິລະປະວິທະຍາ ຕັ້ງໜ້າປະຕິບັດວຽກງານດ້ວຍຄວາມຊື່ສັດ ເຮັດໃຫ້ຊີວິດຊາວນາ ກາຍມາເປັນຄົນສຳຄັນໃນສັງຄົມໄດ້.



# ຊີວະປະຫວັດຫຍໍ້

ຂອງຜູ້ຮຽບຮຽງ

***ມະຫາບຸນເລີດ ທຳມະຈັກ***

* **ເກີດເມື່ອ** ວັນທີ 2/6/1942 ທີ່ບ້ານເປືອຍຂາວ ຕາແສງເປືອຍຂາວ ເມືອງສອງຄອນ ແຂວງສະຫວັນນະເຂດ.

* **ຊົນຊັ້ນ :** ຊາວນາປານກາງ ລູກຊາຍດຽວຂອງພໍ່ຈານລຸນ ແລະ ແມ່ບຸນແຕ່ງ.

* **ເຂົ້າບວດ ແລະ ສຶກສາ :**

1958 : ເປັນສາມະເນນຮຽນປະກົມປຣິຍັດຕິທຳ ທີ່ແຂວງບໍລິຄັນ

1964 : ຈົບຊັ້ນປະໂຍກ 4 ທີ່ແຂວງບໍລິຄັນ (ປາກຊັນ)

1968 : ຈົບຊັ້ນປະໂຍກ 6 ທີ່ແຂວງຫລວງພະບາງ

1973 : ຈົບສະກາບັນພຸທສາດ (ອົງຕື້) ວຽງຈັນ (BAC)

1977 : ຈົບຊັ້ນປະຣິນຍາໂທ ສາຂາປວັດສາດບູຮານຄະດີ ແລະ ວັດທະນະທຳອາຊີ (MA) ທີ່ປະເທດອິນເດັຽ.